# <u>ຄະນະຜູ້ຈັດທຳ ບົດຮຽນພຣະຄັມພີພາສາລາວ</u>

Copyright © 2004 by BAPTISTWAY PRESS®.
ສງວນລິກຂະສິດ

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປື້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ, 2004

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Coordinator, Church Health and Growth Section: H. Lynn Eckeberger
Director, Bible Study/Discipleship Center: Dennis Parrott
Publishing consultant: Ross West, Positive Difference Communications

Language Materials Team

Bible Study Writer for Lessons 1-3
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lessons 1-3
Phaisane Somsith, Grace Baptist Church, Dallas, Texas

Bible Study Writer for Lessons 4-6
Bounheng Phongpraphan, First Lao Baptist Church, Amarillo, Texas
Editor for Lessons 4-6
Phaisane Somsith, Grace Baptist Church, Dallas, Texas

Bible Study Writer for Lessons 7-10, Easter Lesson
Sidney Kahn, Saginaw Community Church, Fort Worth, Texas
Editor for Lessons 7-10, Easter Lesson
Phaisane Somsith, Grace Baptist Church, Dallas, Texas

Bible Study Writer for Lessons 11-13
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lessons 11-13
Phaisane Somsith, Grace Baptist Church, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

# ບົດຮຽນທີ 1
# ເວລາມີຄວາມທົນທຸກທໍຣະມານ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** 2 ໂກຣິນໂທ 1:1-11
**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** 2 ໂກຣິນໂທ 1:1-11
**ຈຸດສຳຄັນຂອງບົດຮຽນນີ້:** ປະສົບການຄວາມທຸກທໍຣະມານ ແມ່ນທາງເຮັດໃຫ້ພວກເຮົາລະນຶກເຖິງຄວາມສັດຊື່ ທ່ຽງທັມຂອງພຣະເຈົ້າ ແລະກ້າວເຂົ້າສູ່ການຮັບໃຊ້ ໃນການຊ່ວຍເຫລືອຜູ້ອື່ນ.
**ຄຳຖາມເພື່ອສຳຣວດ:** ເວລາຄວາມຫຍຸ້ງຍາກມາປະເຊີນຕໍ່ຊີວິດ, ພວກເຮົາຈະເຮັດຢ່າງໃດ?
**ຈຸດປະສົງຂອງບົດຮຽນ:** ເພື່ອຈະສລູບວ່າໂປໂລ ພົບປະສົບກັບຄວາມທຸກໂສກ ທໍຣະມານ ແລະ ຈະໜູນໃຊ້ໃນຊີວິດຢ່າງໃດ?

## ຄຳນຳ

ຄວາມສະຫງົບສົນເທ້ຂອງຄຳສອນ ໄດ້ໂຜ່ຂຶ້ນມາໃນໜ້າຈໍຄອມພີວເຕີ້ຂອງຂ້າພະເຈົ້າ ມີຂໍ້ຄວາມວ່າ "ແມ່, ເຈົ້າຄິດວ່າ ການສເລີມສລອງວັນແມ່ປີນີ້ ມີຄວາມໝາຍບໍ່? ຈັ່ງໃດກໍຢ່າເທາະ ຂອບພຣະຄຸນທີ່ໄດ້ຮັບ 100 ໂດລາແລ້ວ" ບໍ່ຮູ້ວ່າ ແມ່ນໃຜເປັນຜູ້ສົ່ງ ອີແມວ ມາຫາ, ແລະແມ່ນເຂົາຕັ້ງໃຈຈະເຮັດຫຍັງແທ້. ນີ້ແມ່ນ ການສົ່ງອອກໂດຍບໍ່ຖືກເປົ້າໝາຍ ແລະຄວາມເວົ້າກໍສັບສົນ.

ຕາມທັມນຽມການປະຕິບັດໃນສມັຍຂອງໂປໂລແລ້ວ ແມ່ນບໍ່ຄວນຈະໃຫ້ມີການຜິດພາດເລີຍ. ນານມາແລ້ວ ທີ່ຈົດໝາຍໄດ້ບອກເຖິງມາຕະຖານ ແລະມາຕະຖານນັ້ນກໍຍັງມີມາເຖິງສມັຍນີ້ດ້ວຍ. ຄຳ ຄຳນັບຮັບຕ້ອນຂອງຜູ້ຂຽນນີ້ແມ່ນການເຮັດທີ່ມີຈຸດປະສົງມີເປົ້າໝາຍ. ໂປໂລໄດ້ຂຽນຈົດໝາຍສະບັບນີ້ ໄປເຖິງພີ່ນ້ອງຊາວເມືອງໂກຣິນໂທ.

ວັນນີ້ພວກເຮົາຈະໄດ້ມາສຶກສາ ຈົດໝາຍຂອງທ່ານອາຈານໂປໂລ ທີ່ລາວໄດ້ຂຽນໄປຕັກເຕືອນອັຄສາວົກຂອງລາວ ແລະຄຣິສຕຽນທັງຫລາຍ.

## ຄຳສເນີ ໃນ 2 ໂກຣິນໂທ

ຜູ້ຊຽວຊານທາງດ້ານພຣະຄັມພີທັງຫລາຍໄດ້ຕົກລົງເຫັນດີເຫັນພ້ອມກັບຈົດໝາຍສ່ວນຕົວຂອງໂປໂລ. ຈົດໝາຍນີ້ສ່ວນຫລາຍແລ້ວກໍແມ່ນສ່ວນໃຫຍ່ ມັກຈະເປັນຈົດໝາຍເຣື່ອງສ່ວນຕົວຂອງລາວເອງ. ລາວໄດ້ເຮັດໃຫ້ປາກົດເຫັນແດ່ເລັກນ້ອຍກ່ຽວກັບສາສນາສາດ ແລະການປ່າວປະກາດ. ລາວພະຍາຍາມບໍ່ຢາກເວົ້າ ແຕ່ວ່າລາວຢາກໃຫ້ຜູ້ທີ່ອ່ານຈົດໝາຍຂອງລາວເຂົ້າໃຈ ແລະຖ້ອຍຄຳຂອງລາວກໍຈະເປັນທີ່ຊ່ວຍໃຫ້ພວກເຮົາເຂົ້າໃຈໃນຈົດໝາຍນີ້ ເຖິງປານນັ້ນພວກເຮົາກໍຍັງບໍ່ເຂົ້າໃຈໄດ້ດີເທົ່າທີ່ຄວນ.

ໂກຣິນໂທເປັນເມືອງຜ່ານຂອງຊົນຕ່າງຊາດ: ເປັນເມືອງສູນກາງການຄ້າທີ່ໂດ່ງດັງຂອງປະເທດກຣີກ, ເປັນຫົນທາງສົ່ງຂົນລະຫວ່າງ ອາດຣິອາຕິກ (Adriatic) ແລະ ທະເລເອຊຽນ (Aegean Sea) ການແລກ

ປ່ຽນຫມູນວຽນໄປມາຈາກປະເທດອີຢິບ, ຈາກເອເຊັຍນ້ອຍ, ຈາກຊີເຣັຽ, ແລະຈາກອີຕາລີ ດັ່ງນັ້ນຈຶ່ງມີຜູ້ທີ່ ມີຊື່ສຽງທາງດ້ານການເມືອງ, ດ້ານສາສນາ ແລະຜູ້ທີ່ມີອິດທິພົນໃນດ້ານອື່ນໆອີກ. ປະຊາຊົນໃນເມືອງນັ້ນສ່ວນຫລາຍແລ້ວເປັນຄົນຮັ່ງມີ.

ວິຫານ ອາໂຟຣດິດ ຫລືວ່າ ເທພີວີນັສ ໃນພາສາກຣີກ ຫລືວ່າວິຫານເທພທິດາແຫ່ງຄວາມຮັກ ກໍຢູ່ໃນເມືອງໂກຣິນໂທນີ້ເຫມືອນກັນ. ອິດທິພົນຂອງສາສນານີ້ແມ່ນແຜ່ກະຈາຍໄປທົ່ວໂລກ, ເປັນສາສນາທີ່ຖືຄວາມງາມເປັນໃຫຍ່.

ໂປໂລມາເຖິງເມືອງນີ້ຄັ້ງທີສອງ ແມ່ນປະມານປີ ຄ ສ 50 (ກຈ 18:1). ລາວໄດ້ສ້າງສາວົກຫລາຍຄົນ ແລະກໍໄດ້ສ້າງໂບດໄວ້. ລາວໃຊ້ເວລາຢູ່ທີ່ນັ້ນເປັນເວລາ 18 ເດືອນ (ກຈ 18:11) ກ່ອນຈະກັບສູ່ອັນຕີໂອກ ໃນຊີເຣັຽ ບ່ອນທີ່ລາວສິ້ນສຸດການເດີນທາງຂອງລາວ. ຕລອດ ປີເຄິ່ງທີ່ໂປໂລຢູ່ໃນເມືອງໂກຣິນໂທນີ້ ລາວໄດ້ສິດສອນຜູ້ທີ່ເຊື່ອໃຫມ່. ບາງທີໂປໂລ ກໍເລີ້ມສ້າງໂບດຢູ່ນອກພຣະວິຫານ ເພາະພວກນີ້ເມື່ອມາຮັບເຊື່ອແລ້ວກໍຢາກເຫັນພຣະວິນຍານ, ຢາກເຫັນການກະທຳດ້ວຍໃຈຈິງ, ຢາກເຫັນຮັກແທ້. ໂປໂລເຫັນວ່າເມື່ອສ້າງໂບດຂຶ້ນມາແລ້ວກໍຄວນຈະມີຄວາມຮັບຜິດຊອບ ແລະນຳພາພວກເຂົາໃຫ້ເຕີບໂຕຂຶ້ນ. ນີ້ແມ່ນການກະທຳຂອງລາວໃນຈົດຫມາຍສະບັບນີ້.

**<u>ຄຳທັກທາຍ (1:1-3)</u>**

ໃນການເລີ້ມຕົ້ນນັ້ນ, ໂປໂລກໍສເນີຕົວລາວເອງວ່າເປັນອັຄສາວົກ, ລາວສເນີຊື່ຜູ້ທີ່ຮ່ວມງານກັບລາວ ແລະຜູ້ອື່ນໆດ້ວຍ. ກ່ອນຫນ້ານັ້ນ ກໍແມ່ນຕີໂມທຽວ "ຊຶ່ງເປັນລູກຮັກທາງຄວາມເຊື່ອ" (1 ຕີໂມທຽວ 1:2) ມີຫລາຍກຸ່ມເມື່ອເຫັນໂປໂລໄປປ່າວປະກາດກໍບໍ່ຍອມຮັບ ບາງກຸ່ມກໍວາງຄຳຖາມວ່າຖືອຳນາດມາຈາກໃສ, ຖ້າໄດ້ມາຈາກພຣະເຢຊູ, ຢູ່ໃສຫນັງສືທີ່ພຣະເຢຊູມອບຫມາຍໃຫ້.

ອີກອັນນຶ່ງ ໂປໂລຄິດວ່າຕົວເອງໄດ້ຖືກເຈີມມາແລ້ວຈາກພຣະເຈົ້າຜູ້ຊຶ່ງຄືນພຣະຊົນຄືພຣະເຢຊູທີ່ທ່ານໄດ້ພົບໃນເວລາເດີນທາງໄປດາມາເຊ. (ກຈ. :1-6) ແລະລາວກໍຍັງໄດ້ເຫັນນິມິດຫມາຍອີກ (ກຈ. 18:9-11) ສິ່ງທີ່ທ່ານປະສົບຜ່ານມາກໍສາມາດປຽບໄດ້ໃນການຊົງເອີ້ນເຫມືອນກັບສາວົກຄົນອື່ນໆ. ລາວໄດ້ຖືກເອີ້ນອອກມາໃຫ້ເປັນສາວົກ, ໃຫ້ມາທົນທຸກທໍຣະມານເພື່ອພຣະຄຣິດ. ໂດຍເຈຕນາແລ້ວ, ລາວຖືກເອີ້ນຢ່າງຈະແຈ້ງໂດຍພຣະເຢຊູຄຣິດແລະພຣະບິດາ. (ຄຕ 1:1) ໂປໂລເປັນຄົນເວົ້າທີ່ມີຄົນຄາຍ ເຫັນໄດ້ຕອນລາວກ່າວວ່າ ຂ້າພະເຈົ້າບໍ່ໄດ້ຖືກແຕ່ງຕັ້ງດ້ວຍມະນຸດຄົນໃດ ແຕ່ລາວຈະຮ່ວມທຸກທໍຣະມານຮ່ວມກັບຄຣິສຕຽນ.

ໃນຂໍ້ທີ 3 ຕໍ່ມາໂປໂລໄດ້ກ່າວເຖິງພຣະຄຸນທີ່ມາຈາກພຣະເຈົ້າ. ຄຳວ່າພຣະຄຸນນີ້ ບໍ່ມີໃຜທີ່ຈະສາມາດໄດ້ຮັບ ເພາະເຮົາເປັນຄົນບາບແຕ່ພຣະເຈົ້າກໍຍັງພໍພຣະທັຍມອບໃຫ້ກັບມະນຸດເປັນຂອງຟຣີ. ພຣະຄຸນແມ່ນຂອງຂວັນສຳລັບຄົນທີ່ຫມົດຫວັງ. ພຣະຄຸນ ພວກເຮົາບໍ່ສາມາດຈະຮັບໄດ້ຈາກມະນຸດ. ມັນເປັນຂອງຂວັນສຳລັບຜູ້ທີ່ຮັບເອົາ. ຜູ້ທີ່ຮັບເອົານັ້ນຕ້ອງແມ່ນຜູ້ທີ່ປ່ຽນແປງຊີວິດໃຫມ່, ມີຄວາມສັມພັນກັບພຣະເຈົ້າເສັຽກ່ອນຈຶ່ງຈະສາມາດຮັບເອົາພຣະຄຸນນີ້ໄດ້.

ຄຳຕໍ່ມາກໍແມ່ນສັນຕິສຸກ. ສັນຕິສຸກແລະພຣະຄຸນກໍເຫມືອນກັນ ທ່ານຈະຮັບຈາກໃຜຜູ້ນຶ່ງບໍ່ໄດ້ເປັນເດັດຂາດ ນອກຈາກອົງພຣະເຢຊູຄຣິດເທົ່ານັ້ນ. ພຣະເຢຊູຊົງກ່າວວ່າ: "ເຮົາມອບຄວາມສງົບສຸກ(ສັນຕິສຸກ) ໄວ້ກັບ

ທ່ານທັງຫລາຍ ຄວາມສງົບສຸກຂອງເຮົາ ເຮົາປະທານໃຫ້ແກ່ທ່ານທັງຫລາຍ ຝ່າຍເຮົາໃຫ້ແກ່ພວກທ່ານບໍ່ເຫມືອນໂລກໃຫ້ນັ້ນ ຢ່າໃຫ້ໃຈຂອງພວກທ່ານວຸ້ນວາຍໄປ ແລະຢ່າຊູ້ຢ້ານ" ຢຮ 14:27. ສັນຕິສຸກຈະເຂົ້າມາເມື່ອທ່ານຫາກທໍາຕາມພຣະປະສົງຂອງພຣະເຈົ້າ. ຖ້າທ່ານຫາກເຊື່ອຟັງຄໍາຂອງພຣະເຈົ້າ, ພຣະເຈົ້າຈະເປັນຜູ້ຄວບຄຸມເອງ.

ຄໍາໂມທະນາຂອບພຣະຄຸນທັງຫມົດທີ່ມາລວມກັນແລ້ວແມ່ນ ໂປໂລຂຽນໄວ້ໃນ ກທ. 1:3 "ຈົ່ງສັຣເສີນພຣະເຈົ້າຄືພຣະບິດາຂອງພຣະເຢຊູຄຣິດເຈົ້າຂອງເຮົາທັງຫລາຍ ຄືພຣະບິດາຜູ້ຊົງຄວາມເມດຕາ ແລະພຣະເຈົ້າຜູ້ເລົ້າໂລມໃຈທຸກຢ່າງ" 2 ກທ 1:3

## ການທຸກລໍາບາກແລະການເລົ້າໂລມໃຈ 1:4-10

ການທ້ອນທອມຊີວິດກໍຄືການບໍ່ລະໂອກາດໃຫ້ມັນເສັຽຫາຍແມ່ນແຕ່ສ້ຽວນາທີດຽວ, ບໍ່ວ່າຈະເປັນຄວາມໂສກເສົ້າກໍຕາມ. ຄວາມເລົ້າໂລມຂອງພຣະເຈົ້າຈະສາມາດທີ່ຈະຊົດຊ່ວຍໄດ້ທຸກງຄົນ. ບາງທີອາດຈະບໍ່ປັດຈຸບັນທັນດ່ວນ ແຕ່ພຣະອົງກໍຈະຊ່ວຍຕາມເວລາຂອງພຣະອົງ, ຄວາມໂສກເສົ້າອາດຈະກັບກາຍມາເປັນພຣະພອນກໍເປັນໄດ້. ໂປໂລໄດ້ຍົກເອົາຄວາມທຸກທໍຣະມານ ແລະຄວາມໂສກເສົ້າໃນການເປັນຜູ້ອາລັກຂາ. ໃນຄວາມຄິດຂອງລາວ, ຄວາມຫຍຸ້ງຍາກແລະຄວາມສຸກສະບາຍປຽບເຫມືອນກັບເງິນຫລຽນ. ເບື້ອງນຶ່ງເຈັບປວດ ແລະອີກເບື້ອງນຶ່ງແມ່ນລາງວັນ. ເບື້ອງນຶ່ງຫນ້າຢ້ານ ແລະອີກເບື້ອງນຶ່ງຫນ້າຍິນດີ. ເບື້ອງນຶ່ງທົນທຸກ ແລະອີກເບື້ອງນຶ່ງກໍປ່າວປະກາດ. ຖ້າເຮົາຫາກມີປະສົບການເຫມືອນໂປໂລກໍຈະເປັນການດີ ເພາະວ່າຈະຊ່ວຍໃຫ້ເຮົາມີພລັງ, ມີຄວາມຫວັງ, ມີຄວາມກ້າຫານແລະຫລັບເຂົ້າໃກ້ພຣະເຈົ້າທຸກງວັນ.

ໂປໂລໄດ້ຮັບຄວາມທຸກທໍລະມານ, ລາວມີຄວາມພໍໃຈເພາະລາວຍັງຫລຽວເຫັນລາງວັນຢູ່ທາງຫນ້າ. ລາວບໍ່ເຄີຍຄິດວ່າມັນເປັນໄປໂດຍບັງເອີນ, ຫລືວ່າມັນເປັນໂຊກຮ້າຍຂອງລາວ ແຕ່ລາວຊ້ຳພັດຄິດວ່າມັນເປັນສິ່ງນຶ່ງທີ່ເຮັດໃຫ້ລາວເຂັ້ມແຂງຂຶ້ນຝ່າຍຈິດວິນຍານ. ລາວຍັງຄິດອີກວ່າຍິ່ງລາວມີຄວາມທຸກທໍຣະມານປານໃດລາວຍິ່ງມີສ່ວນຮ່ວມກັບອົງພຣະເຢຊູຄຣິດຫລາຍສໍ່ານັ້ນ.

ສໍາລັບໂປໂລແລ້ວ, ຄວາມທຸກທໍຣະມານເປັນຜົນດີໃຫ້ກັບຕົວເອງຄືລາວຈະໄດ້ເຂັ້ມແຂງ ແລະ ຜົນດີໃຫ້ກັບຄຣິສຕະຈັກ ຄືລາວຈະໄດ້ເປັນຕົວຢ່າງໃຫ້ຫລາຍຄົນເຫັນ. ຢ່າງໃດກໍຕາມ ໂປໂລຖືກປົດປ່ອຍອອກຈາກການສັພທຸກໂດຍພຣະເຈົ້າ. ພວກເຮົາບໍ່ສາມາດຊາບໄດ້ວ່າພຣະເຈົ້າປົດປ່ອຍໂດຍວິທີໃດ, ແຕ່ພວກເຮົາກໍເຂົ້າໃຈວ່າແມ່ນແຜນການຂອງພຣະເຈົ້າ. ການອະທິຖານ ອ້ອນວອນ ກໍຍັງມີສ່ວນຮ່ວມໃນການປົດປ່ອຍຄັ້ງນີ້.ລາວຍັງເຊື່ອວ່າຊາວໂກຣິນໂທ ກໍໄດ້ມີສ່ວນຮ່ວມໃນເຫດການເຊັ່ນກັນ. ການຊ່ວຍອ້ອນວອນອະທິຖານແມ່ນເປັນພາກສ່ວນໃຫຍ່ໃນການນີ້.

## ຈົ່ງຮ່ວມກັນອ້ອນວອນອະທິຖານ (1:11)

ໂປໂລເປັນຜູ້ປ່າວປະກາດທີ່ບໍ່ລົດລະໃນການອະທິຖານ. ລາວເປັນຜູ້ສັດຊື່ໃນການອະທິຖານແລະກໍອະທິຖານເພື່ອໄກ່ເກັ່ຽໃຫ້ທຸກງຄົນ ແລະວຽກງານທຸກງຢ່າງ. (ຟປ 1:1-5; ກຊ 1:3)
ໂປໂລເປັນຜູ້ທີ່ເຊື່ອໃນພລັງອະທິຖານ (ຣມ 15:30-31; ຟປ 1:19; ກຊ 4:12)

ດັ່ງນັ້ນ ລາວຈຶ່ງຮຽກຮ້ອງໃຫ້ຜູ້ທີ່ເຊື່ອທັງຫລາຍໃຫ້ສືບຕໍ່ໃນການອະທິຖານເພື່ອລາວແລະຜູ້ທີ່ຮ່ວມງານດ້ວຍ. ເພາະຍິ່ງອະທິຖານຫລາຍທໍ່ໃດກໍຍິ່ງມີຄວາມຊື່ນຊົມຍິນດີໃນພຣະເຈົ້າ.

ແມ່ເຖົ້າຄົນນຶ່ງ ອາຍຸ 91 ປີ ໄດ້ອະທິຖານເພື່ອມິສຊັນນາຣີເປັນປະຈຳ. ລາວມີລາຍຊື່ປະມານ 150 ຄົນໃນ ບັນຊີຂອງລາວ. ການອະທິຖານຢ່າງບໍ່ຢຸດຢ່ອນຂອງລາວເປັນເວລາ 40 ກວ່າປີມາແລ້ວ, ແລະລາວກໍຍັງສືບຕໍ່ໄປ ພ້ອມທັງຂຽນຈົດໝາຍໄປໜູນໃຈເຂົາເຈົ້າດ້ວຍ. ປັດຈຸບັນແມ່ເຖົ້າກໍຍັງສົ່ງອີແມວໄປຫາເຂົາເຈົ້າຢ່າງບໍ່ລົດລະ. ຂ້າພະເຈົ້າເຂົ້າໃຈວ່າ ລາງວັນຂອງແມ່ເຖົ້າຄົນນີ້ຄົງຈະເປັນຂອງທີ່ດີແລະມີຄຸນຄ່າທີ່ສຸດຈາກພຣະເຈົ້າ.

<u>ໂປໂລສາມາດເປັນຕົວຢ່າງໃຫ້ແກ່ພວກເຮົາ</u>

ພວກເຮົາໄດ້ສຶກສາຫຍັງແດ່ຈາກໂປໂລ ເວລາລາວປະສົບກັບຄວາມທຸກທໍຣະມານ?
ພວກເຮົາສາມາດຈະເຣີນຂຶ້ນຝ່າຍຈິດວິນຍານດ້ວຍການທໍຣະມານ ເພື່ອຈະໄດ້ເລົ້າໂລມຜູ້ທີ່ມີຄວາມທົນທຸກທໍຣະມານ. ພວກເຮົາສາມາດເວົ້າໄດ້ວ່າພຣະເຈົ້າສະຖິດກັບພວກເຮົາທຸກເວລາ.

<u>ຄຳຖາມ</u>

1. ໂປໂລສະແດງຄວາມຮັກຂອງລາວຕໍ່ພີ່ນ້ອງຊາວໂກຣິນໂທຢ່າງໃດ?

2. ເປັນຫຍັງການປ່າວປະກາດຂອງໂປໂລຈຶ່ງແຕກຕ່າງຈາກສາວົກຄົນອື່ນໆ?

3. ເປັນຫຍັງຄຣິສຕຽນຈຶ່ງທຸກທໍຣະມານ?

4. ເປັນຫຍັງຄວາມທໍຣະມານຂອງຄຣິສຕຽນຈຶ່ງແຕກຕ່າງຈາກຄວາມທໍຣະມານຂອງຊາວໂລກ?

# ບົດຮຽນທີ 2
# ເມື່ອຄວາມສໍາພັນທັງກໍ່ທັມດາ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** 2 ໂກຣິນໂທ 1:12--2:11

**ຂໍ້ພຣະຄັມພີສໍາລັບເບື້ອງຫລັງ:** 2 ໂກຣິນໂທ 1:12--2:13

**ຈຸດສໍາຄັນຂອງບົດຮຽນນີ້:** ພວກເຮົາຄວນມີຄວາມຮັບຜິດຊອບໃນການກະທໍາຂອງຄຣິສຕຽນ ເມື່ອຄວາມສໍາພັນທາກມີການບໍ່ເປັນທັມດາ.

**ຄໍາຖາມເພື່ອສໍາຣວດ:** ຈະປະຕິບັດຢ່າງໃດເມື່ອຄວາມສໍາພັນກັບຄົນອື່ນທາກບໍ່ທັມດາ?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະໄດ້ຊັ່ງຊາຕີລາຄາວ່າຈະຮັກສາສາຍສໍາພັນຢ່າງໃດໃນເມື່ອຄວາມສໍາພັນທາກບໍ່ທັມດາ

## ຄໍານໍາ

ເປັນເວລາຫລາຍສິບປີຜ່ານມາ ອາບີແກວ ແວນ ບູເຣນ, ໄດ້ຖືກຂນານນາມວ່າ "Dear Abby," ລາວເປັນຜູ້ຈັດຕຽມຄໍາແນະນໍາໃຫ້ກັບຜູ້ທີ່ວຸນວົງສົງສັຍມາຕລອດເວລາ. ຫນ້າທີ່ຮັບຜິດຊອບຂອງລາວແມ່ນຊ່ວຍເຫລືອຜູ້ທີ່ຄຶດໂກງແລະຄວາມສໍາພັນຖືກຂາດສະບັ້ນລົງ. ຜູ້ອ່ານຈະມັກພົບພໍ້ຢູ່ເລື້ອຍໆໃນຄໍລັມຕ່າງໆ ຊຶ່ງເວົ້າເຖິງເຣື່ອງການແກ້ໄຂຂໍ້ຂັດແຍ້ງ.

ໃຜເປັນຜູ້ທີ່ຍືນຢັດ ຫລືຜູ້ທີ່ມີຂໍ້ຜິດພາດໃນຄວາມສໍາພັນຮ້າຍແຮງຫລາຍ? ຄົນຜູ້ນັ້ນຈະເຮັດຫຍັງ? ໂປໂລມີຄວາມຮັບຜິດຊອບໃນຄວາມສໍາພັນນີ້, ຊຶ່ງເຫັນໄດ້ໃນຄວາມທຸກທໍຣະມານຂອງລາວ ແລະລາວກໍຍັງຫາວິທີທີ່ຈະໃຫ້ຄວາມເລົ້າໂລມແກ່ພວກເຂົາ. ລາວມີປະສົບການມາແລ້ວກັບຄຣິສຕະຈັກເມືອງໂກຣິນໂທ, ຈຶ່ງໄດ້ຂຽນຈົດຫມາຍເຖິງສອງສະບັບດ້ວຍກັນ.

## ການໄດ້ຫນ້າບໍ່ແມ່ນການໂອ້ອວດຄຸຍໂມ້ (1:12-14)

ເປັນທີ່ຊັດເຈນທີ່ສຸດ ທີ່ໂປໂລມີຄວາມຊື່ນຊົມຍິນດີ ທີ່ຄຣິສຕະຈັກເມືອງໂກຣິນໂທໄດ້ອ້ອນວອນອະທິຖານເພື່ອລາວ (1:11), ລາວກ່າວປ້ອງກັນຕົວໂດຍກ່າວເຖິງຄຸນລັກສະນະຂອງລາວເອງ. ຄວາມຄິດຂອງລາວປອດໃສດີ ແລະການເຄື່ອນໄຫວຕ່າງໆກໍບໍຣິສຸດ. ໂປໂລໄດ້ຕໍ່ສູ້ໃນການປ່າວປະກາດໃນຫມູ່ພວກເຂົາ ໂດຍບໍ່ໃຫ້ມີການຕໍ່ວ່າຫລືການຕໍານິໃດໆທັງນັ້ນ. ຄວາມຕັ້ງໃຈຂອງລາວແມ່ນປອດໃສແລະມີຄວາມຮັກຢ່າງແທ້ຈິງ. ດັ່ງນັ້ນ, ການໂຈມຕີຫາເຣື່ອງໃສ່ລາວຈຶ່ງເປັນສິ່ງທີ່ບໍ່ເປັນຄວາມຈິງຈັກຢ່າງ.

ໃນສມັຍຂອງໂປໂລ ຖືເປັນຂອງທັມດາໃນການຂຽນຍົກຍ້ອງຊົມເຊີຍຕົວເອງ. ສໍາລັບພວກເຮົາແລ້ວ ເບິ່ງຄືວ່າຍ້ອງຕົວ ອວດຕົວໂພດ. ພວກເຮົາກໍຍັງຮູ້ອີກວ່າການຍົກຍ້ອງຕົວເອງແມ່ນຜິດຕໍ່ພຣະທັມຂອງພຣະເຈົ້າ ແຕ່ວ່າສໍາລັບໂປໂລແລ້ວແມ່ນລາວຢາກຈະຍົກໃຫ້ຊາວໂກຣິນໂທເຫັນວ່າການປະກາດຂອງລາວບໍ່ໄດ້ເປັນພິດເປັນພັຍໃຫ້ກັບຜູ້ໃດທັງສິ້ນ. ໂປໂລໃຊ້ຊີວິດແບບຕານຶ່ງແນມເບິ່ງປັດຈຸບັນ ແລະອີກຕານຶ່ງແມ່ນແນມເບິ່ງອະນາຄົດ (ຟປ 1:21) ລາວແນ່ໃຈວ່າທຸກໆຄົນຈະຕ້ອງໄດ້ປາກົດຕົວຕໍ່ບັນລັງພິພາກສາ

ຂອງອົງພຣະເຢຊູຄຣິດ ແລ້ວຄວາມລັບຕ່າງໆ ແລະການກະທຳຕ່າງໆກໍຈະຖືກເປີດເຜີຍອອກ. ລາວຍັງກ່າວຕໍ່ໄປອີກວ່າທັງຕົວລາວເອງແລະຊາວໂກຣິນໂທກໍຈະໄດ້ປາກົດທີ່ນັ້ນເໝືອນກັນ ຕາມພຣະປະສົງຂອງພຣະເຈົ້າ. ລາວບໍ່ຢາກໃຫ້ໃຜຜູ້ນຶ່ງຫລືຄຣິສຕະຈັກໃດຄຣິສຕະຈັກນຶ່ງໄດ້ຮັບການລົງໂທດ.

## ປ່ຽນແຜນຢ້ຽມຢາມ (1:15-2:4)

ໂປໂລພະຍາຍາມທີ່ຈະອະທິບາຍໃຫ້ຫລາຍຄົນເຂົ້າໃຈວ່າລາວຈະໄປໃສ, ຈະເຮັດຫຍັງ, ຈະໄປຢ້ຽມຢາມບ່ອນໃດ. ລາວກ່າວວ່າລາວຕັ້ງໃຈຈະໄປຢ້ຽມຢາມຄຣິສຕະຈັກ ຕາມເສັ້ນທາງໄປມາເກໂດເນັຽ ແລະຈະກັບມາແວ່ຢາມພວກເຂົາອີກເວລາກັບມາ (1:15-16) ຕາມທີ່ຈິງແລ້ວແມ່ນລາວມີແຜນກ່ອນແລ້ວທີ່ຈະໄປຢ້ຽມເມືອງໂກຣິນໂທບ່ອນດຽວ. (1ໂກຣິນໂທ 16:5) ໃນເວລາທີ່ລາວວາງແຜນນັ້ນ, ລາວສັນນິຖານວ່າ ການແຕກຮ້າວໃນຄຣິສຕະຈັກຄົງຈະຖືກປັບປຸງຂຶ້ນແລ້ວແລະທຸກຄົນຄົງຈະດີໃຈເມື່ອໄດ້ເຫັນລາວກັບມາ. ແຕ່ວ່າເຣື່ອງຕ່າງໆບໍ່ເປັນດັ່ງວ່າ, ລາວຈຶ່ງບໍ່ແນ່ໃຈວ່າພວກທີ່ຢູ່ທີ່ນັ້ນຈະພໍໃຈໝົດທຸກຄົນຫລືບໍ່.

ແຜນການເດີນທາງຂອງໂປໂລຫລັງຈາກໄປໂກຣິນໂທແລ້ວ ຍັງບໍ່ເປັນທີ່ຈະແຈ້ງເທື່ອ, ຢ່າງໃດກໍຕາມ ເຮົາຈຶ່ງເຫັນໄດ້ໃນ (2ໂກຣິນໂທ 1:23; 2:1) ວ່າຈະບໍ່ກັບມາເມືອງໂກຣິນໂທອີກ. ພວກເຂົາກໍຫາວ່າໂປໂລເປັນຄົນບໍ່ແນ່ນອນ. ບາງຄົນເປັນຄົນເວົ້າຫລາຍກ່າວໃສ່ຮ້າຍປ້າຍສີ ໂປໂລຫລາຍຢ່າງ. ເຂົາເວົ້າວ່າໂປໂລເປັນຄົນບໍ່ແນ່ນອນແລະຕໍ່ມາເຂົາກໍຫາວ່າລາວວາງແຜນການໂດຍບໍ່ອາສັຍພຣະວິນຍານບໍຣິສຸດ. ຂ້າພະເຈົ້າກໍຄິດບໍ່ອອກຄືກັນວ່າເປັນຫຍັງຄົນພວກນີ້ຈຶ່ງຈະໄປເປັນຄົນຄວບຄຸມຜູ້ປະກາດພຣະທັມຂອງພຣະເຈົ້າ. ຖ້າວ່າລາວເປັນຄົນທີ່ບໍ່ໜ້າເຊື່ອຖື, ການປະກາດກໍບໍ່ໜ້າເຊື່ອຖື, ຖ້າພຣະວິນຍານບໍ່ນຳພາລາວ, ຄຳສອນຂອງລາວກໍບໍ່ມີພຣະວິນຍານບໍຣິສຸດມັນຈະເປັນໄປໄດ້ບໍ່ ເພາະຊາວໂກຣິນໂທເມື່ອເຫັນລາວແລ້ວພວກເຂົາກໍເຊື່ອແລະກໍໄດ້ໃຫ້ຄວາມສຳຄັນໃນຄຳສອນຂອງລາວຫລາຍ.

ໂປໂລຍັງໄດ້ອະທິບາຍເຖິງຄວາມສັດຊື່ຂອງພຣະເຈົ້າ. ໂປໂລບໍ່ແມ່ນຄົນທີ່ໄດ້ຍິນແລ້ວຕາມໄປຊື່ໆ. ແຕ່ລາວຕິດຕາມໄປເພາະວ່າລາວໄດ້ເຫັນ. ລາວເປັນຄົນເອົາຈິງເອົາຈັງແທ້ໆ ບໍ່ວ່າລາວຈະເຮັດອັນໃດກໍຕາມ. ລາວເຫັນວ່າພຣະເຢຊູຄຣິດຊົງເປັນພື້ນຖານໃນການປ່າວປະກາດ, ລາວມີຄວາມໝັ້ນໃຈໃນຄຳພະຍານຂອງລາວ, ລາວໄດ້ສັນຍາຕໍ່ພຣະເຈົ້າວ່າລາວຈະເປັນພະຍານຝ່າຍພຣະອົງ. (1:23) ບໍ່ແມ່ນການເປັນພະຍານຊົ່ວຄາວຊົ່ວຄາວແຕ່ເປັນການປະກາດຢ່າງຖາວອນ. ຄວາມຊອບທັມຂອງພຣະເຈົ້າເປັນສິ່ງຖາວອນ, ພຣະອົງຊົງຊ່ວຍຄົນຂອງພຣະອົງໃນເວລາມີບັນຫາ. (ໂຢບ 16:19-21; ພສສ 89: 34-37)

## ໂປໂລຫລຽວເຫັນ 5 ວິທີທີ່ພຣະເຈົ້າທຳງານໃນການສາມັກຄີທັມ

### 1. ພຣະຄຣິດຊົງຊ່ວຍໃຫ້ມີຄວາມອົດທົນບໍ່ທໍ້ຖອຍ (1:21)

ພລັງເປັນສິ່ງນຶ່ງທີ່ເຮົາທັງຫລາຍເບິ່ງຂ້າມ, ຄຣິສຕຽນມີພລັງມາຈາກໃສ. ໂດຍພຣະເຢຊູພວກເຮົາຈຶ່ງມີພລັງຕໍ່ສູ້ກັບເຫດການຕ່າງໆໄດ້, ສາມາດສູ້ກັບການທົດລອງໄດ້, ແລະ ນຳພາຊີວິດມາເຖິງຈຸດໝາຍປາຍທາງໄດ້. ໂປໂລອະທິບາຍເຖິງຄວາມຍິ່ງໃຫຍ່ຂອງພຣະຄຣິດວ່າ: "ເຮົາສາມາດສູ້ກັບທຸກສິ່ງໄດ້ໂດຍພຣະອົງຜູ້ຊົງຊູກຳລັງເຮົາ." (ຟປ 4:13) ບາງເທື່ອພວກເຮົາຍັງຄິດວ່າຄວາມຕາຍເປັນສິ່ງທີ່ມີອຳນາດເໜືອກວ່າທຸກຢ່າງ. ແຕ່ພລັງຂອງພຣະເຈົ້າຊົງເໜືອກວ່ານັ້ນອີກ. ພລັງຂອງພຣະອົງສາມາດເຮັດໃຫ້ພຣະເຢຊູຟື້ນຈາກຕາຍໄດ້. ພລັງຂອງພຣະເຈົ້າເປັນພລັງທີ່ແປກປະຫລາດຫລາຍ. ໂປໂລແນະນຳຜູ້ທີ່ເຊື່ອທັງຫລາຍໃຫ້ມີ

ພລັງຕໍ່ສູ້ກັບການຫລອກລວງຕ່າງໆ ແລະໃຫ້ຈົດຈຳຄຳສອນຂອງລາວໃຫ້ດີໆ.

**2. ພວກເຂົາຖືກເຈີມ(ຖືກສະຖາປະນາ) ເພື່ອການຮັບໃຊ້ (1:21)**

ໃນພຣະຄັມພີ ການເຈີມແມ່ນສິ່ງສຳຄັນຫລາຍ, ເປັນໜ້າທີ່ວຽກງານສັງຄົມ, ເປັນໜ້າທີ່ວຽກງານທີ່ເຈົ້າເຮືອນຄວນກະທຳຕໍ່ແຂກ. (ລູກາ 7:46), ເປັນຢາວິເສດ ເພື່ອເຢົາຢາຄົນເຈັບໄຂ້ (ຢບ 5:14) ເປັນທີ່ຖືກຕ້ອງຕາມຮີດຄອງຂອງຄຣິສຕຽນ (1ຊມອ 10:1) ໃນພຣະຄັມພີເດີມ, ຜູ້ປະກາດພຣະທັມ ແລະກະສັດໄດ້ຖືກເຈີມດ້ວຍພິທີຮີຕອງອັນຕຽມພ້ອມ ເພື່ອຈະຮັບໃຊ້ໃນວຽກງານຂອງພຣະເຈົ້າ. ພິທີແມ່ນການສເນີຈຸດປະສົງຂອງພຣະເຈົ້າ ຄືແຍກອອກຈາກທຸກສິ່ງແລ້ວມາຮັບໃຊ້.

**3. ພຣະອົງຊົງປະທັບຕາໃສ່ພວກເຂົາ (1:22)**

ການປະທັບຕາເປັນຈຸດສຳຄັນ ແລະກໍເປັນຈຸດພິເສດ ສຳລັບປະເພນີຂອງຊາວຕະເວັນອອກ, ພວກເຂົາຕ້ອງການເອກສານທຸກຢ່າງ. ການກະທຳກໍປະຕິບັດໄປຕາມເອກສານຄືໝາຍກາວ່າຄົນນີ້ເປັນແພດ, ຄົນນີ້ເປັນຄຣູ, ຄົນນີ້ເປັນທະຫານ .... ແລ້ວແຕ່ຈະຖືກໂນ້ມໜ່ຽວໃຫ້ເປັນໄປຕາມສະພາບການ. ໂປໂລໄດ້ອະທິບາຍວ່າຊາວໂກຣິນໂທໄດ້ຖືກຕີກາໝາຍໄວ້ວ່າເປັນຄົນຂອງພຣະເຈົ້າ, ເປັນຄົນທີ່ພຣະວິນຍານບໍຣິສຸດເຈີມໄວ້.

**4. ພຣະເຈົ້າໄດ້ສົ່ງພຣະວິນຍານບໍຣິສຸດໃຫ້ມາຢູ່ໃນຫົວໃຈຂອງເຂົາ. (1:22)**

ໂລກນີ້ ເລີ້ມຕົ້ນຂື້ນມາໂດຍພຣະວິນຍານບໍຣິສຸດ, ແຕ່ຫລັງຈາກວັນເພັນເຕຄອສ ພຣະວິນຍານໄດ້ເຂົ້າມາສະຖິດຢູ່ໃນທຸກໆຄົນທີ່ເຊື່ອໃນພຣະເຢຊູ. (ກຈ 2:1-4)

**5. ການສະຖິດຂອງພຣະວິນຍານໃນຊີວິດພວກເຂົາ ແມ່ນການຢັ້ງຢືນເຖິງອະນາຄົດ. (1:23)**

ໂປໂລ ອະທິບາຍວ່າພຣະວິນຍານສະຖິດຢູ່ໃນຕົວຜູ້ທີ່ເຊື່ອ ແມ່ນການຮັປກັນວ່າພວກເຂົາລອດແລ້ວແລະຈະໄດ້ຮັບຣາງວັນໃນວັນສຸດທ້າຍເວລາພຣະອົງສະເດັດມາ. ພຣະວິນຍານບໍຣິສຸດປຽບເໝືອນກັບວ່າເຮົາວາງມັດຈຳໄວ້ກັບພຣະເຈົ້າ.

ຂໍ້ທີ 24 ໂປໂລໄດ້ໃຫ້ນິຍາມຂອງລະບຽບຕ່າງໆ, ເຮົາບໍ່ໄດ້ບັງຄັບໃຜທັງນັ້ນ ຢ່າງດຽວທີ່ພວກເຮົາຄວນເຮັດນັ້ນກໍຄືການເປັນເພື່ອນຮ່ວມງານຂອງພຣະເຈົ້າ. ເຮົາຈະຊ່ວຍທ່ານທັງຫລາຍໃຫ້ຈະເຣີນຂື້ນໃນຄວາມເຊື່ອ.

ໂປໂລຫວັງວ່າຈົດໝາຍສະບັບນີ້ຈະເຮັດໃຫ້ພວກທີ່ຕໍ່ສູ້ລາວເຂົ້າໃຈດີຂື້ນ. ການຂຽນຈົດໝາຍເປັນການຍາກຫລາຍ ເພາະວ່າລາວຂຽນໃນເວລາຂາດອິສຣະພາບ. ບາງຄັ້ງລາວກໍຂຽນດ້ວຍນ້ຳຕາ, ຢ່າງໃດກໍຕາມລາວເປັນຫ່ວງຜູ້ທີ່ເຊື່ອທັງຫລາຍເທົ່າໆກັບຊີວິດຂອງລາວ. (2:4)

## <u>ການປັບປຸງສາຍສັມພັນ (2:5-11)</u>

ຕໍ່ໄປນີ້ ໂປໂລຈະຂຽນເຖິງລະບຽບຂອງຄຣິສຕະຈັກ, ໃນຈົດໝາຍລາວບອກວ່າລາວມີຄວາມທຸກໂສກຫລາຍ. ລາວກໍບໍ່ຢາກໃຫ້ຜູ້ມັກກໍ່ເຣື່ອງນັ້ນຜ່ານໄປໂດຍບໍ່ໄດ້ຮັບການລົງໂທດຫຍັງເລີຍ. ຍັງບໍ່ທັນຈະແຈ້ງເທື່ອວ່າແມ່ນບັນຫາຫຍັງແທ້. ແຕ່ຜູ້ຊ່ຽວຊານທາງດ້ານພຣະຄັມພີກ່າວວ່າ ອາດຈະແມ່ນບັນຫາເຣື່ອງສິດອຳນາດຂອງໂປໂລ, ພວກເຂົາບໍ່ມັກຄຳສັ່ງສອນຂອງລາວ.

ໂປໂລກໍໄດ້ຢືນຢັນວ່າຜູ້ທີ່ຕໍ່ຕ້ານຈະຕ້ອງໄດ້ຮັບໂທດ. ຖ້າບໍ່ດັ່ງນັ້ນ ມານຊາຕານກໍຈະສອຍໂອກາດແຊກຊຶມເຂົ້າມາ ແລະກໍມາສ້າງຄວາມປັ່ນປ່ວນໃນຄຣິສຕະຈັກ ແລະກໍມາທຳລາຍຄວາມເປັນນ້ຳນຶ່ງໃຈດຽວກັນ. ຄວາມຮັກ ບາງຄັ້ງກໍເປັນການຍາກໃນການປະຕິບັດ. ການກະທຳຕ້ອງເປັນທີ່ຈະແຈ້ງບໍ່ວ່າຈະເປັນການຮັກ ຫລືການໃຫ້ອະພັຍ. ຈຸດປະສົງກໍແມ່ນເພື່ອຈະປັບປຸງຄວາມສັມພັນ. ລາວຢາກເຫັນຄວາມສັດຊື່ໃນການຕັດສິນໃຈເຊື່ອຂອງຄຣິສຕຽນ. ລາວຍັງໄດ້ກ່າວວ່າພວກທ່ານຈົ່ງກະທຳຕາມແບບຢ່າງຂອງເຮົາ ແລະຈົ່ງໃຫ້ອະພັຍຄົນທີ່ຂົ່ມເຫັງເຮົາ. ຈົ່ງປັບປຸງສາຍສັມພັນກັບຜູ້ຮ່ວມດ້ວຍຄວາມນຸ່ມນວນອ່ອນຫວານ.

**<u>ຄຳແນະນຳສຳລັບວັນນີ້</u>**

ເຫມືອນໂປໂລກ່າວສອນພວກເຮົາ, ເມື່ອພວກເຮົາແກ້ໄຂບັນຫາທີ່ຄວາມສັມພັນບໍ່ທັມດາ ພວກເຮົາຕ້ອງແກ້ໄຂດ້ວຍຄວາມເມດຕາກະຣຸນາ ແລະດ້ວຍຄວາມຮັກຢ່າງແທ້ຈິງ.

<u>ຄຳຖາມ</u>

1. ທ່ານຄິດວ່າປະວັດສາດຂອງຄຣິສຕຽນຈະເປັນຢ່າງໃດ ຖ້າຫາກໂປໂລບໍ່ປ່ຽນແປງມາເປັນຄຣິສຕຽນ?

2. ພຣະວິນຍານບໍຣິສຸດສະຖິດໃນຄຣິສຕະຈັກຂອງທ່ານຢ່າງໃດ? ແລະໃນຊີວິດຂອງທ່ານຢ່າງໃດ?

3. ຢູ່ໃນຄຣິສຕະຈັກຂອງທ່ານມີລະບຽບການລົງໂທດຢ່າງໃດຕໍ່ຜູ້ກະທຳຜິດ?

4. ໂປໂລແກ້ໄຂການສັມພັນທີ່ບໍ່ເປັນທັມດາ ໃນຄຣິສຕະຈັກເມືອງໂກຣິນໂທຢ່າງໃດ?

# ບົດຮຽນທີ 3
# ວັດແທກການປ່າວປະກາດຂອງພວກເຮົາ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** 2 ໂກຣິນໂທ 2:14 --3:6

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** 2 ໂກຣິນໂທ 2:14--3:18

**ຈຸດສຳຄັນຂອງບົດຮຽນນີ້:** ການປ່າວປະກາດຂອງຄຣິສຕຽນ ຄວນຈະຖືກວັດແທກດ້ວຍມາຕະຖານຊີວິດການເປັນຢູ່ຂອງຄຣິສຕຽນ.

**ຄຳຖາມເພື່ອສຳຣວດ:** ຈະວັດແທກຊີວິດການເປັນຢູ່ຂອງຄຣິສຕຽນຢ່າງໃດ?

**ຈຸດປະສົງຂອງບົດຮຽນ:** ເພື່ອໃຫ້ຮູ້ຈັກຢ່າງຄັກແນ່ວ່າໂປໂລວັດແທກການປ່າວປະກາດຂອງລາວຢ່າງໃດ ແລ້ວມາຊັ່ງຊາຕີລາຄາກັບການປ່າວປະກາດຂອງຕົວເຮົາເອງ ແລະຄຣິສຕະຈັກຂອງເຮົາດ້ວຍ.

## ຄຳນຳ

ຈະວັດແທກຢ່າງໃດໃນການສຳເຣັດວຽກງານຂອງບຸກຄົນ? ວິຊາສະເພາະແຕກຕ່າງກັນ, ມາຕຖານການສຳເຣັດຜົນກໍແຕກຕ່າງກັນ. ເມື່ອຊ່າງໄຟຟ້າ ເປີດສະວິດໄຟແລ້ວ ໄຟກໍຮຸ່ງແຈ້ງສວ່າງ ພວກເຮົາກໍອາດເວົ້າໄດ້ວ່າລາວສຳເຣັດວຽກງານແລ້ວ. ເມື່ອຊ່າງແປງທໍ່ນ້ຳຫາກເປີດສະວິດນ້ຳ ນ້ຳກໍແລ່ນໄປຕາມສາຍຕ່າງໆໂດຍບໍ່ຮົ່ວ ກໍຫມາຍຄວາມວ່າລາວຕໍ່ສາຍນ້ຳຖືກຕ້ອງແລ້ວ. ການສຶກສາ, ການວາດຮູບ, ການສະແດງ ແລະອື່ນໆອີກ ພວກເຮົາກໍສາມາດໃຊ້ຄຳວ່າສຳເຣັດຜົນໄດ້. ແຕ່ວ່າ ການປ່າວປະກາດເຣື່ອງຂອງພຣະເຢຊູຂອງຄົນໆນຶ່ງ ຈະກ່າວວ່າສຳເຣັດຜົນໄດ້ຢ່າງໃດ? ພວກເຮົາຈະມາພິຈາຣະນາວິທີຊັ່ງຊາຕີລາຄ ຕາມແບບຂອງໂປໂລ.

ໂປໂລມີຄວາມວິຕົກກັງວົນໃນການຂຽນຈົດຫມາຍຫາພີ່ນ້ອງຊາວເມືອງໂກຣິນໂທ. ເພາະໃນຂໍ້ຄວາມໄດ້ປະກອບດ້ວຍການດ່າວ່າ, ດຸດັນ, ຕຳນິຕ່າງໆນາໆ. ຕີໂຕ(ຄົນຕ່າງຊາດ ສັນຊາດກຣີກ) ເປັນສາຍລັບ ສົ່ງຈົດຫມາຍ, ແລະສືບຂ່າວດີຕ່າງໆ ແລ້ວນຳມາລາຍງານແກ່ໂປໂລ. (2ໂກຣິນໂທ 7:5-7) ຫລາຍຄົນທີ່ເປັນສະມາຊິກໂບດໄດ້ຮັບຄຳສອນຂອງລາວແລ້ວກໍມີຫລາຍຄົນສາລະພາບ, ສຳນຶກຜິດ ແລະກໍໄດ້ປະຕິຍານວ່າຈະປັບປຸງທັນມາສ້າງດ້ານຈິດວິນຍານຂຶ້ນໃຫມ່. ເມື່ອເຫັນເປັນດັ່ງນັ້ນ, ໂປໂລກໍມີຄວາມດີໃຈຫລາຍ ເຖິງແມ່ນວ່າຈະມີການຕໍ່ສູ້ຢູ່ແດ່ກໍຕາມ.

ເປັນການຜ່ອນຄາຍທີ່ດີ ເມື່ອເຫັນຜູ້ທີ່ເຊື່ອທັງຫລາຍເຂົ້າໃຈແລະກະທຳຕາມຄຳເຕືອນຂອງໂປໂລ. ລາວໄດ້ໃຊ້ຄຳວ່າ "ພວກເຮົາ" ໃນນີ້ອາດຈະລວມກັບຕີໂມທຽວດ້ວຍ ຫລືອາດຈະລວມເອົາທັງພີ່ນ້ອງຊາວໂກຣິນໂທດ້ວຍ.

ການອັສຈັນຂອງພຣະເຈົ້າທີ່ໄດ້ປ່ຽນຫົວໃຈຫີນ, ຫົວໃຈຟາຣີຊາຍ ໃຫ້ກັບກາຍມາເປັນຜູ້ມີຄວາມຮັກ, ຄວາມເອັນດູ, ປະກາດເຣື່ອງຄວາມຜິດຂອງຊາວໂກຣິນໂທ ແລະກໍໄດ້ປ່ຽນແປງຈິດໃຈຂອງເຂົາ. ຄວາມສັມພັນລະຫວ່າງຊາວໂກຣິນໂທແລະໂປໂລກໍຄ່ອຍໆດີຂຶ້ນ. ເປັນການກະທຳທີ່ດີທີ່ສຸດ ແລະສິ່ງທັງຫມົດນີ້ໂປໂລມອບໃຫ້ແກ່ພຣະເຈົ້າ. ລາວຮູ້ດີວ່າແມ່ນພຣະເຈົ້າເປັນຜູ້ເຮັດບໍ່ແມ່ນລາວເອງ. ຊັຍຊະນະຕ່າງໆແມ່ນຂອງພຣະເຈົ້າ.

## ສລອງຊັຍຊະນະຂອງພຣະຄຣິດ (2:14-16)

ເວລາທ່ານນາຍພົນຂອງທະຫານໂຣມັນກັບຈາກສະນາມຮົບດ້ວຍຊັຍຊະນະ, ລາວກໍຈະໄດ້ຮັບການເດີນສວນສະນາມຍົກຍ້ອງເປັນພິເສດ ຊຶ່ງເອີ້ນວ່າການສລອງຊັຍຊະນະ. ລາວຈະຕ້ອງໄປຮ່ວມໃນການສລອງຊັຍຊະນະ, ເປັນຕົວເດັ່ນ, ແລະຈະມີສຽງຮ້ອງໂຮຂ້າງໆທາງ. ການສເລີມສລອງແມ່ນເປັນໄປດ້ວຍຄວາມມ່ວນຊື່ນ, ຍົກຍ້ອງ, ໃຫ້ກຽດ, ຮັບລາງວັນ, ໃນຊົ່ວຊີວິດນຶ່ງອາດຈະມີພຽງຄັ້ງດຽວຫລືບໍ່ມີຊ້ຳກໍອາດເປັນໄດ້. ຊ່ວງສຸດທ້າຍໃນການສລອງນັ້ນກໍຄືການກິນລ້ຽງໃຫຍ່.

ນີ້ຄືຮູບພາບທີ່ພຸ່ງຂຶ້ນມາໃນສມອງຂອງໂປໂລເມື່ອລາວຄິດເຖິງພຣະເຢຊູທີ່ໄດ້ຮັບຊັຍຊະນະເຫນືອມານຊາຕານ. ລາວເຫັນວ່າພຣະອົງຊົງເປັນຕົວເອກທີ່ກຳລັງເດີນນຳພາຊາວໂລກທັງຫລາຍເດີນໄປ. ສ່ວນຕົວລາວເອງ ໂປໂລບໍ່ມີຫຍັງ, ລາວບໍ່ສົມຄວນຈະໄດ້ຮັບຫຍັງ, ລາວຍັງຮູ້ສຶກວ່າຜູ້ທີ່ຄຽງຂ້າງ ແລະຮ່ວມງານກັບລາວນັ້ນແມ່ນພຣະຄຣິດ. ໂດຍເຫດການເກີດຂຶ້ນນັ້ນ ລາວບໍ່ມີຄວາມສາມາດຈະຢັບຢັ້ງໄດ້ເລີຍຕ້ອງອາສັຍກິ່ນອັນຫອມຫວນຂອງພຣະເຢຊູຄຣິດ.

ເມື່ອໂປໂລຄຳນຶງເຖິງການຮຽກເອີ້ນທີ່ພຣະອົງຊົງເອີ້ນລາວນັ້ນ ລາວມີຄວາມຕົກໃຈຫວາດກົວຫລາຍ. ບໍ່ມີ ບໍ່ມີມະນຸດຫນ້າໃດໃນໂລກນີ້ ທີ່ຈະສາມາດແກ້ໄຂບັນຫາຢ່າງນີ້ໄດ້ດອກຖ້າບໍ່ອາສັຍພຣະເຈົ້າ.

## ຈົດຫມາຍທີ່ມີຊີວິດ (3:1-6)

ອີກເທື່ອນຶ່ງ ໂປໂລເຫມືອນກັບວ່າແນະນຳຕົວເອງອີກ. ລາວເຮັດຢ່າງນີ້ກໍເພາະວ່າໃນເມືອງນີ້ ມີຄົນເຂົ້າຄົນອອກກໍຫລາຍ ແລະສ່ວນມາກກໍແມ່ນມີຫນັງສືຢັ້ງຢືນເພາະວ່າມີຄົນອັນຕະພານເກເລມາສເນີຕົວແລະຫນັງສືປອມ. ລາວບອກວ່າ ສຳລັບຂ້າພະເຈົ້າແລ້ວຫນັງສືຂອງຂ້າພະເຈົ້າແມ່ນຕົວພວກທ່ານນັ້ນແຫລະ. ສຳລັບຄຣິສຕຽນເຮົາແລ້ວພວກເຮົາກໍເປັນຕົວຫນັງສືຂອງພຣະເຢຊູ.

ໃຜຈະສາມາດຮູ້ໄດ້ວ່າ ອຳນາດຂອງຈົດຫມາຍມີຫລາຍປານໃດ? ເມື່ອບໍ່ນານມານີ້ເພື່ອນຂອງຂ້າພະເຈົ້າໄດ້ຍ້າຍລັດ ເພື່ອໄປຮັບຫນ້າທີ່ໃຫມ່. ສິ່ງທີ່ເຫລືອໄວ້ໃຫ້ຂ້າພະເຈົ້າກໍແມ່ນ ແກັດ ປື້ມແລະຈົດຫມາຍ. ຂ້າພະເຈົ້າກໍບໍ່ມີໂອກາດທີ່ຈະເປີດແກັດເອົາຫນັງສືນັ້ນມາອ່ານ. ຈົນວັນນຶ່ງ ລາວໄດ້ເກີດອຸປະຕິເຫດແລະເສັຍຊີວິດໄປໂດຍກະທັນຫັນ. ຫລັງຈາກນັ້ນ ຂ້າພະເຈົ້າກໍໄດ້ເປີດແກັດນັ້ນເບິ່ງ, ຈຶ່ງເຫັນຈົດຫມາຍສະບັບນຶ່ງຂຽນເຖິງພໍ່ຂອງລາວຜູ້ທີ່ຍັງບໍ່ທັນເປັນຄຣິສຕຽນເທື່ອ. ຂ້າພະເຈົ້າກໍຈັດສົ່ງໄປໃຫ້ເພິ່ນໂດຍທັນທີ. ຫລາຍເດືອນຕໍ່ມາພໍ່ຂອງລາວກໍໄດ້ຮັບເຊື່ອເອົາພຣະເຢຊູຄຣິດ, ແລະໄດ້ຮັບສິນບັບຕິສມາຕາມທີ່ພວກເຮົາເຄີຍໄດ້ອະທິຖານເພື່ອລາວ.

ອາດຈະຄິດໄດ້ອີກຢ່າງນຶ່ງວ່າ ຖ້າພວກເຂົາຢາກເຫັນຈົດຫມາຍອີກ, ໂປໂລຍິ່ງມີຈົດຫມາຍຫລາຍສະບັບຊຶ່ງບັນທຶກຢູ່ໃນຊີວິດຂອງລາວທີ່ສເນີໃຫ້ຜູ້ທີ່ເຊື່ອໄດ້ເຫັນໂດຍບໍ່ແມ່ນຂຽນດ້ວຍມືມະນຸດ. (6:9:11) ຊີວິດຂອງໂປໂລເປັນຊີວິດທີ່ຢັ້ງຢືນໄດ້ໃນການກະທຳໂດຍບໍ່ຈຳເປັນຕ້ອງໂຄສະນາ. ການປ່ຽນແປງຊີວິດຂອງພວກເຂົາໄດ້ເຮັດໃຫ້ລາວມີຄວາມຫມັ້ນໃຈແລະພູມໃຈຫລາຍ.

## ຂໍ້ສັນຍາ 2 ຂໍ້ (3:7-18)

ໂປໂລສົມທຽບການປ່າວປະກາດຂອງລາວແລະການປ່າວປະກາດຂອງໂມເຊວ່າ ມີການພົວພັນກັນຢູ່ 2 ຂໍ້ສັນຍາ--ພຣະສັນຍາເກົ່າ ແລະພຣະສັນຍາໃຫມ່. ນັກສາສນາສາດຫລາຍຄົນມັກຈະເນັ້ນໃນ 2 ຂໍ້ສັນຍາ ຄືສັນຍາຂອງພຣະເຈົ້າແລະສັນຍາຂອງຄົນຂອງພຣະອົງ. ຂໍ້ສັນຍາທີ່ມີການພົວພັນກັນນີ້ ໄດ້ເຮັດໃຫ້ເຮົາຫວນຄິດໄປເຖິງຊາວອິສຣາເອນໃນສມັຍເດີມ. ພຣະເຈົ້າໄດ້ເປັນຜູ້ເລີ່ມຕົ້ນໃຫ້ຄໍາສັນຍາເພື່ອພຣະອົງຈະໄດ້ພົບກັບພວກເຂົາ. ພຣະບັນຍັດ 10 ປະການ ໄດ້ບົ່ງບອກເຖິງພື້ນຖານຂອງສາສນາ ແລະຈະຣິຍະທັມຂອງຄວາມຄິດທີ່ອິສຣາເອນຖືກເລືອກອອກມາເປັນຊົນຊາດທີ່ບໍຣິສຸດ. ພຣະບັນຍັດນີ້ແມ່ນກົດບັນຍັດຂໍ້ສັນຍາເດີມ.

ໂປໂລຊ່ວຍການປ່າວປະກາດຂອງໂມເຊດ້ວຍການປະຕິບັດພຣະບັນຍັດ--ລາວປະຕິບັດໂດຍບໍ່ມີຂອບເຂດຈໍາກັດ, ຖືວ່າເປັນສິ່ງທີ່ຈໍາເປັນ, ແລະຖືວ່າເປັນຫນ້າທີ່. ເຖິງແມ່ນວ່າການປະກາດຂອງໂມເຊຈະໂດ່ງດັງ ຈົນລາວໄດ້ປະເຊີນຫນ້າກັບພຣະເຈົ້າກໍຕາມ (ອພຍ 34:29-30) ມັນກໍເປັນຊົ່ວຄາວ. ເພາະລາວຍັງມີຜ້າຄຸມຫນ້າຢູ່ ຫລືເວົ້າອີກຢ່າງນຶ່ງວ່າກົດບັນຍັດເດີມແມ່ນການລົງໂທດ ຖ້າມີຜູ້ໃດເຮັດຜິດພາດກໍມີແຕ່ການລົງໂທດຢ່າງດຽວບໍ່ມີການໄຖ່, ບໍ່ມີການປັບປຸງໃຫ້ປ່ຽນແປງ. ແຕ່ພຣະບັນຍັດຫລືສັນຍາໃຫມ່ແມ່ນຕ້ອງການໃຫ້ປັບປຸງແກ້ໄຂ, ປ່ຽນແປງຄວາມປະພຶດໃຫມ່ໃຫ້ອອກມາຈາກຂ້າງໃນ.

ໂປໂລຖືກຊັກຈູງຈິດໃຈດ້ວຍພຣະສັນຍາໃຫມ່ທີ່ພຣະຄຣິດໄດ້ສເລີມສລອງໃນການຮັບທານອາຫານ ຄາບສຸດທ້າຍ (ລກ 22:20) , ຊຶ່ງເປັນຂໍ້ສັນຍາໃຫມ່ທີ່ມີພລັງແລະຄົບຖ້ວນ. ເປັນສິ່ງທີ່ເຫນືອສຸດທີ່ພຣະວິນຍານບໍຣິສຸດໄດ້ວາງລົງໃສ່ໃນຈິດໃຈຂອງມວນມະນຸດ ບໍ່ແມ່ນວາງໄວ້ເທິງກ້ອນຫີນຊື່ໆ. ພຣະເຢຊູໄດ້ເຮັດໃຫ້ພຣະສັນຍາຂອງພຣະອົງຄົບຖ້ວນແລ້ວພຣະອົງກໍສິ້ນພຣະຊົນຕາມແຜນການຂອງພຣະເຈົ້າ. (2ໂກຣິນໂທ 5:19; ຄຕ 3:13; ກຊ 2:14) ພຣະອົງໄດ້ປົດປ່ອຍຜູ້ທີ່ເຊື່ອແລະວາງໃຈໃນພຣະອົງໃຫ້ອອກຈາກບັນຍັດເດີມໂດຍການຟື້ນຄືນພຣະຊົນ. (ໂຣມ 10:4)

ພຣະບັນຍັດໃຫມ່ ຈໍາເປັນແລະຕ້ອງການຄຸນນະພາບທີ່ສຸດໃນການປ່າວປະກາດ (1ຕທ 1:12) ຜູ້ປ່າວປະກາດໃນຍຸກແຮກຮູ້ດີວ່າຄໍາປະກາດຄໍາສຸດທ້າຍຂອງມວນຊົນທັງຫລາຍແມ່ນພຣະເຢຊູຄຣິດ. (ຮບ 1:1-2) ສ່ວນຜູ້ອື່ນໆໃນພຣະຄັມພີພວກເຂົາເປັນພຽງຜູ້ຂຽນເທົ່ານັ້ນ ແຕ່ບໍ່ແມ່ນພຣະເຈົ້າ.

ດັ່ງນັ້ນ ແຫລະກຽດແລະສະງ່າຣາສີຂອງພວກເຂົາຈຶ່ງມີຂອບເຂດໃນແຕ່ລະບຸກຄົນ--ໂມເຊ--ສະງ່າຣາສີຂອງພຣະເຈົ້າຢູ່ນໍາທຸກໆຄົນ, ສະງ່າຣາສີນີ້ຈະບໍ່ລັບຫາຍແລະຫລຸດນ້ອຍຖອຍລົງຈັກເທື່ອ, ມີແຕ່ຈະເພີ້ມຂຶ້ນດ້ວຍລໍາດັບຂອງມັນເອງ ຄືຈາກຕໍ່າຫາສູງ ແລະສູງຂຶ້ນໄປເລື້ອຍໆ.

## ຄໍາແນະນໍາສໍາລັບວັນນີ້

ທີ່ຈະວັດແທກການປ່າວປະກາດຂອງໂປໂລ, ຂອງພວກເຮົາເອງ, ແລະຂອງຄຣິສຕະຈັກດ້ວຍ ວ່າໄດ້ຜົນຢ່າງໃດນັ້ນເຮົາຕ້ອງເບິ່ງເຖິງວິທີການ, ວິທີການນັ້ນມີຄວາມຮັກຄວາມເອັນດູແຝງຢູ່ນໍາຫລືບໍ່? (2:17-18); ມີຈຸດປະສົງແລະເປົ້າຫມາຍເພື່ອນໍາຄົນມາຫາພຣະເຢຊູຫລືບໍ່? (3:1-3); ມີອໍານາດມາຈາກພຣະເຈົ້າຫລືບໍ່? (3:5)

ພວກເຮົາຄວນຈະວັດແທກການປ່າວປະກາດຂອງພວກເຮົາ, ຂອງຄຣິສຕະຈັກຂອງເຮົາ ດ້ວຍມາຕະຖານເຫລົ່ານີ້ຫລືບໍ່?

**ຄຳຖາມ:**

1. ອີງຕາມຂໍ້ພຣະຄັມພີ ຂໂກຣິນໂທ ຂ:14-16. ໃນຮູບພາບຂອງພຣະເຢຊູໄດ້ຮັບຊັຍຊະນະນີ້ ພວກທ່ານຢາກຢູ່ໃນພວກໃດ? ເປັນຫຍັງ?

2. ຄຣິສຕຽນແມ່ນຕົວໜັງສື, ນີ້ມີຄວາມໝາຍຢ່າງໃດ? "ທຸກຄົນຈະ "ເຫັນແລະອ່ານ" ຂໂກຣິນໂທຂ:ຂ

3. ໂປໂລລາວມີຄວາມຄິດຢ່າງໃດກ່ຽວກັບຄຣິສຕຽນຊາວໂກຣິນໂທ "ໃຫ້ເປັນຕົວໜັງສື, ໃນການປ່າວປະກາດ" (ຂ:3) ທີ່ແນະນຳເຖິງການວັດແທກຊີວິດຄຣິສຕຽນ?

4. ມາຕະຖານຂອງທ່ານໃນການປ່າວປະກາດແມ່ນຫຍັງ? ຈະສົມທຽບກັບການປ່າວປະກາດຂອງໂປໂລຢ່າງໃດ?

# ບົດຮຽນທີ 4
# ມີຈິດໃຈດຳເນີນຕໍ່ໄປເພື່ອການຮັບໃຊ້

---

**ຂໍ້ພຣະຄັມພີສຳລັບບົດຮຽນ:** 2 ໂກຣິນໂທ 4:1-15
**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** 2 ໂກຣິນໂທ 4:1-15
**ຈຸດສຳຄັນຂອງບົດຮຽນນີ້:** ມີຈິດໃຈດຳເນີນຕໍ່ໄປເພື່ອການຮັບໃຊ້ ໃນຖ້າມກາງການທ້າທາຍທີ່ປະເຊີນຢູ່ ຮຽກຮ້ອງໃຫ້ມີຄວາມສັດຊື່ ແລະໄວ້ວາງໃຈພຣະເຈົ້າຫມົດຈິດຫມົດໃຈ.
**ຄຳຖາມເພື່ອການສຳຫລວດ:** ພວກເຮົາຈະເຮັດຢ່າງໃດຈຶ່ງບໍ່ທໍ້ຖອຍໃນການຮັບໃຊ້?
**ຈຸດປະສົງຂອງບົດຮຽນນີ້:** ທາດແທ້ຂອງໂປໂລທີ່ມີຈິດໃຈດຳເນີນຕໍ່ໄປເພື່ອການຮັບໃຊ້ ຊຶ່ງພວກເຮົາຈຳເປັນຈະຕ້ອງນຳມາປະຕິບັດ.

## ບົດຮຽນ

### ຄຳນຳ

ຣິດອຳນາດຂອງພຣະເຈົ້າຊົງເອົາຊະນະຄວາມອ່ອນແຮງຂອງມະນຸດ ແລະເພີ່ມກຳລັງໃຫ້ໂປໂລເພື່ອການຮັບໃຊ້ ສະນັ້ນ ເມື່ອບັນຫາເຂົ້າມາແຊກຊຶມລາວຈຶ່ງບໍ່ຕົກໃຈ.

ຫລານຂອງຂ້າພະເຈົ້າ ທ້າວເຈມ ກຳລັງຮຽນຢູ່ວິທະຍາລັຍກ່ຽວກັບວິສະວະກອນໄຟຟ້າ. ມື້ນຶ່ງ ລາວໂທຣະສັບຫາຂ້າພະເຈົ້າດ້ວຍຄຳເວົ້າທີ່ເຮັດໃຫ້ຈິດໃຈຂອງຂ້າພະເຈົ້າຊື່ນບານ. "ແມ່ຕູ້ເອີຍ ຂອບໃຈເດີ ມີຫລາຍເທື່ອຂ້ານ້ອຍທໍ້ຖອຍໃຈ ເມື່ອເຮັດອັນໃດບໍ່ໄດ້ສົມຫວັງຕາມໃຈມັກ ແລ້ວຂ້ານ້ອຍຢາກເຊົາ ແຕ່ວ່າ ແມ່ຕູ້ໃຫ້ກຳລັງໃຈຂ້ານ້ອຍ ແລະບໍ່ໃຫ້ຂ້ານ້ອຍຍອມ. ເມື່ອຂ້ານ້ອຍມາຄຶດເບິ່ງແລ້ວ ຂ້ານ້ອຍເຮັດຫຍັງກໍຕາມປະຈຸບັນນີ້ ຂ້ານ້ອຍບໍ່ທໍ້ຖອຍກໍຍ້ອນແຕ່ຕູ້ເປັນຜູ້ປູກແນວຄິດນີ້ໃຫ້ຂ້ານ້ອຍ."

ໃນຂນະທີ່ ທ້າວເຈມ ເຕີບໂຕ ລາວມັກຊ່ອຍຂ້າພະເຈົ້າເມື່ອຂ້າພະເຈົ້າເຮັດອັນໃດອັນນຶ່ງ ແຕ່ວ່າລາວບໍ່ມີໃຈອົດທົນ. ບໍ່ວ່າເຮັດຫຍັງກໍຕາມ ຖ້າເຮັດບໍ່ໄດ້ຄັ້ງທຳອິດ ລາວມັກຈະທໍ້ຖອຍແລະບໍ່ຢາກເຮັດຕໍ່ໄປ. ຂ້າພະເຈົ້າບໍ່ໃຫ້ລາວເຊົາ ລາວແລະຂ້າພະເຈົ້າຈະເຮັດຢູ່ນຳກັນຈົນກວ່າສິ່ງນັ້ນສຳເຣັດ. ຄວາມທໍ້ຖອຍບໍ່ແມ່ນທາງອອກ.

ຄວາມທໍ້ຖອຍເບິ່ງເຫມືອນກັບວ່າເປັນການທົດລອງທີ່ຄົນທົ່ວໄປໄດ້ປະເຊີນກັບໃນຈັກວານນີ້. ເຖິງຢ່າງໃດກໍຕາມ ເມື່ອມາສຶກສາເບິ່ງແລ້ວ ຢ່າງຫນ້ອຍມີເຫດຜົນຢູ່ສິບຢ່າງທີ່ "ບໍ່ທໍ້ຖອຍ" (2 ໂກຣິນໂທ 4:1). ເຫດຜົນດັ່ງກ່າວນີ້ ບາງຄັ້ງກໍເປັນການຍາກຫລາຍທີ່ຈະບັນລະຍາຍເປັນຄຳເວົ້າທີ່ໃຫ້ເຂົ້າໃຈໄດ້ ແຕ່ວ່າ ເນື້ອໃນໃຈຄວາມຂອງມັນກໍຢູ່ໃນທີ່ນັ້ນ. ໃຫ້ຈັບຕາເບິ່ງຂໍ້ຄວາມທີ່ທ່ານອ່ານພົບ ແລ້ວປຽບທຽບກັບຂໍ້ແນະນຳຂອງຂ້າພະເຈົ້າ. ພວກເຮົາຈະເຂົ້າໃຈດອກໃນຂນະທີ່ສຶກສາໄປເລື້ອຍໆ.

### ໂປໂລໄດ້ພົບການຫນູນໃຈ (4:1-6)

(1) ພຣະກະຣຸນາແລະພຣະຄຸນອັນອັສຈັນໃຈຂອງພຣະເຈົ້າໄດ້ຊົງໄຖ່, ຊົງຮຽກເອີ້ນ, ແລະຊົງມອບຫມາຍໃຫ້ໂພ່ພົມຂອງພຣະອົງເພື່ອການຮັບໃຊ້, ໃນກໍຣະນີຂອງ ໂປໂລ ແມ່ນໄປປະກາດໃຫ້ກັບຄົນຕ່າງຊາດ ຊຶ່ງລາວບໍ່ເຄີຍຄາດຫມາຍໄວ້ (4:1). ໂປໂລບໍ່ໄດ້ເລືອກແລະບໍ່ແມ່ນຄຸນຄວາມດີຂອງລາວເຮັດໃຫ້ລາວກາຍເປັນຜູ້ປະກາດຂ່າວປະເສີດ.

ລາວເປັນ "ຜູ້ນ້ອຍກວ່າຜູ້ນ້ອຍທີ່ສຸດ" (ເອເຟໂຊ 3:8) ແລະ "ໃນຈຳນວນຄົນບາບນັ້ນແມ່ນເຮົານີ້ແຫລະເປັນຜູ້ຕົ້ນ" (1 ຕີໂມທຽວ 1:15). ຕໍ່ມາ ພຣະເຈົ້າຊົງຈັບລາວແລະປ່ຽນຄວາມຕັ້ງໃຈຂອງລາວຈາກຄວາມໂຫດຮ້າຍ, ຄວາມຊັງ, ແລະຄວາມຕາຍມາເປັນຄວາມຮັກ, ການຄືນດີ ແລະການຮັບໃຊ້. ຊີວິດທີ່ຜ່ານມາ, ການສຶກສາທີ່ລາວໄດ້ຈາກຜູ້ຊົງຄຸນວຸດທິ ອາຈານ ຄາມາລີເອັນ (ກິຈການ 22:3), ແລະເປັນສັນຊາດ ໂຣມ (ກິຈການ 22:25-28), ແລະພື້ນຖານສາສນາຂອງລາວກໍເຮັດໃຫ້ລາວເປັນຜູ້ຮັບໃຊ້ທີ່ດີ. ປະສົບການອັນອັສຈັນກັບພຣະເຈົ້າຜູ້ຊົງພຣະຊົນຢູ່ເປັນເຫມືອນນ້ຳພຸຝ່າຍຈິດວິນຍານຊຶ່ງໃຫ້ຄວາມສົດຊື່ນແກ່ລາວຕລອດມາ.

(2) ໂປໂລໄດ້ຮັບການຫນູນໃຈຈາກຄວາມຈິງຂອງຂ່າວປະເສີດ (2 ໂກຣິນໂທ 4:2). ພຣະເຢຊູໄດ້ກ່າວໄວ້ວ່າ "ເຮົານີ້ແຫລະ, ເປັນທາງນັ້ນ, ເປັນຄວາມຈິງ, ແລະເປັນຊີວິດ. ບໍ່ມີຜູ້ໃດມາເຖິງພຣະບິດາໄດ້ນອກຈາກມາທາງເຮົາ" (ໂຢຮັນ 14:6). ຄວາມຈິງນັ້ນ ບໍ່ຈຳເປັນຕ້ອງແປງແຕ່ງ. ຄວາມຈິງຈະຕ້ອງປະກາດໃຫ້ຮູ້. ແມ່ນພຣະເຢຊູ. ປາສຈາກຄວາມອາຍ ຫລືການຫລອກລວງ ໂປໂລປະກາດຊີວິດຂອງພຣະຄຣິດ, ການສິ້ນພຣະຊົນ, ແລະການຄືນພຣະຊົນຂອງພຣະອົງ. ລາວບໍ່ໄດ້ຖືເບົາໃນເຣື່ອງການກັບໃຈ, ຄວາມເສັຽສລະຂອງການເປັນສິດ, ແລະໃຫ້ພຣະຄຣິດເປັນນາຍເຫນືອຫົວຂອງຕົນ. ພຣະເຢຊູຊົງສັນຍາວ່າ "ຄວາມຈິງນັ້ນຈະເຮັດໃຫ້ພວກທ່ານເປັນອິສຣະ" (ໂຢຮັນ 8:32), ແລະເປົ້າຫມາຍຂອງໂປໂລ ແມ່ນສເນີຂ່າວປະເສີດເພື່ອຈະໃຫ້ຝູງຊົນໄດ້ເປັນອິສຣະຈາກສິ່ງຜູກມັດພວກເຂົາໄວ້.

(3) ໂປໂລມີຈິດໃຈດຳເນີນຕໍ່ໄປ ເພາະວ່າຂ່າວປະເສີດນັ້ນມີເຫດແລະຜົນ ເຖິງແມ່ນວ່າຜູ້ຟັງຈະເຊື່ອຫລືບໍ່ເຊື່ອກໍຕາມ (2 ໂກຣິນໂທ 4:3-4). ການຕັດສິນໃຈປະຕິເສດຂ່າວປະເສີດຂອງພວກເຂົາ ກໍບໍ່ໄດ້ກະທົບກະເທືອນຂ່າວສານທີ່ຫວ່ານໄປເລີຍ. ເຖິງແມ່ນວ່າ ມານຊາຕານຈະປົກບັງຈິດໃຈຂອງບາງຄົນໄວ້ ຂ່າວປະເສີດກໍຍັງເປັນທີ່ໄວ້ວາງໃຈໄດ້ຢູ່ສເມີ. "ພຣະຂອງສມັຍນີ້" ເຂົ້າໄດ້ແຕ່ບາງຄົນ ເພາະວ່າພວກເຂົາເລືອກເອົາທາງຂອງມັນ.

ບໍ່ວ່າການລໍ້ລວງໃຫ້ຫມົດກຳລັງໃຈໃດໆກໍຕາມ ກໍຈະເສື່ອມສູນໄປ ເມື່ອໂປໂລນຶກເຖິງຜົນຂອງການຮັບໃຊ້ຂອງລາວ (4:5). ລາວຮຽກຮ້ອງຫາຜູ້ທີ່ມີຄວາມກະຫາຍຝ່າຍຈິດວິນຍານ, ບໍ່ແມ່ນສະຕິປັນຍາ ຫລື ອາລົມຄວາມຮູ້ສຶກຂອງເຂົາ. ລາວບໍ່ເຄີຍເຮັດກົນອຸບາຍຫລອກລວງຜູ້ໃດ. ຂ່າວປະເສີດຂອງລາວປະກາດໄປນັ້ນ ແມ່ນເຈາະຈົງໃຫ້ຜູ້ທີ່ມີຈິດໃຈສແວງຫາພຣະເຈົ້າຢ່າງແທ້ຈິງ. ແຕ່ສຳລັບຜູ້ທີ່ບໍ່ເຊື່ອນັ້ນກໍມີສິ່ງປິດຕາພວກເຂົາຢູ່ແລ້ວ. ບໍ່ເຫມືອນກັບຄຣູສອນປອມຜູ້ທີ່ປັ້ນຄວາມຈິງແລະຫລອກລວງຜູ້ທີ່ຟັງ ໂປໂລປະກາດຂ່າວປະເສີດດ້ວຍຄວາມຣະມັດຣະວັງ ມີຄວາມແຈ່ມແຈ້ງ, ຈິງໃຈ, ແລະຊື່ຕົງ.

(4) ໂປໂລໄດ້ກ່າວສົມທຽບການບັນທຶກເລີ້ມແລກຂອງການຊົງສ້າງ ເມື່ອພຣະເຈົ້າຊົງກ່າວວ່າ "ໃຫ້ແສງສວ່າງເກີດມີຂຶ້ນ" ແສງສວ່າງກໍມີຂຶ້ນມາ" (ປະຖົມມະການ 1:3). ໃນຖ້າມກາງຄວາມມືດອັນສັບສົນອົນລະວົນ ແສງຣັດສມີຂອງພຣະເຈົ້າຊົງສ່ອງປາກົດແຈ້ງ. ເມື່ອເປັນດັ່ງນັ້ນແຫລະ ການຊົງສ້າງຂອງພຣະເຈົ້າຈຶ່ງເປັນລະບຽບ. ໃນທຳນອງດຽວກັນ ໂປໂລໄດ້ປະສົບກັບແສງຣັດສມີຂອງພຣະຄຣິດ ໃນເສັ້ນທາງໄປເມືອງ ດາມາເຊ. ແສງສວ່າງທີ່ເຮັດໃຫ້ຕາຂອງລາວບໍ່ເຫັນຮຸ່ງໄດ້ແທງຈີ້ມເຂົ້າໄປໃນຈິດວິນຍານທີ່ເຕັມໄປດ້ວຍຄວາມເຈັບປວດແລະມືດມົນ ແລະແສງສວ່າງຂອງພຣະຄຣິດຊົງເປີດຈິດໃຈຂອງລາວໃຫ້ເຫັນແຈ້ງຮູ້ຈິງ (enlightened). ເຖິງແມ່ນວ່າພຣະເຈົ້າຊົງກະທຳສິ່ງມະຫັສະຈັນຫລາຍຢ່າງຜ່ານທາງ ໂປໂລ ແຕ່ລາວບໍ່ເຄີຍອວດອ້າງວ່າເປັນຜົນງານຂອງລາວເລີຍ. ລາວຮັບວ່າເປັນຍ້ອນພຣະຄຸນຂອງພຣະຄຣິດຊົງໄດ້ແຕ່ງຕັ້ງໃຫ້ລາວເປັນຜູ້ຮັບໃຊ້ຊາວເມືອງ ໂກຣິນໂທ.

## <u>ສົມບັດຖືກເຊື່ອງໄວ້ໃນທີ່ບໍ່ຄາດໄວ້</u> (4:7)

(5) ໂປໂລໄດ້ຮັບກຳລັງໃຈດ້ວຍວ່າພຣະເຈົ້າຊົງເອົາຣິດເດດອັນເລີດປະເສີດຂອງພຣະອົງໃສ່ໃນມະນຸດທີ່ມີຄວາມອ່ອນ

ແອ ເຊັ່ນຕົວລາວເອງແລະຊາວໂກຣິນໂທ. ປຽບເໝືອນກັນກັບເອົາຊັບສົມບັດອັນມີຄ່າໃສ່ໄວ້ໃນພາຊະນະດິນ. ໃນສະໄໝຂອງ ໂປໂລນັ້ນ ຕະກຽງເປັນຂອງໃຊ້ທີ່ຈຳເປັນໃນບ້ານເຮືອນ. ຕະກຽງເຫລົ່ານັ້ນມີຂາຍໃນຣາຄາສົມນາພາຄວນ. ຣາຄາຂອງມັນຈະຖືກ ຫລືວ່າແຕກງ່າຍນັ້ນບໍ່ເປັນຫຍັງ. ຄຸນຄ່າຂອງມັນບໍ່ໄດ້ຢູ່ທີ່ຮູບຮ່າງທາງນອກ ແຕ່ຄຸນຄ່າຂອງມັນຢູ່ທີ່ຄຸນນະພາບ. ມັນຮັບຄວາມຮ້ອນຈາກໄສ້ຕະກຽງທີ່ເຜົາຢູ່ ແລະບັນຈຸນ້ຳມັນໄວ້ ແລ້ວສ່ອງແສງສວ່າງໃຫ້ກັບບ້ານຫລັງນັ້ນ.

ໂປໂລອາດຈະບໍ່ເປັນຄົນເຈົ້າຊູ້ ຮູບຮ່າງຂີງຂັງ. ລາວອາດຈະມີຮູບຮ່າງນ້ອຍເປັນເໝືອນຄົນບໍ່ແຂງແຮງ (10:10). ລາວອາດມີພະຍາດຕິດຕົວ ລາວເອີ້ນວ່າ " ສ້ຽນໜາມໃນເນື້ອກາຍ" (12:7). ເຖິງແມ່ນວ່າຮ່າງກາຍຂອງລາວຈະເປັນຢ່າງໃດກໍຕາມ ຊັບສົມບັດທີ່ມີຄຸນຄ່າອັນແທ້ຈິງນັ້ນແມ່ນອຳນາດທີ່ຢູ່ນຳລາວ ຄືສິດພິເສດທີ່ລາວໄດ້ຮັບໃຫ້ປະກາດຂ່າວປະເສີດແກ່ຄົນທັງຫລາຍ.

<u>ຄວາມອຸດົມສົມບູນຂອງພຣະເຈົ້າ</u> (4:8-14)

(6) ພຣະເຈົ້າຊົງບໍ່ມີຂອບເຂດຈຳກັດ ແລະຄວາມອຸດົມສົມບູນຂອງພຣະອົງເປັນກຳລັງໃຈໃຫ້ໂປໂລຢູ່ບໍ່ຂາດ (4:8-9). ລາວເຫັນອຸປສັກທີ່ຈະຕ້ອງປະເສີນນັ້ນບໍ່ຂາດສາຍ. ລາວຖືກຄວາມທຸກລຳບາກອ້ອມຂ້າງ ແຕ່ບໍ່ເຖິງອັຕຄັດ. ລາວຈົນປັນຍາ ແຕ່ຍັງບໍ່ໝົດທາງອອກ. ລາວຖືກມະນຸດຂົ່ມເຫງ ແຕ່ພຣະເຈົ້າບໍ່ໄດ້ປະຖິ້ມລາວ. ລາວຖືກຕີລົ້ມແລ້ວ ແຕ່ວ່າບໍ່ເຖິງຕາຍ. ເບິ່ງເໝືອນກັບວ່າ ເມື່ອລາວໝົດທາງແລ້ວ ລາວໄດ້ພົບຄວາມຫວັງໃໝ່ຢູ່ສເມີ.

ເຣື່ອງຄວາມຫວັງເປັນຂໍ້ໃຫຽ່ໃຈຄວາມໃນພຣະສັນຍາເດີມແລະພຣະສັນຍາໃໝ່. ມີຄວາມກາງຕໍ່ໃນສິ່ງດີທີ່ຈະເກີດຂຶ້ນ ເປັນຂອງຂວັນທີ່ຈະມາໃນອະນາຄົດ. ຜູ້ປະກາດພຣະທັມ ເຢເຣມີຢາ ໄດ້ຂຽນໄວ້ວ່າ "ເຮົາຜູ້ດຽວເທົ່ານັ້ນທີ່ຮູ້ແຜນການຂອງເຮົາສຳລັບໝູ່ເຈົ້າ ຄືແຜນການທີ່ນຳຄວາມຈະເຣີນຮຸ່ງເຮືອງມາຍັງໝູ່ເຈົ້າ ແລະບໍ່ແມ່ນນຳຄວາມຈິບຫາຍມາຍັງໝູ່ເຈົ້າ ແຕ່ເປັນແຜນການທີ່ນຳຄວາມຫວັງມາສູ່ອະນາຄົດຂອງໝູ່ເຈົ້າ" (ເຢເຣມີຢາ 29:11). ເປັນຂໍ້ພຣະທັມທີ່ໃຫ້ກຳລັງໃຈແທ້ໆ! ພວກເຮົາຈຶ່ງມີຄວາມຫວັງ ເພາະວ່າພຣະເຈົ້າຊົງຮູ້ເຫັນອະນາຄົດແລະພຣະອົງຊົງມີແຜນການອັນດີໄວ້ໃຫ້ພວກເຮົາ. ທີ່ກ່າວມານີ້ ບໍ່ໄດ້ໝາຍຄວາມວ່າພວກເຮົາຈະບໍ່ປະເຊີນກັບຄວາມເຈັບປວດ, ຄວາມຜິດຫວັງ, ແລະຄວາມລຳບາກຕ່າງໆ. ພວກເຮົາສາມາດປະເຊີນກັບສິ່ງເຫລົ່ານີ້ ດ້ວຍວ່າພຣະເຈົ້າຊົງສະຖິດຢູ່ກັບພວກເຮົາ ພຣະອົງຊົງຊ່ອຍພວກເຮົາໃນຂນະຢູ່ໃນຖ້າມກາງຄວາມລຳບາກ ຄວາມສັດຊື່ຂອງພຣະອົງຈະນຳພວກເຮົາໃຫ້ລຸລ່ວງໄປ.

(7) ເຫດໃດໂປໂລຈຶ່ງຮັບໄດ້? ເຫດໃດລາວຈຶ່ງສູ້ທົນຕໍ່ຄວາມລຳບາກທີ່ເກີດຂຶ້ນກັບລາວຢູ່ປະຈຳໄດ້? ລາວໄດ້ພົບຂໍ້ເລິກລັບຂອງການມີກຳລັງຂຶ້ນໃໝ່ໃນແຕ່ລະວັນຊຶ່ງຜູ້ປະກາດພຣະທັມເຢເຣມີຢາໄດ້ບັນທຶກໄວ້ໃນພຣະທັມ ເພງຄ່ຳຄວນ 3:21-23. "ແຕ່ວ່າຂ້ອຍນັ້ນຍັງມີຄວາມຫວັງ ເມື່ອຂ້ອຍຄິດເຖິງວ່າຍັງມີຢູ່ສິ່ງນື່ງ: ຄວາມຮັກຂອງພຣະຜູ້ເປັນເຈົ້າອັນບໍ່ສິ້ນສຸດເປັນ ແລະພຣະເມດຕາກໍຍັງດຳລົງຄົງຢູ່ ເຊິ່ງທຸກໆເຊົ້າກໍສົດຊື່ນເບີກບານ ແລະແນ່ນອນເໝືອນດັ່ງຕາເວັນຂຶ້ນ.

(8) ຄວາມເຊື່ອທີ່ບໍ່ສັ່ນຄອນຂອງໂປໂລໄດ້ຄ້ຳຈູນລາວໄວ້ໃນຍາມຖືກລຳບາກ (2 ໂກຣິນໂທ 4:13). ລາວບໍ່ເຄີຍສົງສັຍຄວາມສາມາດຂອງພຣະເຈົ້າ. ພຣະເຈົ້າຊົງສະແດງຣິດອຳນາດຂອງພຣະອົງ ແລະເປັນທີ່ໄວ້ວາງໃຈໄດ້ເໝືອນກັບທີ່ຜ່ານມາ ລາວມີຄວາມໝັ້ນໃຈວ່າພຣະອົງຈະຊົງທຳຢ່າງດຽວກັນກັບໃນປະຈຸບັນແລະອະນາຄົດ.

(9) ເຣື່ອງຂອງຊີວິດອັນຕລອດໄປເປັນນິດເປັນຄວາມຈິງໃນແນວຄິດຂອງໂປໂລ. ລາວເຊີດຊູຈິດໃຈຂອງລາວໃນ

ເຣື່ອງນີ້ແລະລາວຮັກສາໄວ້ເພື່ອບໍ່ໃຫ້ລາວໂສກເສົ້າ (4:14). ລາວຖືກນາບຄູ່ຈາກສັດຕຣູຂອງລາວຢູ່ຕລອດມາ ຈົນຜັກໃຫ້ລາວຮັບຮູ້ວ່າຄວາມຕາຍນັ້ນແຂນຄໍລາວທຸກບາດຍ່າງ. ບໍ່ວ່າລາວຈະຢູ່ໃນສະພາບກັນດານປານໃດກໍຕາມ ລາວຮູ້ແຈ້ງເຫັນຈິງໃນເຣື່ອງຊີວິດອັນຕລອດໄປເປັນນິດ. ລາວຮູ້ວ່າຢູ່ໃນໂລກນີ້ເປັນໂລກອັນຊົ່ວຄາວ ເມື່ອທຽບໃສ່ຊີວິດອັນຕລອດໄປເປັນນິດ. ລາວໄດ້ພິຈາຣະນາເບິ່ງແລ້ວ ການສູ້ທົນຕໍ່ຄວາມທຸກຢູ່ໃນໂລກນີ້ ເມື່ອທຽບກັບລາງວັນທີ່ຈະໄດ້ຮັບໃນແຜ່ນດິນສວັນແລ້ວກໍຫາທີ່ຈະທຽບບໍ່ໄດ້. ໃນຖານະລາວເປັນຟາຣີຊາຍ ລາວເຊື່ອວ່າມີໂອກາດເປັນຄືນມາຈາກຕາຍ ໃນຖານະເປັນຄຣິສຕຽນ ລາວມີຄວາມໝັ້ນໃຈເປັນອັນແນ່ນອນ.

<u>ວົງກວ້າງຂອງການຮັບໃຊ້ຂອງໂປໂລ</u> (4:15)

(10) ໂປໂລມີຈິດໃຈຂຍາຍວົງກວ້າງຂອງການຮັບໃຊ້. ຄັ້ງທໍາອິດ ລາວໄດ້ປະກາດເຣື່ອງຂອງພຣະຄຣິດໃນໂຮງທັມເທສນາໃນເມືອງ ດາມາເຊ ຫລັງຈາກລາວໄດ້ກັບໃຈຮັບເຊື່ອ (ກິຈການ 9:19-22). ລາວເທສນາໃນສິ່ງທີ່ລາວຮູ້: ພຣະເຢຊູເປັນບຸດຂອງພຣະເຈົ້າ. ເບິ່ງເໝືອນກັບວ່າລາວເລີ້ມຈາກເມືອງ ດາມາເຊ ຕໍ່ມາລາວກາຍເປັນຜູ້ປະກາດຂ່າວປະເສີດຜູ້ທໍາອິດທີ່ໄປທຸກຫົນທຸກແຫ່ງ.

ໃຫ້ເບິ່ງການເດີນທາງຂອງໂປໂລໃນແຜນທີ່ ລາວຈະເປັນຜູ້ບຸກເບີກໃນການເຜີຍແຜ່ຂ່າວປະເສີດ. ແຕ່ລະຄັ້ງຂອງການເດີນທາງ ລາວຈະໄປເຂດແດນໃຫມ່ໆ. ລາວຕັ້ງຄຣິສຕະຈັກໃນເມືອງ ຄາລາເຕັຽ, ແຂວງອາເຊັຽ, ມາເກໂດເນັຽ, ແລະອາຄາຢາ. ລາວຖືກທ້າທາຍຈາກໂລກທີ່ຍັງບໍ່ທັນໄດ້ຮັບເຊື່ອຢູ່ຕລອດມາ ຊຶ່ງເໜືອໄປຈາກສະຖານທີ່ບ່ອນຮັບໃຊ້ຂອງລາວ. ລາວໄດ້ເລືອກ ແລະອົບຮົມຄຣິສຕຽນຜູ້ທີ່ເຂັ້ມແຂງໃຫ້ຊ່ອຍລາວ ແລະໃຫ້ດໍາເນີນພາຣະກິດຂອງພຣະເຈົ້າສືບໄປ ຫລັງຈາກລາວຕາຍໄປ.

<u>ຄໍາຖາມ</u>

1. ເປັນຫຍັງໂປໂລຈຶ່ງປະກາດແລະສອນຕໍ່ໄປຢູ່ເລື້ອຍໆ ເຖິງແມ່ນວ່າລາວຈະຖືກຂົ່ມເຫງກໍຕາມ?

2. ທ່ານມີຂໍ້ຄວາມທີ່ຈະໃຫ້ກໍາລັງໃຈອັນໃດແດ່ຕື່ມເຂົ້າມາອີກນອກຈາກໄດ້ຮັບໃນບົດຮຽນນີ້ແລ້ວ?

3. ການເຜີຍແຜ່ຄຣິສຕະສາສນາຈະເປັນຢ່າງໃດ ຖ້າຫາກວ່າໂປໂລເຊົາໄປກ່ອນ?

# ບົດຮຽນທີ 5
# ມີຄວາມໝັ້ນໃຈໃນປະຈຸບັນແລະສືບໆໄປ

---

**ຂໍ້ພຣະຄັມພີສຳລັບບົດຮຽນ:** ຂ ໂກຣິນໂທ 4:16-5:10
**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ຂ ໂກຣິນໂທ 4:16-5:10
**ຈຸດສຳຄັນຂອງບົດຮຽນນີ້:** ດ້ວຍພະລັງຂອງພຣະເຈົ້າແລະພຣະວິນຍານຊົງເປັນເຄື່ອງມັດຈຳໄວ້ກັບພວກເຮົາ ພວກເຮົາຈຶ່ງສາມາດປະເຊີນກັບຄວາມຍາກລຳບາກໃນຊີວິດນີ້ ແລະເຖິງແມ່ນວ່າຄວາມຕາຍຈະຕາມມາກໍຕາມ ພວກເຮົາຍັງມີຄວາມໝັ້ນໃຈຢູ່ໃນພຣະເຈົ້າ.
**ຄຳຖາມເພື່ອການສຳຫລວດ:** ເມື່ອຊີວິດຖຸກຄາມແລະປະເຊີນກັບຄວາມຕາຍ ມີຄວາມຫວັງອັນໃດອີກແດ່?
**ຈຸດປະສົງຂອງບົດຮຽນນີ້:** ໄດ້ຮັບຮອງດ້ວຍຄວາມໝັ້ນໃຈໃນຄຳປະກັນຂອງພຣະເຈົ້າຊົງປະທານໃຫ້ ເພື່ອຈະໄປປະເຊີນກັບຄວາມຍາກລຳບາກໃນຊີວິດນີ້ ແລະເຖິງແມ່ນວ່າຄວາມຕາຍຈະຕາມມາກໍຕາມ.

## ບົດຮຽນ

### ຄຳນຳ
ເຖິງແມ່ນວ່າຜູ້ທີ່ເຊື່ອບໍ່ສາມາດຈະຫັນປ່ຽນອາຍຸຫລືຄວາມຕາຍໃຫ້ກັບຄືນມາໄດ້ກໍຕາມ, ແຕ່ພວກເຂົາສາມາດມີຊີວິດໃນທາງບວກແລະຮັບໃຊ້ຢ່າງເກີດຜົນໃນຂນະທີ່ຄອງຄອຍຈະໄປບ້ານແທ້ໃນສວັນ.

ມີຄຣິສຕຽນທີ່ມີຄວາມຫ້າວຫັນຄົນນຶ່ງທີ່ຂ້າພະເຈົ້າໄດ້ພົບ ລາວເປັນຜູ້ອາວຸໂສ ຊື່ຂອງລາວແມ່ນ ເດວິດ ບຸສ. ລາວເປັນສະມາຊິກທີ່ສັດຊື່ຕໍ່ໂບດໃນຂນະທີ່ຂ້າພະເຈົ້າເປັນສິດຍາພິບານຢູ່ທີ່ນັ້ນ. ລາວມາຮຽນພຣະຄັມພີແລະຮ້ອງເພງໃນຄະນະນັກຮ້ອງ. ຕໍ່ມາ ລາວເປັນຄົນພິການແລະລາວມີຄວາມລຳບາກຫລາຍໃນການໄປມາ, ແຕ່ລາວຍັງຫ້າວຫັນຢູ່ບໍ່ເຊົາໃນການເຂົ້າພາກສ່ວນໃນກິຈການຂອງໂບດ. ລາວບໍ່ເຄີຍຈົ່ມທຸກຈົ່ມຍາກກ່ຽວກັບບັນຫາໃນຮ່າງກາຍຂອງລາວ ລາວໄປມາຫລືວ່າເຮັດຫຍັງກໍຕາມ ລາວຈະໄປໄດ້ຊ້າກວ່າຄົນອື່ນ.

ໃນທີ່ສຸດ ວັນນັ້ນໄດ້ມາເຖິງ ລາວບໍ່ສາມາດມາໂບດໄດ້ອີກຕໍ່ໄປ. ຮ່າງກາຍຂອງລາວຊຸບໂຊມຫລາຍ ລາວຈຳເປັນໄດ້ໄປຢູ່ເຮືອນທີ່ມີຄົນເບິ່ງແຍງລາວ. ທຸກໆຄັ້ງທີ່ຂ້າພະເຈົ້າໄປຢາມລາວ ໜ້າຕາຂອງລາວເບີກບານຍິ້ມແຍ້ມໃສ່ແລະທັກທາຍດ້ວຍຄຳເວົ້າໃນທາງບວກຢູ່ສເມີ. ທຸກໆຄົນທີ່ທຳງານໃນບ່ອນເບິ່ງແຍງຜູ້ເຖົ້າຕ່າງກໍກ່າວເຖິງຄຸນລັກສະນະທີ່ໃຫ້ກຳລັງໃຈພວກເຂົາ. ລາວເປັນພຍານເຖິງເຣື່ອງພຣະເຢຊູໃຫ້ທຸກໆຄົນທີ່ພົບລາວ.

ວັນນຶ່ງເດວິດໄດ້ເວົ້າກັບຂ້າພະເຈົ້າວ່າ, "ອາຈານເອີຍ, ຂ້ອຍບໍ່ຮູ້ວ່າເປັນຫຍັງພຣະເຈົ້າຈຶ່ງປະຂ້ອຍໄວ້ຢູ່ໃນໂລກນີ້. ຄືງຈະຍັງມີອີກຄົນນຶ່ງຈຳເປັນຈະຕ້ອງໄດ້ຟັງຄຳພຍານເຣື່ອງພຣະເຢຊູນໍ." ເຖິງແມ່ນວ່າລາວລໍຄອຍຢາກຈະອອກຫວິດຮ່າງກາຍອັນພິການນີ້ ແລະຢາກຈະໄປບ້ານແທ້ຂອງລາວໃນສວັນກໍຕາມ, ແຕ່ລະວັນ ຊີວິດຂອງລາວທີ່ມີເຫລືອຢູ່ໃນໂລກ ລາວຢາກຈະເຮັດທຸກສິ່ງໃຫ້ເປັນທີ່ພໍພຣະທັຍຂອງອົງພຣະຜູ້ເປັນເຈົ້າ.

ໃນຂນະທີ່ພວກເຮົາສຶກສາຈົດໝາຍຂອງໂປໂລ ຂ ໂກຣິນໂທ ພວກເຮົາຈະໄດ້ຮຽນຮູ້ວ່າ ດ້ວຍພະລັງຂອງພຣະວິນຍານບໍຣິສຸດພວກເຮົາສາມາດມີຄວາມໝັ້ນຄົງຢູ່ໃນທາງບວກແລະເກີດໝາກອອກຜົນໃນຂນະທີ່ອາຍຸຂອງພວກເຮົາ

ແກ່ໂຕໄປເລື້ອຍໆແລະຄວາມຕາຍຈະມາເຖິງ.

**ພາຍນອກຊຸດໂຊມໃນຂນະທີ່ໃຈພາຍໃນກຳລັງຈະເຣີນຂຶ້ນ** (4:16-18)

ໂປໂລເລີ້ມຕົ້ນຈົດໝາຍຂອງລາວດ້ວຍຄຳວ່າ "ເຫດສັນນັ້ນ."ຄຳນີ້ເປັນຄຳແນະນຳພວກເຮົາໃຫ້ກັບໄປຫາຂໍ້ຄວາມຂອງລາວໃນ 4:1-15 ກ່ຽວກັບເຣື່ອງຄວາມສູ້ທົນຊີວິດຂອງຜູ້ທີ່ເຊື່ອ. ເຖິງແມ່ນວ່າຈະປະເຊີນສູ້ທົນກັບຄວາມລຳບາກກັບຊີວິດ ລາວຂຽນໄປຫາຜູ້ທີ່ເຊື່ອວ່າບໍ່ໃຫ້ "ທໍ້ຖອຍ" (4:1, 16).

ຄຳວ່າ "ທໍ້ຖອຍ" ໝາຍຄວາມວ່າຢ່າງໃດ? ໝາຍຄວາມວ່າຂາດກຳລັງໃຈ ຊຶ່ງເປັນເຫດໃຫ້ຂາດຄວາມກ້າຫານ. ແມ່ນອັນໃດທີ່ເຮັດໃຫ້ຜູ້ອ່ານຈົດໝາຍຂອງໂປໂລ "ທໍ້ຖອຍ"? ເຫດການສອງຢ່າງເປັນຕົ້ນເຫດ "ກາຍພາຍນອກ... ກຳລັງຊຸດໂຊມ" ແລະ "ການທຸກລຳບາກອັນເບົາບາງທີ່ມີຢູ່ເປັນຊົ່ວຂນະນຶ່ງ" (4:16-17).

ຜູ້ໃຫຍ່ທຸກຄົນເຂົ້າໃຈໃນຄວາມໝາຍຂອງຄຳວ່າ "ຊຸດໂຊມ". ໝາຍຄວາມວ່າຮ່າງກາຍນີ້ເຖົ້າແກ່ລົງແລະອ່ອນແຮງ. ເຖິງແມ່ນວ່າຄົນເຮົາໃນສມັຍນີ້ມີອາຍຸຍືນກວ່າເກົ່າ ແຕ່ວ່າຄວາມຕາຍນັ້ນຍັງຢູ່ໃນຣະດັບ 100% ດັ່ງເດີມ. ຂ້າພະເຈົ້າຈຳໄດ້ວ່າ ມີແມ່ຕູ້ອາຍຸ 98 ປີຜູ້ນຶ່ງຖືກຖາມວ່າ ແມ່ຕູ້ມັກອັນໃດກັບອາຍຸ 98 ປີຂອງແມ່ຕູ້. ເພິ່ນຕອບເຂົາວ່າ "ບໍ່ຖືກຄວາມຜັກດັນຈາກຜູ້ໃດ." ແລ້ວເພິ່ນຕອບໄປຕື່ມອີກວ່າ "ບໍ່ມີຜູ້ໃດມາຜັກດັນແມ່ຕູ້ໄດ້ອີກ".

ຄວາມ "ຊຸດໂຊມ" ເປັນໄປຕາມທັມຊາດຂອງອາຍຸການ, ແຕ່ວ່າ ການທຸກລຳບາກທີ່ຜັກດັນໃຫ້ເກີດຄວາມທໍ້ຖອຍໄດ້ໄວໄປກວ່ານັ້ນຊຶ່ງໂປໂລໄດ້ປະເຊີນ. ລາວຖືກ "ຄວາມລຳບາກອ້ອມຂ້າງ", "ຖືກສັດຕຣູໄລ່", ແລະ "ຖືກຕີລົ້ມ" (4:9).

ລາວບັນລະຍາຍວ່າ "ການທຸກລຳບາກອັນເບົາບາງທີ່ມີຢູ່ຊົ່ວຂນະນຶ່ງ" ເມື່ອທຽບກັບ "ສະງ່າຣາສີຢ່າງຖາວອນຫລາຍ" ຫາທີ່ປຽບບໍ່ໄດ້. ຜູ້ຂຽນປື້ມພຣະທັມ ເຮັບເຣີ ໄດ້ບັນທຶກໄວ້ວ່າ ພຣະເຢຊູ "ໄດ້ຊົງອົດທົນຕໍ່ໄມ້ກາງແຂນ ເພາະເຫັນແກ່ຄວາມຍິນດີທີ່ຕັ້ງໄວ້ຕໍ່ໜ້າພຣະອົງ" (ເຮັບເຣີ 12:2). ພຣະອົງບໍ່ເຄີຍກ່າວຕໍ່ສາວົກຂອງພຣະອົງ ເຖິງຄວາມຕາຍຂອງພຣະອົງ ໂດຍປາສຈາກການຄືນມາຈາກຕາຍຈັກເທື່ອ. ຄວາມຕາຍຂອງພຣະອົງໄດ້ນຳຄວາມສຳເຣັດມາໃຫ້ພະອົງຊຶ່ງມີຄຸນຄ່າຫລາຍກວ່າຄວາມເຈັບປວດແລະການທຸກລຳບາກ. ຄວາມສຳເຣັດໃຫ້ກັບຄວາມລອດພົ້ນຂອງພວກເຮົາ.

ຄວາມທຸກລຳບາກສາມາດນຳພວກເຮົາລົງ ຫລື ຍົກພວກເຮົາຂຶ້ນກໍໄດ້. ບາງຄັ້ງຄວາມລຳບາກເປັນເຫດໃຫ້ຮ່າງກາຍຂອງພວກເຮົາແກ່ໂຕໄວ ຫລືອ່ອນແຮງລົງ ຄວາມຈິງແລ້ວເຮັດໃຫ້ຈິດວິນຍານຈະເຣີນເຕີບໂຕຂຶ້ນ. ສຳລັບໂປໂລນັ້ນ "ກາຍພາຍນອກຊຸດໂຊມລົງ" ແຕ່ວ່າ "ໃຈພາຍໃນນັ້ນກໍຍັງຈະເຣີນຂຶ້ນໃໝ່ທຸກໆວັນ" (2 ໂກຣິນໂທ 4:16).

ໂປໂລໄດ້ບັນທຶກໄວ້ວ່າ ມັນສຳຄັນຫລາຍສຳລັບຜູ້ທີ່ເຊື່ອຈະຕ້ອງ "ຈະເຣີນຂຶ້ນໃໝ່ທຸກໆວັນ". ຜູ້ທີ່ເຊື່ອບໍ່ມີຣິດອຳນາດອັນໃດເລີຍຈະເຮັດໃຫ້ຕົນເອງຈະເຣີນຂຶ້ນໃໝ່. ມີສິ່ງນຶ່ງ ຫລື ມີຜູ້ນຶ່ງທີ່ສາມາດເຮັດໃຫ້ຜູ້ທີ່ເຊື່ອຈະເຣີນຂຶ້ນໃໝ່ ໃນຂນະທີ່ລາວ "ຊຸດໂຊມລົງ". ຜູ້ນຶ່ງນັ້ນ ແມ່ນພຣະເຢຊູ ຄຣິດນັ້ນເອງ ໂດຍຣິດອຳນາດຂອງພຣະວິນຍານບໍຣິສຸດ.

ຜູ້ທີ່ເຊື່ອພາຍນອກຊຸດໂຊມໃນຂນະທີ່ໃຈພາຍໃນກຳລັງຈະເຣີນຂຶ້ນ ດ້ວຍວ່າມີນິມິດເຫັນຊີວິດແລະຄວາມຕາຍແຕກຕ່າງໄປຈາກຄົນທັມດາ. ໂປໂລໄດ້ກ່າວໄວ້ວ່າ ພວກເຮົາ "ເຫັນແກ່ສິ່ງທີ່ຕາບໍ່ເຫັນ" (4:18). ຜູ້ຂຽນປື້ມພຣະທັມ ເຮັບເຣີ ໄດ້ບັນທຶກກ່ຽວກັບຊີວິດຂອງໂມເຊ ໂດຍກ່າວວ່າ ໂມເຊເປັນຜູ້ນຳທີ່ໄດ້ຮັບຄວາມສຳເຣັດ ເນື່ອງຈາກວ່າ ລາວມີນິມິດດັ່ງທີ່ໄດ້ກ່າວມານີ້ "ເພາະເພິ່ນໝັ້ນໃຈເໝືອນກັບວ່າໄດ້ເຫັນພຣະອົງຜູ້ບໍ່ຊົງປາກົດແກ່ຕາ" (ເຮັບເຣີ 11:27).

ຜູ້ທີ່ໃຈພາຍໃນກຳລັງຈະເຣີນຂຶ້ນໃນຂນະທີ່ພາຍນອກຊຸດໂຊມລົງຈະຕ້ອງມີນິມິດທີ່ຈະເຣີນຂຶ້ນ ບໍ່ແມ່ນນິມິດທີ່ກຳລັງ

ຕາຍລົງ. ລາວຈະຕ້ອງມີພາບພົດອັນຖືກຕ້ອງກ່ຽວກັບສິ່ງຊົ່ວຄາວ ຊຶ່ງນຳໄປເຖິງແກ່ຄວາມຊຸດໂຊມລົງແລະຕາຍໄປ. ສຳລັບສິ່ງອັນຕລອດໄປເປັນນິດ ເປັນສິ່ງຝ່າຍຈິດວິນຍານ. ອາຍຸແລະຄວາມຊຸດໂຊມບໍ່ຈຳເປັນຈະຕ້ອງນຳໃຫ້ພວກເຮົາຫ່າງຈາກພຣະເຈົ້າ ແຕ່ວ່າສິ່ງເຫລົ່ານີ້ສາມາດນຳໃຫ້ພວກເຮົາໃກ້ສິດພຣະອົງ. ໃຫ້ພວກເຮົາຫ່າງໜີໄປຈາກສິ່ງຊົ່ວຄາວ ແລ້ວໄປຫາສິ່ງອັນຕລອດໄປເປັນນິດ. ພວກເຮົາຈຶ່ງຈະເຣີ່ມຂຶ້ນໃຈພາຍໃນ ໃນຂນະທີ່ພາຍນອກຊຸດໂຊມລົງ.

<u>ໃຊ້ຊີວິດຢູ່ໃນປະຈຸບັນໃນຂນະທີ່ຄອງຄອຍເຖິງອະນາຄົດ</u> (5:1-8)
ມີຊາຍຄົນນຶ່ງ ລາວມີຄວາມຂັດສົນແລະກະວົນກະວາຍ ແລ້ວຈົ່ມວ່າ "ຂ້ອຍບໍ່ຢາກຟັງ ກ່ຽວກັບເຣື່ອງເຂົ້າໜົມປາດຍັງຢູ່ໃນສວັນ ຫວານປານໃດກໍ່ຊ່າງ ແຕ່ຂ້ອຍຢາກຟັງກ່ຽວກັບສິ່ງທີ່ຕາຂ້ອຍເຫັນ ໃນຂນະທີ່ຂ້ອຍຍັງມີຊີວິດຢູ່ນີ້." ໂປໂລບໍ່ພຽງແຕ່ໝັ້ນໃຈໃນສິ່ງທີ່ຢູ່ໃນໂລກປະຈຸບັນນີ້ ແຕ່ລາວຍັງຄອງຄອຍຫາສິ່ງທີ່ມາຈາກສວັນຊັ້ນຟ້າດ້ວຍ.

ໃນ 5:1 ໂປໂລໄດ້ສົມທຽບຄວາມແຕກຕ່າງລະຫວ່າງຮ່າງກາຍປະຈຸບັນກັບຮ່າງກາຍໃນອະນາຄົດຂອງແຜ່ນດິນສວັນ. ລາວປຽບທຽບຮ່າງກາຍໃນໂລກນີ້ເປັນເໝືອນ "ເຮືອນ" ແລະຮ່າງກາຍໃນສວັນເປັນ "ບ່ອນອາສັຍຢູ່ຊຶ່ງພຣະເຈົ້າຊົງໂຜດປະທານໃຫ້ ... ຕັ້ງຢູ່ຖາວອນເປັນນິດ". ສຳລັບຮ່າງກາຍໃນໂລກນີ້ ພາສາອັງກິດໃຊ້ຄຳວ່າ "tent" ແປ່ວ່າ "ຜາມ"
ບໍ່ແມ່ນເຮືອນ ເພາະວ່າ ພວກເຮົາປຸກຜາມແມ່ນໃຊ້ຊົ່ວຄາວເທົ່ານັ້ນ. ສຳລັບຮ່າງກາຍໃນສວັນ ພາສາອັງກິດໃຊ້ຄຳວ່າ "building" ແປ່ວ່າ "ຕຶກ" ພວກເຮົາກໍ່ຕຶກແມ່ນໃຊ້ເປັນເວລາຫລາຍຊົ່ວອາຍຸຄົນ. ຮ່າງກາຍໃນໂລກນີ້ເປັນພຽງຢູ່ຊົ່ວຄາວເທົ່ານັ້ນແລ້ວກໍຖືກມ້າງລົງ ແຕ່ວ່າ ຮ່າງກາຍໃນສວັນເປັນອັນຕລອດໄປເປັນນິດ ຊຶ່ງບໍ່ໄດ້ຖືກສ້າງຂຶ້ນດ້ວຍມືມະນຸດອີກດ້ວຍ.

ພວກເຮົາມັກຈະເວົ້າກັນວ່າ "ມີຊີວິດ" ໃນປະຈຸບັນ. ໂປໂລກ່າວວ່າຊີວິດທີ່ "ຕາຍເປັນ" (5:4). ລາວເຫັນວ່າ ຊີວິດທີ່ "ຕາຍເປັນ" ນີ້ໄດ້ນຳໄປສູ່ຄວາມຕາຍ. ແຕ່ລາວໄດ້ອະທິບາຍວ່າ ອັນຕລອດໄປເປັນນິດນັ້ນ ແມ່ນ "ຊີວິດ". ອັນຕລອດໄປເປັນນິດເປັນຊີວິດ ເພາະວ່າ "ຮ່າງກາຍທີ່ຕາຍເປັນນີ້ຈະໄດ້ຖືກຖ້ວມລົ້ນດ້ວຍຊີວິດ" (5:4). ສະນັ້ນ ໃນຂນະທີ່ປໂລຢູ່ໃນປະຈຸບັນ ລາວຄອງຄອຍເຖິງອະນາຄົດ.

ຄວາມຄິດຂອງໂປໂລກ່ຽວກັບເຣື່ອງຮ່າງກາຍໃໝ່ ແລະ ລາວກ່າວຕໍ່ໄປວ່າ "ເຮົາຈະບໍ່ປາກົດເໝືອນປະເປືອຍ" ເຣື່ອງນີ້ເປັນເຣື່ອງລຶກລັບສຳລັບຊາວກຣີກ ໃນເມືອງໂກຣິນໂທ (5:3). ຊາວກຣີກເຊື່ອວ່າ ຫລັງຈາກຄົນຕາຍໄປວິນຍານນັ້ນກໍອອກຈາກຮ່າງກາຍໄປ. ວິນຍານນັ້ນກໍກາຍເປັນສິ່ງສັກສິດ ຫລື ເທບພຣະເຈົ້າ (divine). ໂປໂລກ່າວວ່າ
ໃນເມື່ອລາວ
ຕາຍໄປ ລາວກໍຈະມີຮ່າງກາຍຊຶ່ງພຣະເຈົ້າເປັນຜູ້ຊົງປະທານໃຫ້ ແລະເປັນຮ່າງກາຍອັນຕລອດໄປ, ບໍ່ແມ່ນຮ່າງກາຍຊົ່ວຄາວ ເໝືອນກັບຮ່າງກາຍໃນປະຈຸບັນ. ລາວຈະບໍ່ເດີນໄປມາໃນສວັນ "ປະເປືອຍ" ເໝືອນກັບວິນຍານທີ່ບໍ່ມີກາຍ (disembodied soul).

ໃນພຣະທັມ ຟີລິບປອຍ 1:21-23, ໂປໂລໄດ້ສະແດງຄວາມຄິດເຫັນອັນດຽວກັນ ກ່ຽວກັບເຣື່ອງໃຊ້ຊີວິດຢູ່ໃນປະຈຸບັນໃນຂນະທີ່ຄອງຄອຍເຖິງອະນາຄົດ. ລາວໄດ້ຂຽນໄວ້ໃນຂໍ້ທີ 21, "ເພາະວ່າຖ້າເຮົາມີຊີວິດພຣະຄຣິດເປັນຊີວິດນັ້ນ ຖ້າເຮົາຕາຍກໍເປັນປະໂຍດແກ່ເຮົາ." ຊີວິດອັນຕລອດໄປເປັນນິດສຳລັບໂປໂລແລ້ວ ບໍ່ແມ່ນພຽງແຕ່ຈຳນວນຂອງຊີວິດທີ່ມີເທົ່ານັ້ນ ແຕ່ຄຸນນະພາບຂອງຊີວິດອີກດ້ວຍ. ຊີວິດອັນຕລອດໄປນິດຂອງພຣະເຢຊູໄດ້ເຂົ້າມາຫາໂປໂລຕອນລາວເດີນທາງໄປເມືອງດາມາເຊ. ລາວໄດ້ຮັບປະສົບການຊີວິດອັນຕລອດໄປເປັນນິດໃນຂນະທີ່ຍັງມີຮ່າງກາຍໃນໂລກນີ້ ແລະ

ລາວໄດ້ຮັບປະສົບການອັນຕລອດໄປເປັນນິດອັນຄົບບໍຣິບູນໃນຮ່າງກາຍຂອງສວັນ. ຄວາມຕາຍບໍ່ສາມາດຈະທຳໃຫ້ປະສົບການຂອງໂປໂລກັບພຣະເຈົ້າໃນຊີວິດນີ້ແຕກຫັກໄປ.

ແມ່ນພຣະເຈົ້າຊົງເປັນຜູ້ຈັດແຈງໃຫ້ໂປໂລໃນການປ່ຽນແປງ ແລະພຣະອົງໄດ້ຊົງໂຜດປະທານພຣະວິນຍານເປັນເຄື່ອງມັດຈຳໄວ້ກັບລາວອີກ (5:5). ດ້ວຍເຫດນັ້ນລາວຈຶ່ງກ່າວດ້ວຍຄວາມໝັ້ນໃຈຢູ່ສເມີ (5:6).

ໃນຂໍ້ທີ 7 ໂປໂລໄດ້ກ່າວວ່າ ຜູ້ທີ່ເຊື່ອ "ດຳເນີນໄປຕາມຄວາມເຊື່ອ ບໍ່ໃຊ່ຕາມທີ່ຕາເຫັນ." ພວກເຮົາຮູ້ວ່າ ພວກເຮົາມີໃນຊີວິດນີ້ ແລະພວກເຮົາຮູ້ວ່າ ພວກເຮົາຖືກສັນຍາໄວ້ແລ້ວໃນຊີວິດຄັ້ງໜ້າ. ພວກເຮົາໃຊ້ຊີວິດຢູ່ໃນປະຈຸບັນໃນຂນະທີ່ຄອງຄອຍເຖິງອະນາຄົດ.

<u>**ໃຫ້ເປັນທີ່ພໍພຣະທັຍຂອງພຣະເຈົ້າໃນຂນະທີ່ເຖິງເວລາອັນຄວນ**</u> (5:9-10)
ໂປໂລເນັ້ນໜັກໃນຂໍ້ທີ 9 ວ່າ "ເຮົາກໍຈະພຍາຍາມເຮັດໃຫ້ເປັນທີ່ຊອບພຣະທັຍຂອງພຣະອົງ." ສິ່ງສຳຄັນກ່ອນອື່ນທັງໝົດລາວຕ້ອງເຮັດໃຫ້ພໍພຣະທັຍພຣະເຈົ້າ. ຕາມຄວາມຈິງແລ້ວ ລາວໄດ້ບັນທຶກໄວ້ວ່າ ອັນນີ້ແມ່ນ "ເປົ້າໝາຍ" ຂອງລາວ. ລາວເຄີຍກ່າວໄວ້ວ່າ ລາວຖືກປະກັນໄດ້ຮັບຮ່າງກາຍສວັນແລະເຮືອນໃນສວັນ, ແຕ່ວ່າ ຫລັງຈາກລາວໄດ້ຮັບສິ່ງເຫລົ່ານີ້ແລ້ວ ລາວບໍ່ໄດ້ສວຍໂອກາດເຮັດຕາມໃຈຂອງລາວ. ລາວຮູ້ແກ່ໃຈວ່າ ຜູ້ທີ່ເຊື່ອຈະຕ້ອງຮັບຜິດຊອບ ເພື່ອຈະໃຫ້ການໃນສິ່ງທີ່ຕົນເຮັດໄປ.

ໂປໂລເຄີຍຂຽນໄວ້ກ່ຽວກັບເຣື່ອງຮັບຜິດຊອບ ເພື່ອໃຫ້ການໃນສິ່ງທີ່ເຮັດໄປ ໃນພຣະທັມ 1 ໂກຣິນໂທ (1 ໂກຣິນໂທ 3:10-15). ໃນພຣະທັມຕອນນັ້ນ ລາວໃຊ້ເຣື່ອງການສ້າງຕຶກດ້ວຍວັດຖຸປະເພດແຕກຕ່າງກັນ. ຊີວິດທີ່ສ້າງຂຶ້ນດ້ວຍການກະທຳທີ່ຊອບພຣະທັຍພຣະເຈົ້າປຽບເຫມືອນເອົາຄຳ, ເອົາເງິນ, ເອົາເພັດພອຍມາກໍ່ຂຶ້ນເທິງຮາກນັ້ນ. ຊີວິດທີ່ສ້າງຂຶ້ນດ້ວຍການກະທຳທີ່ບໍ່ຊອບພຣະທັຍພຣະເຈົ້າປຽບເຫມືອນເອົາໄມ້, ເອົາຫຍ້າແຫ້ງ, ເອົາເຟືອງກໍດີມາກໍ່ຂຶ້ນ. ລາວໄດ້ສອນໄປວ່າ ວັນນຶ່ງຈະມາເຖິງຊີວິດຂອງຜູ້ທີ່ເຊື່ອທຸກໆຄົນ ການກະທຳຂອງພວກເຂົາໃນໂລກນີ້ຈະຖືກຕັດສິນ. ການກະທຳຂອງຜູ້ທີ່ຊອບພຣະທັຍພຣະເຈົ້າເທົ່ານັ້ນຈຶ່ງຈະຄົງທົນເພື່ອການຕລອດໄປເປັນນິດ.

ຫລາຍປີຜ່ານມາແລ້ວ ຂ້າພະເຈົ້າໄດ້ຖືກຮ້ອງຂໍໃຫ້ປະກອບພິທີສົ່ງສະການໃຫ້ກັບອາຈານຝຶກຫັດກິລາຄົນນຶ່ງ. ລາວເຄີຍເປັນອາຈານຝຶກຫັດ (football) ຂອງຂ້າພະເຈົ້າເອງໃນສມັຍຢູ່ໃນມະຫາວິທະຍາລັຍ. ຕໍ່ມາລາວເປັນເພື່ອນຮັກແພງກັບຂ້າພະເຈົ້າ. ເມື່ອລາວມີຊີວິດຢູ່ລາວບອກຂ້າພະເຈົ້າເລື້ອຍໆວ່າ ຖ້າລາວຕາຍກ່ອນຂໍໃຫ້ຂ້າພະເຈົ້າປະກອບພິທີໃຫ້ລາວເດີ. ໃນພິທີນັ້ນ ຂ້າພະເຈົ້າໄດ້ເລົ່າເຣື່ອງປະສົບການຂອງເພື່ອນຄົນນີ້ໃຫ້ຜູ້ທີ່ມາສົ່ງສະການຟັງວ່າ ລາວເປັນຄົນເອົາການເອົາງານຫລາຍ. ລາວເຮັດປະທຸບປະທາກັບພວກນັກກິລາຂອງລາວ ເພື່ອຈະໃຫ້ນັກກິລາຂອງລາວເປັນຄົນສູ້ທົນ. ເຖິງແມ່ນວ່າລາວຈະປະທຸບປະທາເທົ່າໃດໃນເວລາຊ້ອມ, ແຕ່ກ່ອນຈະຈາກໄປທຸກໆເທື່ອລາວຈະກອດພວກຂ້າເຈົ້າ ເພື່ອສະແດງໃຫ້ພວກຂ້າພະເຈົ້າເຫັນວ່າ ລາວຮັກພວກຂ້າພະເຈົ້າ. ລາວໃຫ້ຄວາມໝັ້ນໃຈແກ່ພວກຂ້າພະເຈົ້າ, ເຖິງແມ່ນວ່າ ລາວຈະຕັດສິນການກະທຳຂອງພວກຂ້າພະເຈົ້າ, ແຕ່ລາວຮັກພວກຂ້າພະເຈົ້າແລະຮັບຮູ້ພວກຂ້າພະເຈົ້າຢູ່ສເມີ.

ໂປໂລອະນຸຍາດໃຫ້ການກະທຳຂອງລາວຕິດຕາມຫລັກທັມສອງຢ່າງ: ການຕັດສິນຂອງພຣະເຈົ້າແລະຄວາມຮັກຂອງພຣະເຈົ້າ.

<u>**ຄຳຖາມ**</u>

1. ແມ່ນຫຍັງທີ່ເຮັດໃຫ້ຈິດໃຈຂອງທ່ານ "ທໍ້ຖອຍ"?

໒. ພຣະເຈົ້າຊົງເຮັດໃຫ້ໃຈພາຍໃນຂອງທ່ານຈະເຣີນຂຶ້ນແຕ່ລະວັນດ້ວຍທິດທາງຢ່າງໃດ?

3. ທ່ານປັກຕາຂອງທ່ານໃສ່ສິ່ງທີ່ຕາບໍ່ເຫັນໄດ້ຢ່າງໃດ?

4. ມີອັນໃດແດ່ທີ່ເຮັດໃຫ້ຊີວິດນີ້ເປັນທີ່ຊອບພຣະທັຍພຣະເຈົ້າ?

# ບົດຮຽນທີ 6
# ໄດ້ຮັບແຮງຈູງໃຈໃຫ້ຮັບໃຊ້

---

**ຂໍ້ພຣະຄັມພີສຳລັບບົດຮຽນ:** 2 ໂກຣິນໂທ 5:11-21
**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** 2 ໂກຣິນໂທ 5:11-21
**ຈຸດສຳຄັນຂອງບົດຮຽນນີ້:** ມີອັນໃດແດ່ທີ່ພຣະເຈົ້າໄດ້ກະທຳເພື່ອພວກເຮົາໃນພຣະຄຣິດຈົນເຖິງຂັ້ນເປັນແຮງຈູງໃຈໃຫ້ພວກເຮົາຮັບໃຊ້.
**ຄຳຖາມເພື່ອການສຳຫລວດ:** ແມ່ນອັນໃດເປັນແຮງຈູງໃຈຂອງທ່ານ?
**ຈຸດປະສົງຂອງບົດຮຽນນີ້:** ໃຫ້ຕັດສິນໃຈໃນທິດທາງທີ່ຂ້າພະເຈົ້າຈະຕອບສນອງຕໍ່ແຮງຈູງໃຈຈາກພຣະເຈົ້າໃຫ້ຮັບໃຊ້.

## ບົດຮຽນ

### ຄຳນຳ

ໂປໂລໄດ້ຍ້ອງຍໍພຣະຄຣິດ ບໍ່ແມ່ນຕົວລາວເອງຕໍ່ຜູ້ທີ່ເຊື່ອໃນເມືອງໂກຣິນໂທ. ລາວເລ່ງລັດພວກເຂົາໃຫ້ມີແຮງຈູງໃຈໄປບອກຄວາມຮັກຂອງພຣະຄຣິດກັບຄົນອື່ນ, ໃນເມື່ອພວກເຂົາຖືກສ້າງຂຶ້ນໃຫມ່ແລ້ວ ພວກເຂົາຈະບໍ່ໃຊ້ຊີວິດເພື່ອຕົວຂອງພວກເຂົາເອງອີກຕໍ່ໄປ ແຕ່ເພື່ອພຣະຄຣິດ.

ບາງຄັ້ງພວກເຮົາເວົ້າວ່າ, ຄົນນັ້ນຂາດແຮງຈູງໃຈ. ພວກເຮົາຫມາຍຄວາມວ່າຢ່າງໃດ? ພວກເຮົາຫມາຍຄວາມວ່າຄົນນັ້ນຂີ້ຄ້ານ ແຕ່ພວກເຮົາຈະບໍ່ເວົ້າໃສ່ຕົວເຮົາເອງຢ່າງນັ້ນ. ຖ້າເບິ່ງໃນທາງບວກ, ຕາມຄວາມຄິດຂອງພວກເຮົາຄົນຜູ້ນັ້ນລາວບໍ່ເຫັນວ່າມີເຫດຜົນທີ່ດີພຽງພໍທີ່ຈະໃຫ້ລາວບໍ່ເຮັດອັນໃດອັນນຶ່ງ. ໃນພຣະທັມ 2 ໂກຣິນໂທ ໄດ້ເຕືອນພວກເຮົາວ່າຄຣິສຕຽນມີເຫດຜົນຫລວງຫລາຍໃຫ້ຮັບໃຊ້. ໂປໂລກ່າວວ່າ ເຖິງເວລາແລ້ວທີ່ຈະໄດ້ຮັບແຮງຈູງໃຈ.

### ໄດ້ຮັບແຮງຈູງໃຈດ້ວຍວ່າມີໃຈສຳນຶກຜິດແລະຊອບຕໍ່ພຣະເຈົ້າແລະຄົນອື່ນໆ (5:11-13)

ຫລັງຈາກໂປໂລໄດ້ມາຮູ້ຈັກກັບພຣະເຢຊູທາງສ່ວນຕົວ, ລາວເຂົ້າໃຈດີ ລາວຄວນຈະມີໃຈສຳນຶກຜິດແລະຊອບຕໍ່ພຣະເຢຊູຕລອດໄປ. ຄວາມຮູ້ດັ່ງກ່າວເປັນແຮງຈູງໃຈລາວບໍ່ພຽງແຕ່ໃຊ້ຊີວິດໃຫ້ເປັນທີ່ຊອບພຣະທັຍພຣະເຈົ້າເທົ່ານັ້ນ, ແຕ່ຍັງ "ຊັກຊວນ" ຄົນທັງຫລາຍໃຫ້ມາຮັບເອົາພຣະເຢຊູແລະຢູ່ເພື່ອພຣະອົງ.

ຄວາມເຂົ້າໃຈຂອງໂປໂລກ່ຽວກັບມີໃຈສຳນຶກຜິດແລະຊອບໄດ້ສະແດງອອກໃນຄຳເວົ້າຂອງລາວ "ເຮົາຮູ້ຈັກຄວາມຢຳເກງອົງພຣະຜູ້ເປັນເຈົ້າ" (5:11). ຄຳວ່າ "ຢຳເກງ" ບໍ່ໄດ້ຫມາຍຄວາມວ່າມີຄວາມຢ້ານ, ແຕ່ເປັນການໃຫ້ກຽດ. ເມື່ອມີຄວາມ "ຢຳເກງ" ກໍຈະບໍ່ເຮັດອັນໃດອັນນຶ່ງໃຫ້ຜູ້ທີ່ຮັກນັ້ນຕ້ອງອຶກອັກ. ເປັນຄຳດຽວກັນທີ່ແປອອກຈາກພາສາກຣີກ "ຄວາມໂຄຣົບ" ໃນພຣະທັມ 1 ເປໂຕ 2:18, "ທ່ານທັງຫລາຍທີ່ເປັນຜູ້ຮັບໃຊ້ ຈົ່ງຍອມຟັງນາຍຂອງຕົນດ້ວຍຄວາມໂຄຣົບທຸກຢ່າງ" ໂປໂລໃຫ້ຄວາມໂຄຣົບຕໍ່ອຳນາດຂອງພຣະເຈົ້າ. ລາວບໍ່ພຽງແຕ່ຢູ່ໃຕ້ການເບິ່ງແຍງຂອງພຣະເຈົ້າເທົ່ານັ້ນ, ແຕ່ລາວຍັງຢູ່ໃຕ້ຣິດອຳນາດຂອງພຣະອົງອີກດ້ວຍ. ລາວໄດ້ຂຽນໄວ້ວ່າ "ທຸກຄົນຈະຕ້ອງປາກົດຕົວຕໍ່ຫນ້າບັນລັງພິພາກສາຂອງພຣະຄຣິດ" ເພື່ອຈະໃຫ້ການແລ້ວແຕ່ຈະດີຫລືຊົ່ວ (2 ໂກຣິນໂທ 5:10). ລາວມີຄວາມຢຳເກງຕໍ່ພຣະເຈົ້າຫລາຍ ຈຶ່ງເປັນແຮງຈູງໃຈລາວໃຫ້ໃຊ້ຊີວິດອັນເປັນທີ່ພໍພຣະທັຍພຣະເຈົ້າ. ໃຫ້ອ່ານພຣະທັມ ສຸພາສິດ 9:10; 19:23.

ໂປໂລຮູ້ສຶກວ່າໜ້າທີ່ຮັບຜິດຊອບຂອງລາວຕໍ່ພຣະເຈົ້າໄດ້ແຜ່ກວ້າງອອກໄປຫາຄົນອື່ນ. ໃນພຣະທັມ 2 ໂກຣິນໂທ 5:11-13, ລາວໄດ້ອະທິບາຍວ່າ ລາວບໍ່ໄດ້ພຍາຍາມ "ຍ້ອງຍໍ" ຕົວລາວເອງ, ແຕ່ລາວເປັນທີ່ໃຫ້ຊາວໂກຣິນໂທເຫັນພຣະເຈົ້າໂດຍຜ່ານທາງລາວ, ເພື່ອເປັນການຊັກຊວນຄົນອື່ນໃຫ້ມາຮັບເອົາພຣະເຢຊູເປັນພຣະຜູ້ໄຖ່. ລາວຮູ້ວ່າບໍ່ແມ່ນແຕ່ລາວເທົ່ານັ້ນຈະຕ້ອງປາກົດຕົວຕໍ່ໜ້າບັນລັງພິພາກສາຂອງພຣະຄຣິດ, ແຕ່ທຸກໆຄົນກໍເຊັ່ນກັນ (5:10).

ການຊັກຊວນຂອງໂປໂລໄດ້ເຮັດໃຫ້ບາງຄົນຄິດວ່າລາວເປັນຄົນເສັຽຈິດ (5:13; ໃຫ້ເບິ່ງພຣະທັມ ກິຈການ 26:24). ເຖິງຢ່າງໃດກໍຕາມ ລາວກໍໄດ້ບັນທຶກປະສົບການສ່ວນຕົວຝ່າຍຈິດວິນຍານໃນພຣະທັມ 1 ໂກຣິນໂທ ໄວ້ແລ້ວ (1 ໂກຣິນໂທ 4:18). ລາວໄດ້ບັນທຶກຕື່ມອີກໃນ 2 ໂກຣິນໂທ (2 ໂກຣິນໂທ 12:1-7). ປະສົບການສ່ວນຕົວອັນຣຸນແຮງເປັນຜົນສະທ້ອນໃຫ້ມີຄວາມສັມພັນສ່ວນຕົວກັບພຣະເຈົ້າ. ແຕ່ລາວກ່າວວ່າພາຣະກິດຂອງລາວກັບຊາວໂກຣິນໂທ, ລາວມີເຫດແລະຜົນ. ລາວມີສະຕິດີສຳລັບພວກເຂົາ.

ໃຊ້ຊີວິດໃຫ້ເປັນທີ່ພໍພຣະທັຍພຣະເຈົ້າອາດຈະເປັນເຫດໃຫ້ຄົນອື່ນຄິດວ່າພວກເຮົາເປັນບ້າ. ແຕ່ເມື່ອຮູ້ວ່າພຣະເຢຊູກາງຕໍ່ພວກເຮົາ ກໍຄວນຈະເປັນແຮງຈູງໃຈໃຫ້ພວກເຮົາດຳເນີນຊີວິດຕາມພຣະປະສົງຂອງພຣະອົງ. ແລະຮູ້ອີກວ່າຄົນອື່ນຈະຕ້ອງໃຫ້ການຕໍ່ພຣະອົງສຳລັບຊີວິດຂອງພວກເຂົາ ຈຶ່ງເປັນແຮງຈູງໃຈໃຫ້ພວກເຮົາເວົ້າເຣື່ອງຂ່າວປະເສີດຂອງພຣະອົງໃຫ້ພວກເຂົາຟັງຢ່າງແຈ່ມແຈ້ງແລະມີເຫດແລະຜົນ.

<u>ໄດ້ຮັບແຮງຈູງໃຈດ້ວຍຄວາມຮັກຂອງພຣະຄຣິດ</u> (5:14-17)

ເມື່ອໂປໂລໄດ້ຂຽນກ່ຽວກັບເຣື່ອງແຮງຈູງໃຈເຖິງຄວາມຮັກຂອງພຣະຄຣິດ, ລາວໃຊ້ຄຳວ່າ "ບັງຄັບ" (compels) (5:14). ພຣະຄັມພີພາສາອັງກິດ (The New English Bible) ໄດ້ແປຄຳດັ່ງກ່າວຈາກພາສາກຣີກໂດຍແປອອກມາວ່າ "ພວກເຮົາບໍ່ມີທາງເລືອກ". ສຳລັບພາສາກຣີກ ຄຳດັ່ງກ່າວສາມາດແປໄດ້ວ່າ "ຄວບຄຸມ" ຫລື "ອອກກົດລະບຽບ". ການປະກາດຂອງໂປໂລຖືກ <u>ຄວບຄຸມ</u> ຫລື <u>ອອກກົດລະບຽບ</u> ໂດຍຄວາມຮັກຂອງພຣະຄຣິດ. ລາວບໍ່ມີທາງເລືອກ ລາວຈະຕ້ອງບອກປະສົບການຄວາມຮັກຂອງພຣະຄຣິດຊຶ່ງລາວໄດ້ຮັບ. ໃນພຣະທັມກິຈການ 18:5, ລູກາໄດ້ບັນທຶກໄວ້ວ່າ "ໂປໂລໄດ້ຕັ້ງຕົ້ນສລະເວລາທັງໝົດປະກາດພຣະທັມ ແລະເປັນພຍານແກ່ພວກຊາວຢິວວ່າພຣະເຢຊູແມ່ນພຣະຄຣິດ". ການປະກາດ ຫລືການຮັບໃຊ້ຂອງໂປໂລແມ່ນເຫັນໄດ້ຢ່າງແຈ່ມແຈ້ງເນື່ອງມາຈາກຄວາມຮັກຂອງພຣະຄຣິດເປັນແຮງຈູງໃຈ.

ໃນພຣະທັມໂຣມ 5:8, ໂປໂລໄດ້ບັນທຶກໄວ້ "ແຕ່ຝ່າຍພຣະເຈົ້າຊົງສະແດງຄວາມຮັກຂອງພຣະອົງແກ່ເຮົາທັງຫລາຍຄືໃນຂນະທີ່ພວກເຮົາຍັງເປັນຄົນຜິດບາບຢູ່ນັ້ນ ພຣະຄຣິດໄດ້ຊົງຍອມສິ້ນພຣະຊົນແທນເຮົາທັງຫລາຍ." ຄວາມຮູ້ກ່ຽວກັບພຣະຄຣິດສາມາດຮັກລາວ, "ໃນຈຳນວນຄົນບາບນັ້ນແມ່ນເຮົານີ້ແຫລະເປັນຜູ້ຕົ້ນ" (the worst of sinners) (1 ຕີໂມທຽວ 1:15) ແນ່ນອນ ຄວາມຮັກຂອງພຣະຄຣິດຖ້ວມລົ້ນລາວແລະບັງຄັບລາວໃຫ້ຮັບໃຊ້ເພາະເຫັນແກ່ພຣະຄຣິດ. ອີກອັນນຶ່ງ, ໃນພຣະທັມໂຣມ 8:39, ລາວໄດ້ຂຽນໄວ້ໃຫ້ສັງເກດເບິ່ງ ບໍ່ມີອັນໃດຈະສາມາດມາເຮັດໃຫ້ຜູ້ທີ່ເຊື່ອ "ຂາດຈາກຄວາມຮັກຂອງພຣະເຈົ້າຊຶ່ງມີຢູ່ໃນພຣະເຢຊູຄຣິດເຈົ້າຂອງພວກເຮົາທັງຫລາຍນັ້ນ." ຄວາມຮັກອັນປະເສີດຂອງພຣະຄຣິດຊຶ່ງຮັກສາໄວ້ໃຫ້ປອດພັຍເຮັດໃຫ້ໂປໂລບໍ່ມີທາງເລືອກ, ແຕ່ມີທາງດຽວ ຄືຮັບໃຊ້ພຣະອົງ.

ໂປໂລຄິດເຫັນວ່າຄວາມຕາຍຂອງພຣະຄຣິດນັ້ນບໍ່ແມ່ນເພື່ອລາວຄົນດຽວເທົ່ານັ້ນ, ແຕ່ເພື່ອໝົດທຸກຄົນ (2 ໂກຣິນໂທ 5:14). ດ້ວຍເຫດນີ້, ລາວຈຶ່ງ "ບໍ່ສັງເກດຮູ້ຜູ້ໃດຕາມມາຕຖານຂອງມະນຸດ" (5:16). ຄັ້ງນຶ່ງຜ່ານມາ, ລາວເຄີຍ "ສັງ

ເກດຮູ້ພຣະຄຣິດຕາມມາຕຖານຂອງມະນຸດ" (5:16). ໃນຂນະເລີ້ມແລກ ຄາວໂປໂລເຊື່ອຕາມແບບຢ່າງຟາຣີຊາຍ ລາວໄດ້ຕັດສິນພຣະເຢຊູແລະພວກສາວົກຂອງພຣະອົງຕາມມາຕຖານຂອງມະນຸດ. ດ້ວຍເຫດນີ້ ລາວຈຶ່ງຂົ່ມເຫງແລະ ຕາມຂ້າຄຣິສຕຽນ ແລະຫວັງຈະທຳລາຍຄົນກຸ່ມນີ້ໃຫ້ໝົດສິ້ນໄປ. ແຕ່ດຽວນີ້ ລາວສັງເກດຮູ້ເຫັນພວກເຂົາແຕ່ລະຄົນ ໃນພາບພົດບັງເກີດໃໝ່ໃນພຣະຄຣິດ. ລາວໄດ້ຂຽນໄວ້ວ່າ (5:17), "ເຫດສັນນັ້ນຖ້າຜູ້ໃດຢູ່ໃນພຣະຄຣິດ ຜູ້ນັ້ນກໍເປັນ ຄົນທີ່ຖືກສ້າງຂື້ນໃໝ່ແລ້ວ ຖານະເກົ່າເຫລົ່ານັ້ນກໍລ່ວງໄປແລ້ວ ເບິ່ງແມ, ກາຍເປັນສິ່ງໃໝ່ໄປໝົດ".

ໂປໂລເປັນຜູ້ທີ່ຖືກ "ສ້າງຂື້ນໃໝ່." ເມື່ອພຣະຄຣິດສິ້ນພຣະຊົນທີ່ໄມ້ກາງແຂນ, ໂປໂລຕາຍກັບພຣະອົງ (5:14). ເມື່ອ ພຣະຄຣິດຄືນພຣະຊົນ, ໂປໂລກໍຄືນຂື້ນມາກັບພຣະອົງ. ໃນເມື່ອໂປໂລຄືນກັບພຣະຄຣິດແລ້ວ ຊີວິດຂອງລາວໃນປະຈຸ ບັນນີ້ແມ່ນຢູ່ເພື່ອພຣະອົງ. ສິ່ງເຫລົ່ານີ້ເປັນຄວາມຈິງສຳລັບຜູ້ທີ່ຍອມຮັບເອົາພຣະເຢຊູຄຣິດມາເປັນພຣະຜູ້ໄຖ່ຂອງຕົນ.

ຄວາມຮັກຂອງພຣະຄຣິດມີຕໍ່ໝົດທຸດຄົນ, ເປັນຄວາມຮັກທີ່ນຳພຣະຄຣິດໃຫ້ສິ້ນພຣະຊົນເພື່ອຄວາມບາບທັງຫລາຍ, ຈຶ່ງເປັນແຮງຈູງໃຈໃຫ້ຮັບໃຊ້ຄົນທັງປວງ. ລາວຄຶດເຫັນວ່າ ມັນເປັນໄປໄດ້ທີ່ທຸກຄົນຈະມາຮັບເຊື່ອໃນພຣະຄຣິດ. ລາວ ຈຶ່ງມີຄວາມຮູ້ສຶກວ່າ ລາວເປັນໜີ້ຄົນທັງປວງໃນການປະກາດຂ່າວປະເສີດຂອງພຣະເຢຊູຄຣິດ (ໂຣມ 1:14-15). ລາວ "ບໍ່ມີຄວາມລະອາຍໃນຂ່າວປະເສີດ" ເພາະລາວຮູ້ວ່າ "ຂ່າວປະເສີດນັ້ນເປັນຣິດເດດຂອງພຣະເຈົ້າ ເພື່ອໃຫ້ທຸກ ຄົນທີ່ເຊື່ອໄດ້ຮັບຄວາມລອດພົ້ນ" (ໂຣມ 1:16).

ທ່ານຮູ້ບໍ່ວ່າ ຜູ້ໃດຕ້ອງການເປັນຜູ້ທີ່ຖືກ "ສ້າງຂື້ນໃໝ່" (2 ໂກຣິນໂທ 5:17)? ອັນນັ້ນແຫລະ ຄວນຈະເປັນແຮງຈູງ ໃຈທ່ານໃຫ້ໄປບອກເຣື່ອງຄວາມຮັກຂອງພຣະຄຣິດກັບເຂົາ. ແນ່ນອນແລ້ວ ນັ້ນເປັນແຮງຈູງໃຈໃຫ້ກັບໂປໂລແທ້.

<u>ໄດ້ຮັບແຮງຈູງໃຈດ້ວຍການມອບໝາຍຈາກພຣະເຈົ້າ</u> (5:18-21)

ພຣະເຈົ້າຊົງບັນຊາສັ່ງໃຫ້ຜູ້ທີ່ເຊື່ອທຸກຄົນເປັນທູດເພື່ອຂ່າວປະເສີດ. ໂປໂລໄດ້ຂຽນວ່າ ພຣະເຈົ້າ "ຊົງມອບຂ່າວ ເຣື່ອງການທີ່ພຣະອົງໃຫ້ຄືນດີກັນນັ້ນໄວ້ກັບເຮົາ" (5:19). ຂ່າວເຣື່ອງການທີ່ພຣະເຈົ້າໃຫ້ຄືນດີກັນແມ່ນຫຍັງ, ແລະ ຂ່າວເຣື່ອງນີ້ໄດ້ມອບໄວ້ກັບພວກເຮົານັ້ນມີຄວາມໝາຍວ່າຢ່າງໃດ?

ຂ່າວເຣື່ອງການຄືນດີນັ້ນແມ່ນພຣະເຈົ້າ "ຊົງໂຜດໃຫ້ເຮົາຄືນດີກັບພຣະອົງທາງພຣະຄຣິດ" (5:18). ຄຳວ່າ "ການຄືນ ດີ" ແປຈາກພາສາກຣີກແລ້ວມີຄວາມໝາຍວ່າ <u>ກັບເຂົ້າມາເປັນເພື່ອນກັບພຣະເຈົ້າ</u>. ເປັນຫຍັງມະນຸດຈຶ່ງຈຳເປັນຕ້ອງ ກັບເຂົ້າມາເປັນເພື່ອນກັບພຣະເຈົ້າ? ອ້າງອີງຕາມພຣະທັມໂຣມ 5:10, ກ່ອນພຣະຄຣິດວາຍພຣະຊົນເພື່ອໄຖ່ບາບຂອງ ພວກເຮົາ, "ເຮົາທັງຫລາຍເປັນສັດຕຣູຕໍ່ພຣະເຈົ້າ".ພຣະເຈົ້າບໍ່ໄດ້ເປັນສັດຕູຂອງພວກເຮົາ, ແຕ່ເຮົາເປັນສັດຕູຂອງພຣະ ເຈົ້າ. ນິສັຍອັນຊົ່ວຮ້າຍຂອງພວກເຮົາບົ່ງບອກໃຫ້ວ່າໃນຈິດໃຈຂອງພວກເຮົາ ພວກເຮົາເປັນສັດຕຣູຂອງພຣະເຈົ້າ. (ໂກໂລຊາຍ 1:21).

ພຣະເຈົ້າບໍ່ໄດ້ຍົກເຄື່ອງກີດກັ້ນຂື້ນລະຫວ່າງພຣະອົງກັບມະນຸດ. ມະນຸດຕ່າງຫາກເປັນຕົ້ນເຫດ. ພຣະເຈົ້າເປັນຜູ້ສ້າງ ສາຍສັມພັນເປັນເພື່ອນກັບພວກເຮົາກ່ອນ. ພຣະອົງຊົງກະທຳໂດຍຜ່ານທາງກາຍຕາມຝ່າຍຮ່າງກາຍຂອງພຣະເຢຊູ (ໂກໂລຊາຍ 1:22). ການຄືນດີຂອງພຣະເຈົ້າແມ່ນພຣະອົງ "ບໍ່ໄດ້ຊົງຖືໂທດໃນການຜິດບາບຂອງເຂົາ" (2 ໂກຣິນໂທ 5:19). ພຣະເຈົ້າຊົງຍົກເລີກໜີ້ສິນໃນສະມຸດບັນຊີຂອງພຣະອົງໂດຍລຶບຂໍ້ຄວາມຜິດຕ່າງໆດ້ວຍເລືອດຂອງພຣະຄຣິດ (ໂກໂລຊາຍ 2:14). ການຕາຍຂອງພຣະຄຣິດທີ່ໄມ້ກາງແຂນໄດ້ຊຳຣະໜີ້ສິນໃຫ້ກັບຜູ້ທີ່ເຊື່ອ. ໂປໂລໄດ້ບັນທຶກໄວ້ວ່າ "ເພາະວ່າພຣະເຈົ້າໄດ້ຊົງກະທຳໃຫ້ພຣະຄຣິດ ຜູ້ຊົງບໍ່ມີຄວາມຜິດບາບນັ້ນ ໄດ້ເຂົ້າສ່ວນກັບຄວາມຜິດບາບຂອງເຮົາ ເພື່ອພວກເຮົາຈະໄດ້ສ່ວນໃນຄວາມຊອບທັມຂອງພຣະເຈົ້າໂດຍທາງພຣະອົງ" (2 ໂກຣິນໂທ 5:21) ເມື່ອຄົນໃດຄົນນຶ່ງ

ຮັບເອົາພຣະເຢຊູມາເປັນພຣະຜູ້ໄຖ່ຂອງຕົນ ບາບຂອງຄົນຜູ້ນັ້ນໄດ້ຖືກຊຳຣະແລ້ວດ້ວຍຄວາມຕາຍຂອງພຣະອົງ. ຜູ້ທີ່ເຊື່ອນັ້ນໄດ້ຮັບຊີວິດໃນທາງຊອບທັມຂອງພຣະຄຣິດ. ແທນທີ່ພຣະເຈົ້າຈະນັບຮວມຄວາມບາບຂອງພວກເຮົາເພື່ອນຳມາຕໍ່ສູ້ພວກເຮົາ ພຣະອົງໄດ້ນັບຮວມຄວາມເຊື່ອ (faith) ຂອງພວກເຮົາເພື່ອພວກເຮົາ.

ພຣະເຈົ້າໄດ້ມອບຂ່າວເຣື່ອງການທີ່ພຣະອົງໃຫ້ຄືນດີກັນນັ້ນໄວ້ກັບຜູ້ທີ່ເຊື່ອ.  ພຣະອົງບໍ່ໄດ້ມອບໃຫ້ເທວະດາ ຫລືວິນຍານຕ່າງໆ, ແຕ່ພຣະອົງມອບໃຫ້ "ພວກເຮົາ" ຄືຂ່າວການຄືນອັນຕລອດໄປເປັນນິດ (5:19). ເມື່ອຝູງຊົນມີປະສົບການຄືນດີກັນກັບພຣະເຈົ້າທາງພຣະຄຣິດ ຕໍ່ມາພວກເຂົາມີໜ້າທີ່ບອກຄົນອື່ນດ້ວຍປະສົບການຂອງພວກເຂົາ.  ໂປໂລໄດ້ບັນທຶກໄວ້ວ່າ "ເຫດສັນນັ້ນເຮົາຈຶ່ງເປັນທູດຂອງພຣະຄຣິດ" (5:20). ຜູ້ເປັນທູດເປັນຜູ້ຕາງໜ້າຂອງຣັຖບານຂອງລາວແລະເປັນຜູ້ເວົ້າແທນຜູ້ປົກຄອງຂອງລາວ. ທູດຄົນນັ້ນບໍ່ມີສິດອັນໃດຈະອອກຄວາມຄິດເຫັນແທນຜູ້ປົກຄອງຂອງລາວ.  ລາວມີໜ້າທີ່ຮັບຜິດຊອບຈະຕ້ອງລາຍງານໃຫ້ກັບຜູ້ປົກຄອງຂອງລາວ. ຂ່າວສານທີ່ທູດນຳມານັ້ນເປັນເຣື່ອງການອະພັຍໂທດແກ່ຜູ້ທີ່ມີໂທດຂອງຄວາມບາບທີ່ເຮັດຕໍ່ສູ່ພຣະເຈົ້າ. ຂ່າວສານນີ້ແຫລະທີ່ພຣະເຈົ້າຊົງມອບໃຫ້ຜູ້ທີ່ເຊື່ອ.

ໃນຂນະທີ່ຂ້າພະເຈົ້າເຂົ້າໂຮງຮຽນພຣະຄຣິສຕະທັມຄັມພີ ຂ້າພະເຈົ້າມີໂອກາດຮັບໃຊ້ເປັນຜູ້ລອງສິດຍາພິບານທີ່ໂບດໃຫຽ່ແຫ່ງນຶ່ງ ລາວເປັນຄົນດີເປັນພິເສດ. ທາງໂບດມີຣົດບັສໄປຮັບຄົນທຸກໆວັນອາທິດ.

ໃນວັນອາທິດຕອນເຊົ້າວັນນຶ່ງ ມີຊາຍຄົນນຶ່ງໄດ້ມາຮັບເອົາອົງພຣະເຢຊູມາເປັນພຣະຜູ້ໄຖ່ຂອງລາວ. ຂ້າພະເຈົ້າໄດ້ຖາມລາວກ່ຽວກັບການຕັດສິນໃຈຂອງລາວ. ລາວບໍ່ເຄີຍມາໂບດນີ້ຈັກເທື່ອ ແຕ່ສຳລັບລູກສາວລາວແລະເມັຽຂອງລາວໄດ້ນັ່ງຣົດບັສຂອງໂບດມາວັນອາທິດຕອນເຊົ້າ.

ຂ້າພະເຈົ້າຖາມລາວວ່າ ເປັນຢ່າງໃດລາວຈຶ່ງມາຮັບເຊື່ອພຣະເຢຊູ, ລາວໄດ້ພີເຈັ້ຽທີ່ພັບໄວ້ອອກ. ໃນເຈັ້ຽໃບນັ້ນມີຮູບຂອງພຣະເຢຊູນັ່ງນຳເດັກນ້ອຍ ຊຶ່ງລູກສາວຂອງລາວໄດ້ແຕ້ມສີໃສ່. ຢູ່ທາງລຸ່ມຮູບນັ້ນມີຂໍ້ພຣະຄັມພີ ໂຢຮັນ 3:16. ຊາຍຄົນນັ້ນໄດ້ຊີ້ໃສ່ຂໍ້ພຣະຄັມພີແລະລາວກໍເລີ້ມຮ້ອງໄຫ້ຂຶ້ນ. ລູກສາວນ້ອຍຂອງລາວເປັນທູດໃຫ້ພຣະຄຣິດ ແລະພໍ່ຂອງນາງໄດ້ມາເປັນຜູ້ທີ່ເຊື່ອໃນພຣະອົງ.

## ຄຳຖາມ

1. ມີທາງໃດແດ່ໃນການໃຊ້ຊີວິດຂອງພວກເຮົາຈະເປັນການຊັກຊວນຄົນອື່ນໃຫ້ຮູ້ວ່າພວກເຮົາເປັນຜູ້ທີ່ມີຄວາມເຊື່ອ?

໒. ການຍົກຍໍຕົວເອງກັບການຍົກຍໍພຣະເຢຊູມີຄວາມແຕກຕ່າງກັນຢ່າງໃດ?

3. ພວກເຮົາຈະພິສູດໃຫ້ຄົນອື່ນເຫັນຢ່າງໃດວ່າຄວາມຮັກຂອງພຣະເຢຊູເປັນຄວາມຮັກອັນດີເລີດໃນຊີວິດຂອງພວກເຮົາ?

4. ມີທາງໃດແດ່ທີ່ທ່ານໄດ້ຕັດສິນຄົນອື່ນຕາມມາຕຖານຂອງຝ່າຍໂລກ?

5. ແມ່ນອັນໃດເປັນຕົວຢ່າງໃຫ້ເຫັນວ່າເປັນທູດເພື່ອພຣະຄຣິດ?

## ບົດຮຽນທີ 7
## ຈົ່ງຊື່ສັດ, ຈົ່ງເປັນຈິງ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** 2 ໂກຣິນໂທ 6: 1-13; 7:2-4
**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** 2 ໂກຣິນໂທ 6: 1-7:4
**ຈຸດສຳຄັນຂອງບົດຮຽນນີ້:** ແບບຢ່າງແລະຄວາມສັມພັນອັນສັດຊື່ເປັນເຄື່ອງມືທີ່ມີຣິດເດດໃນການຮັບໃຊ້.

**ຄຳຖາມເພື່ອການສຳຣວດ:** ແບບຢ່າງແລະຄວາມເວົ້າຂອງທ່ານບອກກັບຄົນອື່ນໆແນວໃດ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອສລຸບເບິ່ງຄຳອະທິບາຍຂອງໂປໂລເຣື່ອງການຮັບໃຊ້ ແລະຄຳຮ້ອງຂໍຂອງທ່ານກັບຊາວໂກຣິນໂທ ແລະເບິ່ງຄວາມໝາຍສຳລັບຊີວິດຂອງຂ້ອຍໃນປັດຈຸບັນ.

### ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ເວົ້າເຣື່ອງຂ່າວປະເສີດກັບຄົນທັງຫລາຍ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ໃຫ້ທຸກຄົນໃນຄອບຄົວຂອງພຣະເຈົ້າມີສ່ວນໃນການບໍຣິຫານແລະການຮັບໃຊ້.
- ເຫັນທຸກຄົນວ່າສຳຄັນເພາະພຣະເຈົ້າຊົງເປັນຜູ້ສ້າງມະນຸດ.

## ຄຳນຳ

ມີຄຳໂບຮານກ່າວໄວ້ວ່າ *"ເຂົາເປັນຄົນມັກສວມໜ້າກາກຢູ່ສເມີ."* ຄວາມໝາຍກໍຄືຄົນຜູ້ນັ້ນເປັນຄົນບໍ່ຈິງ. ແຕ່ສຳລັບໂປໂລ ລາວເປັນຄົນທີ່ບໍ່ມີຄວາມລັບໃນເວລາທ່ານສ້າງຄວາມສັມພັນທາງຄວາມເຊື່ອກັບຊາວໂກຣິນໂທ. ໂປໂລໄດ້ໃຫ້ຂໍ້ມູນຫລາຍຢ່າງເພື່ອປ້ອງກັນຕົວເອງແລະປ້ອງກັນການຮັບໃຊ້ໃນພຣະທັມໂກຣິນໂທຫ້າບົດທີ່ຜ່ານມາ. ສັດຕຣູຂອງໂປໂລທີ່ໂກຣິນໂທພຍາຍາມໃສ່ຮ້າຍວ່າໂປໂລໃຊ້ວິທີຫລອກລວງຄົນ ແລະເຂົາມີເຈຕນາຮ້າຍ, ແຕ່ໂປໂລໄດ້ຕອບຄຳກ່າວຫາຕ່າງໆຢ່າງແຈ້ມແຈ້ງ.

### 1. ຄຳຂໍຮ້ອງໃຫ້ພິສູດເບິ່ງ (6:1-2)

ໃນຕອນສຸດທ້າຍຂອງພຣະທັມ 2 ໂກຣິນໂທ 5, ໂປໂລໄດ້ຂໍຮ້ອງໃຫ້ຊາວໂກຣິນໂທຜູ້ທີ່ຍັງບໍ່ເຊື່ອວ່າ *"ຈົ່ງຍອມໃຫ້ພຣະເຈົ້າຊົງກະທຳໃຫ້ເຈົ້າຄືນດີກັນກັບພຣະອົງເຖີ້ນ"* (2 ກຣທ 5:20). ໂປໂລເລີ້ມຕົ້ນບົດທີຫົກດ້ວຍການຮ້ອງຂໍໃຫ້ຜູ້ທີ່ເຊື່ອຈົ່ງຢ່າຮັບພຣະຄຸນຂອງພຣະເຈົ້າຢ່າງໄຮ້ປໂຍດ. ພວກຜູ້ເຊື່ອທັງຫລາຍທີ່ ໂກຣິນໂທຍັງເປັນເດັກນ້ອຍໃນພຣະຄຣິດ, ພວກເຂົາຍັງບໍ່ໄດ້ເປັນຜູ້ເຊື່ອທີ່ສົມບູນ ເພາະພວກເຂົາບໍ່ໄດ້ເຕີບໃຫຍ່ໃນພຣະຄຸນແລະຄວາມເຂົ້າໃຈ. ທີ່ຈິງແລ້ວພວກເຂົາມີສິດຍາພິບານຜູ້ຍິ່ງໃຫຍ່ຄືໂປໂລ; ແຕ່ພວກເຂົາບໍ່ໄດ້ຮັບປໂຍດເທົ່າທີ່ຄວນ ຈາກການຮັບໃຊ້ຂອງທ່ານ.

ໂປໂລໄດ້ພະຍາຍາມທຸກຢ່າງເພື່ອຈະບໍ່ໄດ້ໃຫ້ມີເຫດສະດຸດໃຈ ຫລືເຮັດໃຫ້ຄົນເສຍສັດທາໃນການຮັບໃຊ້ຂອງທ່ານ. ໃນພຣະທັມຂໍ້ 3 ເຖິງ 10 ຕໍ່ໄປນີ້, ໂປໂລໄດ້ໃຫ້ຄຳຖືກຖຽງຫລາຍໆຢ່າງເພື່ອເປັນເຄື່ອງພິສູດວ່າການຮັບໃຊ້ຂອງເຂົາບໍ່ມີສິ່ງໃດທີ່ຈະເປັນທີ່ຕິຕຽນໄດ້.

ການເວົ້າຄວາມຈິງບໍ່ໄດ້ໝາຍຄວາມວ່າເຮົາຈະຕ້ອງແຈ້ງທຸກຢ່າງໃຫ້ຄົນອື່ນໆຮູ້ໂດຍລະອຽດ. ພວກເຮົາແຕ່ລະຄົນຕ່າງກໍມີສິດທີ່ຈະເກັບຄວາມລັບສ່ວນຕົວບາງຢ່າງໄວ້ເປັນເຣື່ອງສ່ວນຕົວ. ແຕ່ຖ້າເຮົາເກັບຂໍ້ມູນທີ່ສຳຄັນເຣື່ອງການຮັບໃຊ້ໄວ້ເປັນຄວາມລັບ ກໍອາດຈະເປັນເຫດໃຫ້ມີການຂາດຄວາມເຊື່ອຖື ຫາກເຣື່ອງນັ້ນໆເກີດມີຄົນຮູ້ໃນພາຍຫລັງ.

## 2. ການຕໍ່ສູ້ຂອງໂປໂລ (6: 3-5)

ຄຳວ່າ "*ອົດທົນ* "ໃນທີ່ນີ້ໝາຍເຖິງການ "*ທົນທານ.* "ອັນນີ້ບໍ່ແມ່ນຮູບພາບຂອງຄຣິສຕຽນນັ່ງຢູ່ຕັ່ງຄືຜູ້ເຖົ້າໂດຍບໍ່ໄດ້ເຮັດຫຍັງ, ແຕ່ເປັນຮູບພາບຂອງນັກຮົບທີ່ກຳລັງກ້າວໄປສູ່ຊັຍຊະນະຖ້າມກາງອຸປສັກນາໆປະການ. ເສີກທີ່ໂປໂລໄດ້ຕໍ່ສູ້ເພາະການເຊື່ອຟັງພຣະຄຣິດເປັນຫລັກຖານເຖິງຄວາມຈິງໃຈ ແລະຄວາມບໍ່ເຫັນແກ່ຕົວໃນການຮັບໃຊ້. ຄວາມລຳບາກບໍ່ໄດ້ເກີດຂຶ້ນ ເພາະໂປໂລບໍ່ເຊື່ອຟັງ ແລະຕ້ອງຖືກຕີສອນ, ແຕ່ຄວາມລຳບາກໄດ້ເກີດຂຶ້ນເພາະທ່ານເປັນຄົນເຊື່ອຟັງ ແລະຄວາມລຳບາກນັ້ນຄືການຂູ່ເຂັນຂອງພຍາມານ. ໃນການຮັບໃຊ້ຂອງເຂົາ, ໂປໂລໄດ້ຖືກຂ້ຽນ, ຖືກຄຸກ, ແລະຖືກການຫວຸ້ນວາຍ. ໂປໂລແລະຄະນະຕ້ອງທຳງານເພື່ອລ້ຽງຕົນເອງ; ພວກເຂົາໄດ້ລະວັງຕົວ ຈົນບາງຄັ້ງຕ້ອງອົດຫລັບອົດນອນ; ເພາະຄວາມຂາດແຄນ ບາງຄັ້ງຕ້ອງໄດ້ອົດອາຫານການກິນ. ຖ້າໂປໂລເປັນຜູ້ຮັບໃຊ້ປອມເຂົາຄົງຈະບໍ່ອົດທົນເຖິງພຽງນັ້ນ.

## 3. ອາວຸດໃນການຕໍ່ສູ້ຂອງໂປໂລ (6:6-7)

ໂປໂລມີອຸປນິສັຍແລະການປະພຶດທີ່ຄ້າຍຄຽງກັບຂອງພຣະເຢຊູຄຣິດ. ທ່ານມີມືທີ່ຂາວສະອາດແລະມີຄວາມສຳນຶກທີ່ບໍຣິສຸດສເມີ. ທ່ານມີຄວາມຮັກທີ່ແທ້ຈິງຕໍ່ພວກຜູ້ທີ່ເຊື່ອທັງຫລາຍ. ໂປໂລໃຊ້ພຣະຄຳຂອງພຣະເຈົ້າແລະການອ້ອນວອນເປັນອາວຸດເພື່ອເອົາຊະນະຊາຕານ. ຜູ້ຮັບໃຊ້ທີ່ບໍ່ທ່ຽງທັມຈະໃຊ້ວິທີຂອງຊາວໂລກເພື່ອສ້າງວຽກງານຂອງຕົນ.

## 4. ຊື່ສຽງທີ່ໂປໂລໄດ້ຮັບ (6:8-10)

ຖ້າພວກເຮົາເບິ່ງບໍ່ລະອຽດຄືວ່າຂັດແຍ້ງກັນແຕ່ວ່າມັນກໍເປັນຄວາມຈິງ, ເພາະຄົນຜິດບາບ ແລະຄຣິສຕຽນຈະເບິ່ງຜູ້ຮັບໃຊ້ຂອງພຣະເຈົ້າໄປໃນທັສນະແຕກຕ່າງກັນ. ຄົນຜິດບາບຈະເຫັນຜູ້ຮັບໃຊ້ໃນອີກມຸມນຶ່ງ ແຕ່ຜູ້ທີ່ເປັນຄຣິສຕຽນຈະເຫັນຜູ້ຮັບໃຊ້ໄປຄົນລະມຸມ ເໝືອນກັບຫລາຍໆຄົນໄດ້ເບິ່ງພຣະເຢຊູຄຣິດດ້ວຍຄວາມເຫັນທີ່ຕ່າງໆກັນ. ພຣະທັມຂໍ້ 10 ໄດ້ບອກເຖິງລັກສະນະຂອງຄຣິສຕຽນຜູ້ທີ່ເຊື່ອພຣະຄຣິດຢ່າງແທ້ຈິງ, "*ເປັນຄົນມີຄວາມທຸກໂສກ ແຕ່ຍັງຊົມຊື່ນຍິນດີຢູ່ສເມີ, ເປັນຄົນທຸກຍາກ ແຕ່ຍັງເຮັດໃຫ້ຮັ່ງມີ, ເປັນຄົນບໍ່ມີສິ່ງໃດ ແຕ່ຍັງມີສິ່ງສາຣະພັດ.* "

## 5. ຄຳຮ້ອງຂໍຂອງໂປໂລ (6:11-13; 7:2-4)

ໂປໂລປິດຄຳຮ້ອງຂໍຂອງທ່ານດ້ວຍການເຕືອນຊາວໂກຣິນໂທເຖິງຄວາມຮັກທີ່ທ່ານມີຕໍ່ພວກເຂົາທັງຫລາຍ. ຈິດໃຈຂອງທ່ານໄດ້ເປີດກວ້າງອອກດ້ວຍຄວາມຮັກ ແຕ່ຈິດໃຈຂອງຊາວໂກຣິນໂທໄດ້ຖືກອັດບັງໄວ້. ໂປໂລກ່າວວ່າ "*ເຈົ້າທັງຫລາຍຢູ່ໃນໃຈຂອງເຮົາ ຄືຈະຕາຍຫລືຈະເປັນກໍຢູ່ດ້ວຍກັນ* "(7:3). ຄວາມຈິງແລ້ວໂປໂລມີຄວາມພາກພູມໃຈຫລາຍກັບພີ່ນ້ອງຄຣິສຕຽນທີ່ໂກຣິນໂທ; ທ່ານໄດ້ຮັບຄວາມຊູໃຈຈາກພວກເຂົາເມື່ອທ່ານມີຄວາມທຸກລຳບາກ. ໂປໂລຈຶ່ງຮຽກຮ້ອງໃຫ້ພວກ ເຂົາຜູ້ຊຶ່ງເປັນເໝືອນລູກຂອງທ່ານເອງຈຶ່ງເປີດຈິດໃຈຮັບເອົາຜູ້ຮັບໃຊ້ຂອງພຣະເຈົ້າ.

__ຄຳສອນສຳລັບພວກເຮົາ__

ຄວາມເປີດເຜີຍເປັນສິ່ງສຳຄັນຫລາຍທີ່ສຸດໃນເຣື່ອງມະນຸດສັມພັນ, ບໍ່ວ່າໃນພວກຊາວໂລກຫລືພວກຊາວຄຣິສຕຽນ. ການເປີດເຜີຍຕົນເອງໃຫ້ຄົນອື່ນບໍ່ແມ່ນເຣື່ອງງ່າຍ; ແຕ່ການເປີດເຜີຍບໍ່ໄດ້ໝາຍເຖິງການບອກເລົ່າທຸກງຢ່າງໃຫ້ຄົນອື່ນຮູ້. ການເປີດເຜີຍໝາຍເຖິງການບອກໃຫ້ຮູ້ໃນເຣື່ອງທີ່ກ່ຽວຂ້ອງເພື່ອສ້າງຄວາມໄວ້ວາງໃຈໃນກຸ່ມທີ່ມີສ່ວນຮ່ວມໃນວຽກງານ ໂດຍສະເພາະໃນການຮັບໃຊ້ພຣະເຈົ້າຮ່ວມກັນ. "*ຄວາມຊື່ສັດຄືນະໂຍບາຍທີ່ດີເລີດ*" (Honesty is the best policy).

__ຄຳຖາມ:__

1. ມີຄວາມບໍ່ຈິງໃຈແນວໃດແດ່ທີ່ທ່ານໄດ້ສັງເກດເຫັນຢູ່ເລື້ອຍໆໃນກຸ່ມຂອງຄົນທີ່ເຊື່ອພຣະເຈົ້າ?

2. ມີຄຸນລັກສນະແນວໃດແດ່ທີ່ເຮັດໃຫ້ທ່ານໄວ້ວາງໃຈໃນຄຣິສຕຽນຄົນອື່ນໆ?

3. ມີຕົວຢ່າງແນວໃດແດ່ເຣື່ອງ "*ຄວາມເວົ້າແບບເປີດເຜີຍ*" ຂອງຄຣິສຕຽນ?

4. ມີກໍຣະນີໃດແດ່ທີ່ເຮັດໃຫ້ຄຣິສຕຽນມີການຢາກຈະເຂົ້າ "*ທຽມແອກກັບຄົນທີ່ບໍ່ເຊື່ອ*"?

5. ພວກເຮົາຈະສ້າງສະພານໄປເຖິງຄົນທີ່ບໍ່ຮູ້ພຣະເຈົ້າໂດຍບໍ່ຕ້ອງ "*ທຽມແອກກັບຄົນທີ່ບໍ່ເຊື່ອ*" ໄດ້ວິທີໃດແດ່?

## ບົດຮຽນທີ 8
## ການໃຫ້ແລະການຮັບຄຳຕິຊົມ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** 2 ໂກຣິນໂທ 7: 5-16
**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** 2 ໂກຣິນໂທ 7: 5-16
**ຈຸດສຳຄັນຂອງບົດຮຽນນີ້:** ຮຽນຮູ້ເຣື່ອງການໃຫ້ແລະການຍອມຮັບຄຳຕິຊົມວ່າເປັນພາກສ່ວນສຳຄັນຂອງການເຕີບໃຫຍ່ໃນຊີວິດຄຣິສຕຽນ.

**ຄຳຖາມເພື່ອການສຳຣວດ:** ທ່ານຮູ້ສຶກແນວໃດເມື່ອຖືກຄົນອື່ນຕຳນິ? ທ່ານຮູ້ສຶກແນວໃດເມື່ອທ່ານຕຳນິຄົນອື່ນ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອສລຸບເບິ່ງການປະເຊີນໜ້າຣະຫວ່າງໂປໂລກັບຊາວໂກຣິນໂທ, ເບິ່ງການຕອບຮັບຄຳຕຳນິຂອງໂປໂລ, ແລະຊອກຫາສິ່ງທີ່ກ່ຽວພັນກັນໃນຄວາມສັມພັນຂອງຂ້າພະເຈົ້າກັບຄົນອື່ນໆ.

### ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ເວົ້າເຣື່ອງຂ່າວປະເສີດກັບຄົນທັງຫລາຍ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ໃຫ້ທຸກຄົນໃນຄອບຄົວຂອງພຣະເຈົ້າມີສ່ວນໃນການບໍຣິຫານແລະການຮັບໃຊ້.
- ເຫັນທຸກຄົນວ່າສຳຄັນເພາະພຣະເຈົ້າຊົງເປັນຜູ້ສ້າງມະນຸດ.
- ສົ່ງເສີມຄອບຄົວໃຫ້ເຂັ້ມແຂງ.
- ຈັດຕຽມຄົນທັງຫລາຍໃຫ້ເປັນຜູ້ນຳທີ່ມີຄຸນລັກສນະຂອງຜູ້ຮັບໃຊ້.

### ຄຳນຳ

ການຕິຊົມແບ່ງອອກເປັນສອງປະເພດ: (1) ຕິເພື່ອກໍ່ ແລະ (2) ຕິເພື່ອທຳລາຍ. ພວກເຮົາຈະໄດ້ຮຽນຮູ້ຈາກຄວາມສັມພັນຣະຫວ່າງໂປໂລແລະຊາວຄຣິສຕຽນທີ່ໂກຣິນໂທ ເພື່ອພວກເຮົາຈະຮູ້ວິທີຕິ ແລະວິທີຮັບຄຳຕິແບບເກີດປໂຍດ. ຄຳຕ້ອງຕິຂອງໂປໂລອາດຈະເຮັດໃຫ້ຊາວໂກຣິນໂທເກີດຄວາມເຈັບປວດເມື່ອເວລາໄດ້ຍິນ. ແຕ່ການຍອມຮັບແບບຖືກຕ້ອງໄດ້ເຮັດໃຫ້ພວກເຂົາມີການປ່ຽນແປງຊີວິດ.

**ເບື້ອງຫລັງ:** ໂປໂລຂຽນໃນ 2 ໂກຣິນໂທ 2:13 ວ່າທ່ານບໍ່ສາມາດນີ້ງຢູ່ ເມື່ອໄດ້ຍິນເຖິງເຣື່ອງທີ່ກຳລັງເກີດຂຶ້ນໃນເມືອງໂກຣິນໂທ. ໂປໂລໄດ້ມຸ່ງໜ້າໄປທີ່ມາເກໂດເນັຽເພື່ອຈະໄປພົບຕີໂຕ ແຕ່ເຫດການທີ່ໂກຣິນໂທເຮັດໃຫ້ທ່ານຕ້ອງເດີນທາງໄປເບິ່ງສະຖານະການໃນທີ່ນັ້ນຢ່າງຮີບດ່ວນ. ການຢ້ຽມຢາມແບບກະທັນຫັນຄັ້ງນີ້ໄດ້ເຮັດໃຫ້ສະຖານະການຮ້າຍແຮງຂຶ້ນກວ່າເກົ່າ. ຫລັງຈາກການຢ້ຽມຢາມແລ້ວ, ໂປໂລກໍໄດ້ສົ່ງຕີໂຕໄປຫາຊາວໂກຣິນໂທພ້ອມດ້ວຍຈົດໝາຍ. ຈົດໝາຍສະບັບນີ້ໄດ້ສ້າງຄວາມໂສກເສົ້າອັນໃຫຍ່ຫລວງໃຫ້ກັບຜູ້ອ່ານ. ໃນພຣະທັມຕອນນີ້ (ຊຶ່ງເປັນຈົດໝາຍຂອງໂປ

ໂລ), ໂປໂລໄດ້ສະແດງຄວາມຊົມຊື່ນຍິນດີເມື່ອໄດ້ຮັບຂ່າວຈາກຕີໂຕ ເຣື່ອງການກັບໃຈຂອງຊາວໂກຣິນໂທເມື່ອພວກເຂົາໄດ້ອ່ານຈົດໝາຍຂອງທ່ານ.

## ຄຳຕິຊົມສາມາດເຮັດໃຫ້ເຈັບປວດ (7:5-8)

ພຣະທັມ 2 ໂກຣິນໂທ ໄດ້ໃຫ້ຄວາມເຂົ້າໃຈຫລາຍຢ່າງກັບພວກເຮົາກ່ຽວກັບບຸຄະລິກລັກສນະຂອງອັຄທູດໂປໂລ, ການ ນຳພາຂອງທ່ານ, ແລະຄວາມຮັກທີ່ທ່ານມີຕໍ່ຄົນທັງຫລາຍ. ຄວາມລຳບາກບໍ່ໄດ້ເຮັດໃຫ້ໂປໂລທໍ້ຖອຍໃນການທີ່ຈະປະ ກາດຂ່າວປະເສີດ (7: 5). ທ່ານໄດ້ເວົ້າເຖິງບັນຫາຕ່າງໆທີ່ທ່ານໄດ້ປະສົບມາໃຫ້ຊາວໂກຣິນໂທຟັງເທື່ອນຶ່ງແລ້ວ (2 ກຣທ 6:3-10). ແຕ່ໂປໂລເຊື່ອວ່າພຣະເຈົ້າໄດ້ຊົງໜູນໃຈທ່ານຢູ່ສເມີ (7:6).

ໂປໂລບອກວ່າທ່ານບໍ່ໄດ້ກິນແໜງທີ່ໄດ້ສົ່ງຈົດໝາຍຊຶ່ງເຮັດໃຫ້ຊາວໂກຣິນໂທເກີດຄວາມທຸກໃຈ (7:8) ເພາະທ່ານຮູ້ວ່ານັ້ນຄືສິ່ງຈຳເປັນທີ່ທ່ານຕ້ອງເຮັດ. ພວກເຮົາບໍ່ສາມາດທີ່ຈະຮູ້ລາຍລະອຽດໃນຈົດໝາຍຂອງທ່ານໂປໂລສະບັບນັ້ນ. ນັກສາສນາສາດບາງຄົນບອກວ່າຈົດໝາຍນັ້ນເວົ້າເຣື່ອງການຫລິ້ນຊູ້ທີ່ເກີດຂຶ້ນຢູ່ໃນຄຣິສຕະຈັກ (1 ກຣທ 5:1-4). ບາງຄົນບອກວ່າແມ່ນເຣື່ອງຜູ້ສອນປອມ ຫລືພວກອັຄສາວົກທຽມ (2 ກຣທ 10-13). ອີກບາງຄົນກໍບອກວ່າແມ່ນເຣື່ອງການໃຫ້ອະພັຍແກ່ຜູ້ທີ່ເຮັດໃຫ້ເກີດຄວາມທຸກໂສກ (2 ກຣທ 2:3-8). ສລຸບແລ້ວບໍ່ມີຜູ້ໃດຮູ້, ແຕ່ສິ່ງນຶ່ງທີ່ທຸກຄົນຮູ້ຄືຈົດໝາຍສະບັບນັ້ນໄດ້ເຮັດໃຫ້ຜູ້ອ່ານເກີດຄວາມເຈັບປວດທີ່ສຸດ.

## ຄຳຕິຊົມສາມາດເຮັດໃຫ້ເກີດປໂຍດ (7: 9-10)

ຈົດໝາຍຂອງໂປໂລເຮັດໃຫ້ຜູ້ອ່ານເກີດຄວາມທຸກໃຈ; ແຕ່ຄວາມທຸກໃຈນັ້ນໄດ້ເຮັດໃຫ້ຄຣິສຕຽນທີ່ໂກຣິນໂທມີການປ່ຽນແປງ ແລະການກັບໃຈໃໝ່ (7:7-9). ໂປໂລຮູ້ດີວ່າຄວາມທຸກໃຈທີ່ເກີດຂຶ້ນເພາະການຕຳນິອາດຈະມີຜົນສະທ້ອນໄດ້ນຶ່ງ ຫລືສອງຢ່າງເຊັ່ນວ່າ: ຜູ້ຖືກຕິຕຽນກັບໃຈເສັຽໃໝ່ ຫລືຜູ້ຖືກຕິຕຽນເກີດຄວາມຂົມຂື່ນຫລາຍຂຶ້ນ. ແຕ່ຄວາມທຸກໃຈທີ່ນຳໄປເຖິງຄວາມຕາຍແມ່ນ *"ຄວາມທຸກໃຈຕາມຢ່າງຊາວໂລກ"* (7:10). ການຕາຍຂອງຢູດາຄືຜົນຂອງຄວາມທຸກໃຈຢ່າງຊາວໂລກ (ມັດທາຍ 27:3). ຢູດາເສັຽໃຈໃນສິ່ງທີ່ເຂົາໄດ້ເຮັດຕໍ່ພຣະເຢຊູ ແລະຄວາມເສັຽໃຈຂອງເຂົາໄດ້ນຳຕົວເອງໄປເຖິງຄວາມຕາຍ.

ຄວາມທຸກໃຈທີ່ນຳໄປສູ່ການກັບໃຈໃໝ່ແມ່ນ *"ຄວາມທຸກໃຈຕາມຢ່າງຊອບພຣະທັຍຂອງພຣະເຈົ້າ"* (7:10). ພວກເຮົາໄດ້ເຫັນການທຸກໃຈຊຶ່ງນຳໄປສູ່ການກັບໃຈໃໝ່ ແລະຄວາມພົ້ນໃນຊີວິດຂອງກະສັດດາວິດ ແລະຊີວິດຂອງອັຄສາວົກເປໂຕ. ຄວາມທຸກໃຈທີ່ນຳໄປສູ່ການກັບໃຈໃໝ່ແລະໄປສູ່ຄວາມພົ້ນຈະບໍ່ປະຄວາມກິນແໜງໄວ້ພາຍຫລັງ. ຖ້າພວກເຮົາເຫັນການຕຳນິເປັນເຣື່ອງໂຈມຕີສ່ວນຕົວ, ພວກເຮົາຈະພຍາຍາມປ້ອງກັນຕົວເອງ. ແຕ່ຖ້າພວກເຮົາເຫັນຄຳຕຳນິເປັນການພຍາຍາມທີ່ຈະຊ່ວຍເຮົາ, ພວກເຮົາຈະຕອບຮັບການຕິຊົມນັ້ນໄດ້ຢ່າງຖືກຕ້ອງ.

## ຄຳຕິຊົມສາມາດມາຈາກພຣະເຈົ້າ (7:11-16)

ໂປໂລເຕືອນຄຣິສຕຽນທີ່ໂກຣິນໂທວ່າ *"ພວກເຈົ້າໄດ້ຮັບຄວາມທຸກໃຈຢ່າງທີ່ຊອບພຣະທັຍພຣະເຈົ້າ ຈຶ່ງບໍ່ໄດ້ຮັບຜົນຮ້າຍຈາກເຮົາຈັກຢ່າງ"* (7:9). ພຣະເຈົ້າສາມາດສົ່ງຄຳຕິຕຽນມາເຖິງພວກເຮົາໄດ້ຫລາຍທາງ. ໃນຈົດໝາຍເຖິງຊາວເມືອງໂກຣິນໂທ, ພຣະເຈົ້າໄດ້ສົ່ງຄຳຕິຕຽນຂອງພຣະອົງຜ່ານຄຳເວົ້າຂອງອັຄສາວົກໂປໂລ. ຄຳຕຳນິທີ່ມາຈາກພຣະເຈົ້າຈະຊ່ວຍນຳໄປສູ່ການປ່ຽນແປງນິສັຍ ແລະຈະນຳພາໃຫ້ໄປໃນທາງທີ່ຖືກຕ້ອງ.

ຄຳຕຳນິທີ່ມາຈາກພຣະເຈົ້າຈະຊ່ວຍໃຫ້ເກີດການປ່ຽນແປງດັ່ງທີ່ໂປໂລໄດ້ໃຫ້ລາຍລະອຽດໃນຂໍ້ 7:11: ຄວາມຂຍັນຂັນແຂງ, ເອົາໃຈໃສ່ທີ່ຈະແກ້ຕົວ, ຄວາມຕື່ນຕົວ, ຄວາມອາລັຍ, ຄວາມຮ້ອນຮົນ, ແລະຄວາມຕຽມພ້ອມທີ່ຈະເຫັນຄວາມຍຸຕິທັມເກີດຂຶ້ນ. ການຕອບຮັບຄຳຕິຕຽນຢ່າງຖືກຕ້ອງຂອງຄຣິສຕຽນທີ່ໂກຣິນໂທໄດ້ເປັນທີ່ຊູໃຈໃຫ້ກັບໂປໂລແລະຕີໂຕ ຜູ້ເປັນເພື່ອນຮ່ວມງານຢ່າງຫລວງຫລາຍ (7:13). ແທນທີ່ຈະຕໍ່ສູ້ຕີໂຕ, ຊາວໂກຣິນໂທໄດ້ຕ້ອນຮັບຜູ້ຮັບໃຊ້ຂອງພຣະເຈົ້າດ້ວຍຄວາມຢຳເກງ (7:15). ຈາກການຕ້ອນຮັບຕີໂຕຂອງພີ່ນ້ອງຄຣິສຕຽນໃນຄັ້ງນີ້, ໂປໂລສາມາດກ່າວໄດ້ວ່າທ່ານມີຄວາມ "*ເຊື່ອໝັ້ນພວກຄຣິສຕຽນເມືອງໂກຣິນໂທໄດ້ທຸກສິ່ງ*" (7:16).

## ຄຳສອນສຳລັບພວກເຮົາ

ບາງຄັ້ງໃນຊີວິດຂອງເຮົາ, ຄຳຕຳນິຄືສິ່ງທີ່ເຮົາຕ້ອງການ. ພໍ່ແມ່ທີ່ບໍ່ລົງໂທດ ແລະຄວບຄຸມຊີວິດຂອງລູກໆອາດຈະເປີດໂອກາດໃຫ້ຄວາມຜິດຫວັງເຂົ້າມາເຖິງຊີວິດຂອງພວກເຂົາໃນບັ້ນປາຍ. ຄຣິສຕະຈັກທີ່ບໍ່ແກ້ໄຂບັນຫາໃຫ້ຖືກຕ້ອງກັບເວລາ ອາດຈະຖືກທຳລາຍເພາະບັນຫາເລົ່ານັ້ນ. ການຕິຊົມຈະຕ້ອງເຮັດໃຫ້ຖືກຕ້ອງ ເພາະການຕິຊົມສາມາດຊ່ວຍຊີວິດ ຫລືທຳລາຍຊີວິດນັ້ນໄດ້.

ພວກເຮົາຄວນຣະມັດຣະວັງເວລາຕິຊົມຄົນອື່ນ. ຈົ່ງຖາມຕົວເອງວ່າ: ການຕິຊົມນີ້ແມ່ນເພື່ອໃຫ້ຕົວເອງເບົາໃຈບໍ່? ການຕິຊົມນີ້ແມ່ນເພື່ອໃຫ້ຜູ້ຮັບມີການຕື່ນຕົວເພື່ອປ່ຽນແປງສະພາບໃຫ້ດີຂຶ້ນບໍ່? ພວກເຮົາໄດ້ເວົ້າ "*ຄວາມຈິງດ້ວຍໃຈຮັກ*" ຫລືບໍ່? (ເອເຟໂຊ 4:15).

## ຄຳຖາມ:

1. ມີຜົນປໂຍດຫຍັງແດ່ທີ່ສາມາດເກີດຂຶ້ນ ຈາກການຕິຊົມຢູ່ໃນຄອບຄົວ?

2. ຜູ້ໃດມີໜ້າທີ່ຮັບຜິດຊອບໃນການໃຫ້ຄຳຕິຊົມໃນຄອບຄົວ?

3. ມີວິທີໃດແດ່ທີ່ຄຣິສຕະຈັກຈະສາມາດໄດ້ຮັບປໂຍດຈາກການຕິຊົມ?

4. ຄົນທັງຫລາຍຄວນຈະຕອບຮັບການຕິຊົມວິທີໃດ?

5. ມີວິທີໃດແດ່ທີ່ພວກເຮົາສາມາດຈະ "*ຕິເພື່ອກໍ່*" ໄດ້?

6. ພວກເຮົາຈະຫລີກເວັ້ນການຕິຊົມຊຶ່ງນຳໄປສູ່ຄວາມພິນາດໄດ້ແນວໃດແດ່?

7. ເປັນຫຍັງຄົນທັງຫລາຍບໍ່ຢາກຈະເປັນຜູ້ຕິຊົມ?

## ບົດຮຽນທີ 9

## ເຫດຜົນຂອງການຖວາຍ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** 2 ໂກຣິນໂທ 8: 1-21
**ຂໍ້ພຣະຄັມພີສໍາລັບເບື້ອງຫຼັງ:** 2 ໂກຣິນໂທ 8
**ຈຸດສໍາຄັນຂອງບົດຮຽນນີ້:** ຮຽນຮູ້ເຖິງເຫດຜົນວ່າເປັນຫຍັງພວກເຮົາຈຶ່ງມີການຖວາຍເພື່ອວຽກງານຂອງພຣະເຈົ້າ.

**ຄໍາຖາມເພື່ອການສໍາຣວດ:** ການຖວາຍຊັບສິນຂອງທ່ານຖືກຕ້ອງຕາມຄໍາສອນໃນພຣະສັນຍາໃໝ່ຫລືບໍ່?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະໄດ້ຮູ້ເຫດຜົນຂອງການຖວາຍຊັບ ແລະຈະໄດ້ເຫັນຄວາມສໍາຄັນຂອງການຖວາຍໃນຊີວິດຂອງຂ້ອຍ.

### ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:

- ພຣະຄັມພີຄືຫລັກສໍາຄັນສໍາລັບຊີວິດແລະການຮັບໃຊ້.
- ເວົ້າເຣື່ອງຂ່າວປະເສີດກັບຄົນທັງຫລາຍ.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ໃຫ້ທຸກຄົນໃນຄອບຄົວຂອງພຣະເຈົ້າມີສ່ວນໃນການບໍຣິຫານແລະການຮັບໃຊ້.
- ເຫັນທຸກຄົນວ່າສໍາຄັນເພາະພຣະເຈົ້າຊົງເປັນຜູ້ສ້າງມະນຸດ.
- ສົ່ງເສີມຄອບຄົວໃຫ້ເຂັ້ມແຂງ.
- ຈັດຕຽມຄົນທັງຫລາຍໃຫ້ເປັນຜູ້ນໍາທີ່ມີຄຸນລັກສນະຂອງຜູ້ຮັບໃຊ້.

### ຄໍານໍາ

ຖ້າທ່ານຢາກເປັນເໝືອນພຣະເຢຊູຄຣິດ, ຖືການຮັບໃຊ້ເປັນເຣື່ອງສ່ວນຕົວ, ທ່ານຈະຕ້ອງຮຽນຮູ້ເຫດຜົນໃນພຣະສັນຍາໃໝ່ສໍາລັບຜູ້ຖວາຍ. ການຖວາຍແລະການຮັບໃຊ້ຂອງຄຣິສຕະຈັກເປັນສິ່ງທີ່ແຍກກັນບໍ່ໄດ້. ການຖວາຍເປັນເຣື່ອງທີ່ທຸກຄົນຈະຕ້ອງສຶກສາໃຫ້ຮູ້. ບາງຄົນຮູ້ສຶກບໍ່ສະບາຍໃຈຖ້າມີການເວົ້າເຣື່ອງການຖວາຍຊັບໃນຄຣິສຕະຈັກ. ແຕ່ການຖວາຍເປັນເຄື່ອງວັດແທກຊີວິດຝ່າຍຈິດວິນຍານຂອງພວກຜູ້ເຊື່ອແຕ່ລະຄົນ. ທຸກຄົນຈະຕ້ອງຮຽນຮູ້.

### 1. ການຖວາຍຈະຕ້ອງໄປທີ່ຄຣິສຕະຈັກ (8:1)

ຄໍາແນະນໍາເຣື່ອງການຖວາຍໃນ 2 ໂກຣິນໂທ8 ແລະໃນ 1 ໂກຣິນໂທ 16:2 ແມ່ນຄໍາສອນອັນດຽວກັນ. ເນື່ອງຈາກຄຣິສຕຽນທີ່ໂກຣິນໂທບໍ່ໄດ້ພາກັນປະຕິບັດຕາມ, ໂປໂລຈຶ່ງໄດ້ໃຫ້ຄໍາສອນນີ້ອີກເທື່ອນຶ່ງ. ທຸກວັນຕົ້ນສັປດາ (ວັນອາທິດ), ຄຣິສຕຽນທຸກຄົນຈະຕ້ອງນໍາເຄື່ອງຖວາຍຂອງຕົນ (ເງິນຖວາຍ) ມາຍັງຄຣິສຕະຈັກຂອງພຣະເຈົ້າ (ໂບດ). ຄວາມຮັບຜິດຊອບອັນແລກຂອງຄຣິສຕຽນຄືການຖວາຍໃຫ້ກັບຄຣິສຕະຈັກທີ່ຕົນເປັນສະມາຊິກຢູ່. ໃນພຣະທັມຕອນນີ້,

ການຖວາຍຂອງຊາວຢິວທີ່ເປັນຄຣິສຕຽນມີຄວາມສຳຄັນຫລາຍ ເພາະການຖວາຍນີ້ຈະໄດ້ເປັນພຍານໃຫ້ກັບຄຣິສຕະຈັກຂອງຊາວຕ່າງຊາດ.

ການຖວາຍເປັນຄຳສອນໃນພຣະທັມຄັມພີ. ຖ້າຄຣິສຕຽນບໍ່ຖວາຍໃຫ້ກັບຄຣິສຕະຈັກຂອງຕົນ, ພວກເຮົາສາມາດເວົ້າໄດ້ວ່າຈິດໃຈຂອງພວກເຂົາບໍ່ໄດ້ຢູ່ທີ່ການຮັບໃຊ້ໃນຄຣິສຕະຈັກນັ້ນໆ (ມັດທາຍ 6:21). ທ່ານອາດຈະຖວາຍພິເສດໃຫ້ກັບວຽກງານຂອງພຣະເຈົ້າຜ່ານບຸກຄົນ ແລະອົງການຕ່າງໆ (2 ຕມທ 1:16-18 ແລະ ໂຣມ 16); ແຕ່ຄວາມຮັບຜິດຊອບອັນແລກຂອງທ່ານຄືການຖວາຍໃຫ້ກັບໂບດທີ່ຕົນສັງກັດແລະຮັບໃຊ້ຢູ່.

## <u>2. ການຖວາຍຈະຕ້ອງມາຈາກໃຈ (8:2-9)</u>

ການຖວາຍແບບຄຣິສຕຽນບໍ່ໄດ້ຂຶ້ນຢູ່ກັບວັດຖຸສິ່ງຂອງທີ່ມີ ແຕ່ຂຶ້ນຢູ່ກັບຄວາມເຊື່ອໝັ້ນ. ຄຣິສຕຽນທີ່ແຂວງມາເກໂດເນັຽເປັນຄົນທຸກຍາກ ແລະນອກນັ້ນພວກເຂົາເຈົ້າຍັງຖືກການຂົ່ມເຫງ. ເພາະພວກເຂົາຮັກພຣະເຢຊູຄຣິດ, ພວກເຂົາຈຶ່ງຢາກມີສ່ວນເຣື່ອງການຖວາຍ. ພວກເຂົາບໍ່ໄດ້ບອກວ່າ *"ພວກເຮົາຈະຮັກສາທຸກຢ່າງໄວ້ເພື່ອຕົນເອງ! "* ພວກເຂົາຕຽມພ້ອມທີ່ຈະຖວາຍເພື່ອຊ່ວຍເຫລືອຜູ້ທີ່ຂາດເຂີນ. ເຂົາເຈົ້າເຫັນວ່າການຖວາຍແມ່ນພຣະຄຸນ (7:1,6,7,9, 19 ແລະ 9:8). ການຖວາຍແບບຄຣິສຕຽນເກີດມາຈາກຈິດໃຈ, ການສແດງຄວາມຮັກຕໍ່ພຣະຄຣິດຜູ້ຊົງໂຜດຄົນທັງຫລາຍໃຫ້ພົ້ນຢ່າງບໍ່ໄດ້ຄິດຄ່າ.

ຊາວໂກຣິນໂທມີບໍຣິບູນໃນທຸກສິ່ງ (8:7), ແລະໂປໂລຊັກຊວນພວກເຂົາໃຫ້ມີພຣະຄຸນໃນການຖວາຍ. ຖ້າພວກເຮົາບອກວ່າຕົວເອງມີຄວາມເຊື່ອແຕ່ບໍ່ເຄີຍຖວາຍ, ພວກເຮົາກໍປະຕິເສດຄຳພຍານຂອງຕົນເອງ. ຄວາມເຊື່ອ, ການປະກາດ, ການເປັນພຍານ, ການສຶກສາພຣະທັມ ຈະມາແທນພຣະຄຸນເຣື່ອງການຖວາຍກໍຫາບໍ່ໄດ້.

ໂປໂລບໍ່ພຽງແຕ່ໃຊ້ຄຣິສຕະຈັກທີ່ມາເກໂດເນັຽມາເປັນຕົວຢ່າງເທົ່ານັ້ນ, ແຕ່ທ່ານໄດ້ເອົາພຣະເຢຊູມາເປັນຕົວຢ່າງ. ພຣະເຢຊູຜູ້ຊົງມີທຸກຢ່າງ ໄດ້ລົງມາຮັບຄວາມທຸກຍາກໃນໂລກ (ເບິ່ງລາຍລະອຽດໃນ ຟລປ 2). ການໃຫ້ (ການຖວາຍ) ຄືການເປັນເໝືອນພຣະຄຣິດ ຜູ້ຊົງໃຊ້ຊີວິດຂອງພຣະອົງເພື່ອການໃຫ້ກັບຄົນອື່ນ.

## <u>3. ການຖວາຍຈະຕ້ອງຕາມຄວາມສາມາດ (8: 10-15)</u>

ປີນຶ່ງທີ່ຜ່ານມາ, ຄຣິສຕະຈັກທີ່ໂກຣິນໂທໄດ້ຮັບແນະນຳເຣື່ອງການຖວາຍ ແລະພວກເຂົາຍັງໄດ້ບອກວ່າພວກຕົນຈະມີສ່ວນຮ່ວມນຳ. ພາຍໃຕ້ການນຳພາຂອງຕີໂຕ, ພວກເຂົາເຈົ້າໄດ້ເລີ້ມຖວາຍເພື່ອໂຄງການນີ້ (8:6), ແລະໃນຕອນນີ້ໂປໂລໄດ້ຊັກຊວນໃຫ້ພວກເຂົາຈຶ່ງເຮັດວຽກງານນັ້ນໃຫ້ສຳເຣັດ. ຫລາຍໆຄັ້ງພວກເຮົາບໍ່ໄດ້ເຮັດໃນສິ່ງທີ່ເຮົາສັນຍາໄວ້ໃຫ້ສຳເຣັດ. ຖ້າຊາວໂກຣິນໂທເຮັດແບບນີ້ເຣື່ອງການກູ້ຢືມເງິນ, ພວກເຂົາຄົງຈະຕິດຕະລາງກັນໝົດທຸກຄົນແລ້ວ.

ໂປໂລໄດ້ໃຫ້ຫລັກເຣື່ອງການຖວາຍຕາມຄວາມສາມາດໃນພຣະທັມຂໍ້ 13. ການຖວາຍສິບຮັດເປັນແຜນການທີ່ຍຸດຕິທັມດີ. ການຖວາຍສິບຮັດເຮັດໃຫ້ມີຄວາມສເມີພາບ. ການຖວາຍແບບນີ້ ບໍ່ມີການເອົາຮັດເອົາປຽບກັນເພາະທຸກຄົນສາມາດຖວາຍຕາມພາກສ່ວນທີ່ເຂົາມີ. ທຸກຄົນສາມາດໄດ້ຮັບພຣະພອນເທົ່າໆກັນ. ພຣະເຈົ້າບໍ່ຊົງປະສົງຈຳນວນ, ແຕ່ພຣະອົງໄດ້ຊົງປະສົງພາກສ່ວນ. ຄົນຈົນແລະຄົນລວຍສາມາດໃຫ້ກັບໂຄງການແບບສເມີກັນ (ຂໍ້ 14). ໂປໂລອີງໃສ່ພຣະທັມອົພຍົບ 16:18 ເຣື່ອງພຣະເຈົ້າໃຫ້ພຣະພອນກັບຊາວຢິວທີ່ເຊື່ອຟັງພຣະອົງ; ແລ້ວພຣະອົງກໍຈະໃຫ້ພຣະພອນກັບຄຣິສຕຽນທີ່ເຊື່ອຟັງພຣະຄຳຂອງພຣະອົງເຣື່ອງການຖວາຍເຊັ່ນດຽວກັນ. ພຣະເຈົ້າຈະໃຫ້ພຣະພອນຜູ້ທີ່ຖວາຍ 10 ເປີເຊັນຂອງ $500 ແລະຜູ້ຖວາຍ 10 ເປີເຊັນຂອງ $100 ເທົ່າໆກັນ.

## 4. ເງິນຖວາຍຈະຕ້ອງຖືກດູແລດ້ວຍຄວາມສັດຊື່ (8:16-21)

ເພື່ອຫລີກເວັ້ນການກ່າວຫາເລື່ອງການໃຊ້ເງິນໄປໃນທາງຜິດ, ໂປໂລໄດ້ຂໍໃຫ້ຄຣິສຕະຈັກໄດ້ແຕ່ງຕັ້ງຜູ້ຕາງໜ້າສາມຄົນເພື່ອດູແລເງິນທີ່ເກັບມາໄດ້. ຄະນະຜູ້ຮັກສາເງິນມີຕີໂຕ (8:16-17), ພີ່ນ້ອງຜູ້ມີຊື່ສຽງນຶ່ງຄົນ (8:18-19), ແລະຄົນທີສາມທີ່ຄຣິສຕະຈັກໄດ້ເລືອກ (8:22). ນີ້ແມ່ນວິທີທີ່ດີໃນການເຮັດທຸຣະກິດ. ພວກເຮົາໄດ້ເຫັນຄຣິສຕະຈັກ ແລະ ອົງການຈັດຕັ້ງໃນສມັຍນີ້ຫລາຍບ່ອນເກີດມີບັນຫາເພາະຂາດການຈັດຕັ້ງທີ່ຮອບຄອບ. ເງິນທຸກກີບ (ທຸກໂດລລາ)ທີ່ຄຣິສຕະຈັກໄດ້ຮັບຈະຕ້ອງຖືກນຳໄປລົງບັນຊີ. ຕ້ອງມີຫລາຍກວ່ານຶ່ງຄົນເວລານັບເງິນ. ຄຣິສຕຽນບາງຄົນເສັຽຊື່ສຽງເພາະການໃຊ້ເງິນຂອງພຣະເຈົ້າໄປໃນທາງຜິດ ຫລືຮັກສາເງິນແບບບໍ່ຣະມັດຣະວັງ. ພຣະທັມຂໍ້ 21 ເຖິງ 22 ເປັນຫລັກສຳຄັນເລື່ອງການດູແລເງິນຂອງພຣະເຈົ້າ: ຢ່າເປີດໂອກາດເພື່ອການຕູ່ຫາບໍ່ວ່າຈະຕໍ່ພຣະພັກພຣະເຈົ້າ ຫລືຕໍ່ໜ້າມະນຸດ. ການບອກຄົນອື່ນວ່າ *"ພຣະເຈົ້າຮູ້ຈິດໃຈຂອງຂ້ອຍ"* ນັ້ນຍັງບໍ່ພຽງພໍ. ຈົ່ງລະນຶກສເມີວ່າຄົນອື່ນໆກຳລັງຈອບເບິ່ງພວກເຮົາ ແລະບາງຄົນຍັງລໍຄອຍໂອກາດທີ່ຈະກ່າວຫາວ່າພວກເຮົາສໍ້ໂກງ.

## ຄຳສອນສຳລັບພວກເຮົາ

ໃນຂະນະທີ່ທ່ານຕິດຕາມພຣະເຢຊູຄຣິດ, ທ່ານຈະມີບຸກຄະລິກລັກສນະແລະຄວາມຮູ້ສຶກເໝືອນດັ່ງພຣະອົງ. ທ່ານຈະກາຍເປັນຄົນທີ່ມີຄວາມເມດຕາຕໍ່ຄົນອື່ນຫລາຍຂຶ້ນ. ຄຣິສຕຽນທີ່ເຕີບໃຫຍ່ແລ້ວຈະດຳເນີນຊີວິດແບບບໍ່ເຫັນແກ່ຕົວເພື່ອເຂົາຈະໄດ້ຮັບໃຊ້ຜູ້ທີ່ກຳລັງຂາດເຂີນ. ທ່ານໄດ້ຮຽນວິທີທີ່ຈະເປັນຜູ້ໃຫ້ບໍ່? ຖ້າທ່ານບໍ່ຮຽນເປັນຜູ້ໃຫ້, ທ່ານຈະເປັນຜູ້ຕິດຕາມພຣະຄຣິດໄດ້ແນວໃດ? ຄຣິສຕຽນຈະຕ້ອງຖາມຕົວເອງສເມີວ່າ: ຂ້າພະເຈົ້າຕຽມພ້ອມທີ່ຈະເຮັດຕາມນ້ຳພຣະທັຍຂອງພຣະເຈົ້າໃນຊີວິດບໍ່?

## ຄຳຖາມ:

1. ທ່ານຄິດວ່າໂບດມີເງິນຫລາຍໂພດບໍ່? ໃນໂບດຂອງທ່ານໄດ້ມີການຂໍໃຫ້ສະມາຊິກເຊັນສັນຍາຖວາຍເພື່ອງົບປມານແຕ່ລະປີບໍ່?
2. ທ່ານຄິດວ່າເປັນຫຍັງທ່ານຈຶ່ງຮູ້ສຶກປັ້ນໃຈເມື່ອເຫັນຄຣິສຕະຈັກຍາກຈົນມີການຖວາຍແບບກວ້າງຂວາງ?
3. ທ່ານເຊື່ອວ່າຄົນທີ່ບໍ່ຖວາຍຈະເປັນສາວົກຂອງພຣະຄຣິດໄດ້ບໍ່?
4. ທ່ານເຫັນເຫດຜົນຂອງການຖວາຍຈັກຢ່າງໃນບົດຮຽນນີ້?
5. ຄວາມເຕີບໃຫຍ່ເລື່ອງການຖວາຍເປັນຫລັກຖານວ່າພຣະຄຸນຂອງພຣະເຈົ້າກຳລັງທຳງານໃນຊີວິດຂອງຄົນບໍ່?
6. ທ່ານຄິດວ່າຄຣິສຕຽນໃນເຂດອະເມຣິກາເໜືອມີຄວາມຮັບຜິດຊອບເລື່ອງການຊ່ວຍເຫລືອທາງດ້ານການເງິນ ສຳລັບຄຣິສຕຽນທີ່ຢູ່ໃນປະເທດທີ່ກຳລັງພັທນາບໍ່?.

# ບົດຮຽນທີ 10

# ພຣະພອນຈາກການຖວາຍ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** 2 ໂກຣິນໂທ 9:6-15
**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** 2 ໂກຣິນໂທ 9
**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຈົ້າຊົງອວຍພຣະພອນພວກເຮົາຢ່າງລົ້ນເຫລືອເວລາພວກເຮົາຖວາຍ.

**ຄຳຖາມເພື່ອການສຳຣວດ:** ການຖວາຍເປັນພອນຫລາຍກວ່າກັບຮັບແທ້ບໍ່?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອອະທິບາຍພຣະພອນທີ່ພຣະເຈົ້າຊົງປະທານເວລາພວກເຮົາຖວາຍ.

**ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:**

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ເຊື່ອຟັງແລະຮັບໃຊ້ພຣະຄຣິດເພື່ອຊ່ວຍຄວາມຕ້ອງການດ້ານຮ່າງກາຍ, ດ້ານຈິດວິນຍານ, ແລະດ້ານຄວາມຮູ້ສຶກ.
- ຈັດຕຽມຄົນທັງຫລາຍໃຫ້ເປັນຜູ້ນຳທີ່ມີຄຸນລັກສນະຂອງຜູ້ຮັບໃຊ້.

## ຄຳນຳ

ຖ້າທ່ານຢາກເປັນເໝືອນພຣະເຢຊູຄຣິດ, ຖືການຮັບໃຊ້ເປັນເຣື່ອງສ່ວນຕົວ, ທ່ານຈະຮູ້ວ່າພຣະເຈົ້າໄດ້ຊົງໃຫ້ພອນທ່ານຫລາຍໆວິທີເພາະການຖວາຍຂອງທ່ານ. ໃນບົດຮຽນນີ້ ໂປໂລຈະເວົ້າເຖິງພຣະສັນຍາທີ່ພວກເຮົາແຕ່ລະຄົນສາມາດຮັບເອົາເປັນຂອງຕົວເອງຖ້າພວກເຮົາຊື່ສັດໃນການຖວາຍໃຫ້ກັບພຣະເຈົ້າ. ບົດຮຽນນີ້ຈະສອນໃຫ້ຮູ້ວ່າການຖວາຍແມ່ນພຣະຄຸນ ແລະພຣະພອນຂອງຄຣິສຕຽນ, ແລະການຖວາຍບໍ່ແມ່ນກົດບັງຄັບ. ຖ້າຄຣິສຕຽນຜູ້ໃດຜູ້ນຶ່ງເກີດມີບັນຫາເຣື່ອງການຖວາຍ, ພວກເຮົາສາມາດເວົ້າໄດ້ວ່າຈິດໃຈຂອງຜູ້ນັ້ນມີບັນຫາ.

### 1. ການຖວາຍຈະນຳພຣະພອນມາໃຫ້ພວກເຮົາ (9:6-11)

ໂປໂລໃຊ້ຫລັກເຣື່ອງການປູກຝັງເພື່ອອະທິບາຍຈຸດນີ້. ຊາວນາຜູ້ທີ່ຫວ່ານຫລາຍກໍເກັບກ່ຽວໄດ້ຫລາຍ (ເບິ່ງ ສຸພາສິດ 11:24; ລູກາ 6:38; ແລະ ຄາລາເຕັຽ 6:7-8). ພຣະເຈົ້າຈະບໍ່ຍອມເປັນໜີ້ມະນຸດ; ພຣະອົງຜູ້ຊົງສັດຊື່ແລະຈະຊົງໃຫ້ພຣະພອນເວລາພວກເຮົາສັດຊື່ແລະເຊື່ອຟັງພຣະອົງ.

ຫລາຍຄົນເຂົ້າໃຈຜິດພຣະທັມຂໍ້ 7. ໂປໂລບໍ່ໄດ້ໃຫ້ຄວາມສຳຄັນກັບຈຳນວນທີ່ນຳມາຖວາຍແຕ່ທ່ານເນັ້ນເຖິງທ່າທີຂອງຜູ້ຖວາຍ. ໂປໂລໄດ້ບອກໄວ້ກ່ອນແລ້ວວ່າພວກເຂົາຄວນຖວາຍເທົ່າໃດໃນ 2 ໂກຣິນໂທ 8:12-15; ທຸກຄົນຕ້ອງຖວາຍຕາມພາກສ່ວນທີ່ຕົນມີ. ແຕ່ສຳລັບຄຣິສຕຽນຜູ້ທີ່ໃຫ້ດ້ວຍຄວາມຂືນໃຈ, ພວກເຂົາກໍຈະຂາດພຣະພອນທີ່ມາຈາກ

ການຖວາຍ. ການຖວາຍຕ້ອງອອກມາຈາກໃຈເພາະພຣະເຈົ້າຊົງຮັກຄົນທີ່ໃຫ້ດ້ວຍຄວາມຊື່ນໃຈຍິນດີ. ຄຣິສຕຽນຫລາຍຄົນຕີຄວາມໝາຍພຣະທັມຂໍ້ນີ້ວ່າ ພວກເຂົາຈະໃຫ້ເທົ່າໃດກໍໄດ້ຖ້າໃຫ້ດ້ວຍໃຈຍິນດີ. ນັ້ນຄືຄວາມຄິດທີ່ຜິດໄປຈາກຄຳສອນ. ຈິດໃຈທີ່ຊື່ນຊົມຍິນດີບໍ່ເໝືອນກັບຈິດໃຈທີ່ເຊື່ອຟັງ. ພວກເຮົາຈະຕ້ອງມີຈິດໃຈທີ່ສັດຊື່ແລະຊື່ນຊົມຍິນດີ, ເພາະພວກເຮົາໄດ້ຖວາຍຢ່າງຖືກຕ້ອງ ແລະດ້ວຍຈິດໃຈທີ່ຕຽມພ້ອມ.

ສັງເກດເບິ່ງຄຳວ່າ *"ທຸກສິ່ງທຸກຢ່າງ"* ໃນຂໍ້ 8. "ພຣະເຈົ້າຊົງຣິດອາດປະທານພຣະຄຸນອັນອຸດົມທຸກຢ່າງແກ່ເຈົ້າທັງຫລາຍ ເພື່ອໃຫ້ພວກເຈົ້າມີທຸກສິ່ງທຸກຢ່າງພຽງພໍສຳລັບຕົວສເມີ ທັງຈະມີສິ່ງຂອງສຳລັບການງານດີທຸກຢ່າງດ້ວຍ." ນີ້ຄືພຣະສັນຍາຂອງພຣະເຈົ້າສຳລັບຜູ້ທີ່ເຊື່ອຟັງພຣະອົງ. ພຣະອົງຜູ້ຊົງສັດຊື່ ຈະປະທານສິ່ງທີ່ພວກເຮົາຂາດເຂີນທາງດ້ານຈິດວິນຍານ (2:6), ດ້ານວັດຖຸສິ່ງຂອງ (9:8), ແລະດ້ານຮ່າງກາຍ (12:9). ພຣະພອນຂອງພຣະເຈົ້າບໍ່ແມ່ນເພື່ອພວກເຮົາເທົ່ານັ້ນ ແຕ່ເພື່ອພວກເຮົາຈະໄດ້ຊ່ວຍຄົນອື່ນທີ່ຂາດເຂີນດ້ວຍ.

ໃນທັສນະຂອງຊາວໂລກ, ຜູ້ທີ່ໃຫ້ (ຖວາຍ) ຈະເປັນຜູ້ສູນເສັຽ; ແຕ່ໃນທາງຂອງພຣະເຈົ້າບໍ່ເປັນດັ່ງນັ້ນ. ພຣະທັມກິຈການ 20:35 ບອກໄວ້ວ່າ, *"ການໃຫ້ເປັນເຫດໃຫ້ມີຄວາມສຸກຫລາຍກວ່າການຮັບ."* ລູກາ 6:38 ສັນຍາວ່າ *"ຈົ່ງໃຫ້ເຂົາແລະພຣະເຈົ້າຈະຊົງໃຫ້ທ່ານ."* ພຣະທັມນີ້ບໍ່ໄດ້ສອນເຮົາໃຫ້ຕໍ່ລອງກັບພຣະເຈົ້າ ຫລືໃຫ້ເບິ່ງການຖວາຍຂອງເຮົາຄືການຊື້ພຣະພອນ. ພວກເຮົາຈະຕ້ອງເບິ່ງການຖວາຍຄືໂອກາດເພື່ອການສະແດງຄວາມຮັກຂອງເຮົາຕໍ່ພຣະເຈົ້າ ແລະໂອກາດເພື່ອການສະແດງຄວາມໄວ້ວາງໃຈຂອງເຮົາໃນພຣະຄຳຂອງພຣະອົງ.

## 2. ການຖວາຍຈະນຳກຽດມາສູ່ພຣະເຈົ້າ (9:12-15)

ໂປໂລໄດ້ບອກຊາວໂກຣິນໂທຫລາຍໆເທື່ອວ່າພວກເຂົາເຈົ້າເປັນຄົນຮັ່ງມີຝ່າຍຈິດວິນຍານໃນພຣະຄຣິດ (1 ກຣທ 1:5 ແລະ 4:8; 2 ກຣທ 8:9 ແລະ 9:11). ພຣະເຈົ້າຊົງເຮັດໃຫ້ພວກເຮົາຮັ່ງມີ, ພວກເຮົາເຮັດໃຫ້ຜູ້ອື່ນຮັ່ງມີ, ແລະພຣະເຈົ້າຊົງໄດ້ຮັບກຽດ ແລະການຂອບພຣະຄຸນ. ໂປໂລກ່າວວ່າການຖວາຍຂອງພວກເຂົາບໍ່ພຽງຈະຊ່ວຍຜູ້ທີ່ຂາດເຂີນເທົ່ານັ້ນ *"ແຕ່ຍັງເປັນເຫດໃຫ້ມີການຂອບພຣະຄຸນພຣະເຈົ້າອີກດ້ວຍ."*

ພຣະທັມຂໍ້ 13 ໃຫ້ເຫດຜົນສອງຢ່າງທີ່ຊາວຢິວຜູ້ໄດ້ຮັບຂອງຖວາຍຈະສັຣເສີນພຣະເຈົ້າ: (1) ເພາະຜູ້ໃຫ້ໄດ້ສະແດງເຖິງການເຊື່ອຟັງພຣະຄຳ ແລະ (2) ເພາະຈິດໃຈກວ້າງຂວາງຂອງຜູ້ໃຫ້ນີ້ ໄດ້ຊ່ວຍພວກເຂົາ ແລະຄົນທັງຫລາຍ. ພວກຜູ້ຮັບທັງຫລາຍຈະໄດ້ອ້ອນວອນເພື່ອຄຣິສຕະຈັກ ແລະຈະຮັກຄຣິສຕະຈັກຂອງພຣະເຈົ້າຫລາຍຂຶ້ນ.

ຄວາມຈິງແລ້ວການຮິບໂຮມເຄື່ອງຖວາຍໃນຄັ້ງນີ້ກໍມີເປົ້າໝາຍສຳຄັນອີກຢ່າງນຶ່ງ. ໂປໂລມີເຈຕນາທີ່ຈະເຕົ້າໂຮມຄຣິສຕະຈັກຂອງພຣະເຈົ້າໃຫ້ເປັນອັນດຽວກັນ. ຄົນທັງຫລາຍໃນສມັຍນັ້ນຄິດວ່າຄຣິສຕະຈັກຂອງຄົນຢິວ ແລະຄຣິສຕະຈັກຂອງຄົນຕ່າງຊາດບໍ່ໄດ້ຢູ່ໃນຄອບຄົວດຽວກັນ. ການຖວາຍພິເສດຄັ້ງນີ້ຈະບອກໃຫ້ທຸກຄົນຮູ້ວ່າໂປໂລບໍ່ໄດ້ແມ່ນສັດຕຣູຂອງຄົນຢິວແລະຄຣິສຕະຈັກຂອງພຣະເຈົ້າມີຄວາມເປັນອັນນຶ່ງອັນດຽວກັນໂດຍບໍ່ເລືອກເຊື້ອຊາດແລະເຜົ່າພັນ.

ໂປໂລປິດພຣະທັມບົດນີ້ດ້ວຍຄຳສັຣເສີນ. ທ່ານໄດ້ຂຽນເຣື່ອງການໃຫ້, ແລະຈິດໃຈຂອງທ່ານກໍເຕັມດ້ວຍສິ່ງດີທີ່ພຣະເຈົ້າໄດ້ຊົງປະທານແກ່ຄົນ. ໂປໂລກ່າວວ່າ *"ຈົ່ງຂອບພຣະຄຸນພຣະເຈົ້າເພາະຂອງພຣະຣາຊທານ."* ພວກເຮົາຮູ້ວ່າຂອງພຣະຣາຊທານທີ່ໂປໂລເວົ້າເຖິງຄື ອົງພຣະບຸດ, ພຣະເຢຊູຄຣິດ ແລະຊີວິດນິຣັນທີ່ພຣະອົງປະທານໃຫ້.

## ຄຳສອນສຳລັບພວກເຮົາ

ໃນຊີວິດຄຣິສຕຽນພວກເຮົາບໍ່ອາດຈະແຍກສິ່ງທີ່ຖືວ່າເປັນ "ວັດຖຸ" ແລະຂອງທີ່ຖືວ່າເປັນ "ຝ່າຍຈິດວິນຍານ." ພວກເຮົາຮູ້ວ່າທຸກຢ່າງທີ່ພວກເຮົາມີແມ່ນມາຈາກພຣະເຈົ້າ, ແລະພວກເຮົາຈະຕ້ອງໃຊ້ທຸກຢ່າງເພື່ອເປົ້າໝາຍຝ່າຍຈິດວິນຍານ. ໂປໂລສອນວ່າການໃຫ້ບໍ່ແມ່ນພາຣະໜັກ ແຕ່ແມ່ນພຣະພອນ. ໂປໂລສະແດງໃຫ້ເຮົາເຫັນວ່າການຖວາຍແບບຄຣິສຕຽນນຳຄວາມອຸດົມສົມບູນມາສູ່ຊີວິດ ແລະການຖວາຍເປັນນ້ຳພຸແຫ່ງພຣະພອນ. ການຖວາຍແມ່ນເຣື່ອງພຣະຄຸນ (8:1, 6-7,9,19; 9:8 ແລະ 14), ແລະຄຣິສຕຽນຜູ້ທີ່ເຂົ້າໃຈເຣື່ອງພຣະຄຸນຈະຮູ້ຈັກວິທີຖວາຍ.

**<u>ຄຳຖາມ:</u>**

1. ຄຣິສຕຽນຫລາຍຄົນບໍ່ຍອມຖວາຍເພາະພວກເຂົາມີໜີ້ສິນ. ໃນຂະນະດຽວກັນມີຄຣິສຕຽນຫລາຍໆຄົນສາມາດຊຳຣະໜີ້ໄດ້ກ່ອນກຳນົດເພາະພວກເຂົາເຊື່ອຟັງເຣື່ອງການຖວາຍ. ທ່ານມີຄວາມຄິດເຫັນແນວໃດໃນເຣື່ອງນີ້?

2. ໂປໂລສັ່ງສອນຄຣິສຕຽນແຕ່ລະຄົນຈົ່ງໃຫ້ຕາມທີ່ຕົນໄດ້ຄິດໝາຍໄວ້ໃນໃຈ. ທ່ານຄິດວ່າຄຳສອນນີ້ເວົ້າເຖິງການຖວາຍພິເສດເພື່ອຄົນທີ່ຂາດເຂີນ ຫລື ການຖວາຍນິ່ງສ່ວນສິບໃຫ້ກັບໂບດ?

3. ທ່ານຄິດວ່າຄຣິສຕຽນຄວນເພີ້ມເປີເຊັນຂອງການຖວາຍຂຶ້ນເພື່ອຊ່ວຍພັນທະກິດຂອງພຣະເຈົ້າຜ່ານຄຣິສຕະຈັກທ້ອງຖິ່ນບໍ່? ຖ້າເພີ້ມ, ຈົ່ງໃຫ້ເຫດຜົນ? ຖ້າບໍ່ເພີ້ມ, ຈົ່ງໃຫ້ເຫດຜົນ?

4. ທ່ານສາມາດໃຫ້ຄຳພຍານເຣື່ອງພຣະພອນທີ່ທ່ານໄດ້ຮັບເພາະການຖວາຍຢ່າງຊື່ສັດໃນຊີວິດຂອງທ່ານ ຫລືໃນຄຣິສຕະຈັກບໍ່?

5. ທ່ານຄິດວ່າຄຣິສຕະຈັກຂອງທ່ານເນັ້ນເຣື່ອງຊ່ວຍຄົນອື່ນຫລາຍໂພດບໍ່ ຫລືຄຣິສຕະຈັກຂອງທ່ານເນັ້ນເຣື່ອງຊ່ວຍຕົວເອງຫລາຍໂພດ? ໃຫ້ຕົວຢ່າງສຳລັບຄຳຕອບຂອງທ່ານ.

# ແກ້ໄຂຄວາມຂັດແຍ້ງ

# ບົດຮຽນທີ 11

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ຂ ໂກຣິນໂທ 10

**ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:** ຂ ໂກຣິນໂທ 10

**ຈຸດສຳຄັນຂອງບົດຮຽນນີ້:** ເພື່ອບອກໃຫ້ຮູ້ວ່າການເບິ່ງຜູ້ອື່ນໃນແງ່ດີ, ເວົ້າແຕ່ຄວາມຈິງ, ມີຫຍັງບໍ່ເຂົ້າໃຈກັນຄວນແກ້ໄຂຖາມກັນ.

**ຄຳຖາມເພື່ອການສຳຣວດ:** ເຮົາຈະແກ້ໄຂຄວາມບໍ່ເປັນນ້ຳນຶ່ງໃຈດຽວກັນຢ່າງໃດ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອເຮົາຈະຮູ້ຈັກວິທີທາງແກ້ໄຂຄວາມຄິດຕ່າງກັນ.

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ທຸກຄົນທີ່ເຊື່ອໃນພຣະເຢຊູເປັນຜູ້ຮັບໃຊ້ພຣະເຈົ້າ.
- ມະນຸດທຸກຄົນເປັນສິພຣະຫັດພຣະເຈົ້າ.
- ຊ່ອຍຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ກາຍເປັນຜູ້ນຳ.

## ບົດນຳ

ບໍ່ວ່າຈະເປັນສັງຄົມໃດ, ເຊື້ອຊາດໃດ, ຄວາມເຊື່ອໃດກໍຕາມຍ່ອມຈະມີຄວາມຄິດແລະຄວາມເຂົ້າໃຈບໍ່ຄືກັນ. ເນື່ອງຈາກຄວາມຄິດຈິດໃຈຕ່າງກັນນັ້ນເອງກາຍເປັນຕົ້ນເຫດໃຫ້ຄວາມແຕກແຍກເກີດຂຶ້ນໃນທຸກສຖານທີ່. ສຳລັບພວກເຮົາຜູ້ເປັນຄຣິສຕຽນຖືກສອນວ່າ *"ຈົ່ງປັບປຸງໃຫ້ດີຈະເຣີນຂຶ້ນ, ຈົ່ງຟັງຄຳວອນຂໍຂອງເຮົາ, ຈົ່ງເປັນນ້ຳນຶ່ງໃຈດຽວກັນ, ຈົ່ງຢູ່ຮ່ວມກັນໂດຍສງົບ"* (ຂ ໂກຣິນໂທ 13:11). ຄຳຖາມມີຢູ່ວ່າການເປັນນ້ຳນຶ່ງໃຈດຽວກັນນັ້ນຈະເອົາໃຈໃຜເປັນຈຸດຍືນ ເພາະຕ່າງຄົນຕ່າງມີຊີວິດຈິດໃຈຂອງ ໃຜລາວ ແຕ່ລະຄົນຕ່າງກໍມີເຫດຜົນດີກັນທັງນັ້ນ. ໂດຍສເພາະໂບດທີ່ມີຄົນຫລາຍກໍຍິ່ງມີຫລາຍໃຈ ແລະຫລາຍຄວາມຄິດ. ແຕ່ລະຄົນກໍຢາກໃຫ້ໂບດຕົນເອງເປັນຕາມໃຈຕົນເອງຄິດ. ພຣະເຢຊູຊົງກ່າວວ່າ *"ເຮົາໄດ້ລົງມາຈາກສວັນ ບໍ່ແມ່ນເພື່ອຈະເຮັດຕາມໃຈຂອງເຮົາເອງ ແຕ່ເພື່ອເຮັດຕາມພຣະທັຍ ຂອງພຣະອົງຜູ້ຊົງໃຊ້ເຮົາມາ"* (ໂຢຮັນ 6: 38). ສລຸບແລ້ວຄຳວ່າ conflict ນັ້ນແມ່ນການບໍ່ໄດ້ໃຈຕົນເອງ ດ້ວຍວ່າຫາກເພິ່ນເຮັດຖືກໃຈເຮົາແລ້ວແນ່ນອນບໍ່ມີ conflict. ດ້ວຍເຫດນີ້ຂ້າພະເຈົ້າຈຶ່ງມັກຖາມພີ່ນ້ອງໃນໂບດວ່າ ໄດ້ຫຍັງຈຶ່ງຈະດີໃຈກ່ອນໝູ່? ຫລາຍຄົນກໍຕອບຕ່າງກັນ. ໃນທີ່ສຸດກໍມາຢຸດຢູ່ບ່ອນ ວ່າ ໄດ້ໃຈແມ່ນດີໃຈກວ່າໝູ່. ຢ່າງໃດກໍດີ ເມື່ອທ່ານເຮັດວຽກງານຂອງພຣະເຈົ້າທ່ານກໍຢູ່ໃນໜ້າທີ່ຂອງບຸກຄົນທີ່ສາມເພື່ອນຳມະນຸດຜູ້ໄດ້ເຮັດຕາມໃຈຕົນເອງຈົນກາຍເປັນຄົນມີ Conflict ກັບພຣະເຈົ້າໃຫ້ຄືນດີກັບພຣະອົງ.

**ຍຸທພັນຈາກເບື້ອງເທິງ 10:1-6**

ສິດທິຂອງໂປໂລຄືຕັ້ງຕົນເປັນຕົວຢ່າງທີ່ດີແກ່ຄຣິສຕະຈັກ ດ້ວຍເຫດນີ້ເຮົາທັງຫລາຍຜູ້ເປັນຜູ້ຮັບໃຊ້ພຣະເຈົ້າ

ທຸກຄົນ, ທຸກຕຳແໜ່ງຄວນຈະເປັນແບບຢ່າງຂອງຄົນທັງປວງດັ່ງໂປໂລເປັນຕົວຢ່າງແກ່ພວກເຮົາ. ດ້ວຍວ່າຄົນທັງຫລາຍທີ່ຕິດຕາມພຣະເຢຊູມັກຈະເບິ່ງຜູ້ນຳ, ຜູ້ສອນ ພຣະທັມຂອງພຣະອົງເປັນຕົວຢ່າງສເມີ. ເຖິງແມ່ນວ່າຜູ້ນຳຄຣິສຕະຈັກ, ແລະບັນດາພວກເຖົ້າແກ່ພ້ອມຄຣູສອນໂຮງຮຽນວັນອາທິດຈະບອກສະມາຊິກວ່າ "ຢ່າເບິ່ງຂ້າ ພະເຈົ້າແຕ່ໃຫ້ເບິ່ງພຣະເຢຊູຄຣິດພຸ້ນເປັນຕົວຢ່າງ" ການທີ່ເວົ້າດັ່ງນີ້ກໍຍ້ອນຢ້ານວ່າສະມາຊິກຈະອ່ອນກຳລັງໃຈເມື່ອຜູ້ນຳເລົ່ານີ້ມີຂໍ້ບົກຜ່ອງ. ເຖິງແມ່ນວ່າສະມາຊິກຈະພະຍາຍາມເລັ່ງເປົ້າສາຍຕາ ໃສ່ພຣະເຢຊູຫລາຍປານໃດກໍຕາມ ພວກເຂົາເຈົ້າກໍບໍ່ສາມາດເບິ່ງເຫັນພຣະອົງຢ່າງຊັດເຈນໄດ້ ແຕ່ກັບເຫັນຊີວິດຂອງພວກຜູ້ນຳໃນ ໂບດຊຶ່ງເປັນຜູ້ຕາງໜ້າພຣະເຢຊູຫລາຍກວ່າເຫັນພຣະເຢຊູ. ດ້ວຍເຫດນີ້ຈຶ່ງເປັນການຈຳເປັນທີ່ຜູ້ນຳທຸກຂະແໜງຈະຕ້ອງປະຕິບັດຕົວໃຫ້ເປັນແບບຢ່າງແກ່ຄົນທັງປວງເໝືອນດັ່ງໂປໂລໄດ້ເປັນຕົວຢ່າງແກ່ທຸກຄົນມາແລ້ວ.

ໂປໂລອ້າງເຖິງສິດທິຂອງທ່ານຫລາຍຢ່າງໃນບົດ 9 ທີ່ເພິ່ນສະລະສິດນັ້ນກໍເພາະວ່າບໍ່ຢາກໃຊ້ສິດເພື່ອເປັນອາວຸດຕໍ່ສູ້ຄົນຈອງຫອງ, ແຕ່ເພິ່ນຕັ້ງຫລັກໝັ້ນຄົງເປັນຕົວຢ່າງຂອງການຖ່ອມຕົວ. ດ້ວຍວ່າເຮົາທັງຫລາຍຜູ້ທີ່ພຣະເຈົ້າຊົງຮຽກເອີ້ນໃຫ້ມາເປັນປະຊາຊົນຂອງພຣະອົງແລ້ວກໍຈິງ ແຕ່ເຮົາຍັງດຳເນີນຊີວິດໃນໂລກທີ່ເຕັມໄປດ້ວຍຄວາມຜິດບາບຢູ່ ດັ່ງນັ້ນຫາກຄຣິສຕຽນຫາກບໍ່ລະມັດຣະວັງໃນການດຳເນີນຊີວິດແລ້ວກະຈະເຮັດຜິດບາບຢ່າງງ່າຍດາຍ. ປຽບເໝືອນຄົນຜູ້ນຶ່ງກຳລັງຍ່າງໃນຖ້າມກາງຫ່າຝົນຈະບໍ່ໃຫ້ປຽກຈັກນ້ອຍກໍລຳບາກແທ້.

ຄຣິສຕຽນກຸ່ມນຶ່ງມີຄວາມຄິດ ຕໍ່ສູ້ແລະກ່າວຮ້າຍໂປໂລເນື່ອງຈາກຈົດໝາຍສບັບກ່ອນທີ່ໂປໂລໄດ້ຂຽນບອກເຂົາວ່າໂປໂລບໍ່ເຫັນດີໃນການແບ່ງແຍກກັນໃນຄຣິສຕະຈັກ. ພວກເຂົາເວົ້າກັນວ່າໂປໂລເວົ້າໜັກເກີນໄປ ແລະເຂົາຍັງຫາວ່າໂປໂລບໍ່ແມ່ນຄຣິສຕຽນແທ້ ເພິ່ນມີແຕ່ຂຽນຈົດໝາຍມາຢາມເທົ່ານັ້ນ ສ່ວນເພິ່ນເອງບໍ່ມາຢາມເຮົາ. ກຸ່ມຕໍ່ຕ້ານໂປໂລຊັກຊວນຄຣິສຕຽນໃນເມືອງໂກຣິນໂທໃຫ້ພິຈາຣະນາໂປໂລບໍ່ແມ່ຄົນຂອງພຣະຄຣິດ. ດ້ວຍເຫດນີ້ໂປໂລຈຶ່ງຂຽນຈົດໝາຍວອນຂໍເຂົາເປັນສ່ວນຕົວດ້ວຍ ຄວາມສຸພາບອ່ອນນ້ອມ ແທນທີ່ຈະໃຊ້ສິດໃນໜ້າທີ່ເພື່ອຕໍ່ສູ້ເຂົາ. ດ້ວຍວ່າອາວຸດຂອງໂລກບໍ່ສາມາດເອົາຊະນະຄວາມຂັດແຍ່ງເຣື່ອງນີ້ໄດ້ດັ່ງນັ້ນໂປໂລຈຶ່ງເລືອກເອົາອາວຸດທີ່ມາຈາກເບື້ອງເທິງ. (ອ່ານ ເອເຟໂຊ 6:13)

## <u>ຄວາມປະສົງດີຂອງໂປໂລ 10:7-11</u>

ໂປໂລໄດ້ບອກວ່າ *"ຈົ່ງແລເບິ່ງສິ່ງທີ່ປາກົດກັບຕາ ຖ້າຜູ້ໃດຕາຍໃຈເຊື່ອວ່າຕົນເປັນຄົນຂອງພຣະຄຣິດ ກໍໃຫ້ຜູ້ນັ້ນຄຳນຶງວ່າເໝືອນດັ່ງຕົນເປັນຄົນຂອງພຣະຄຣິດ ເຮົາກໍເປັນຄົນຂອງພຣະຄຣິດເໝືອນກັນ"* ຂໍ້ 7. ມີຄວາມໝາຍວ່າຕ່າງຄົນຕ່າງກໍເອີ້ນຕົນເອງວ່າເປັນຄຣິສຕຽນ ແຕ່ຫລັກຖານນັ້ນຈະເບິ່ງເຫັນໃນການດຳຣົງຊີວິດແລະການປະຕິບັດຕໍ່ພຣະຄຣິດ ແລະຕໍ່ຄຣິສຕຽນດ້ວຍກັນຢ່າງໃດ. ໂປໂລມີນ້ຳໃຈໃຫ້ເປັນນ້ຳນຶ່ງໃຈດຽວ ຜູ້ກ່າວຫາໂປໂລຢາກນຳພາຄຣິສຕຽນເປັນຜູ້ເຂົ້າໃຈຜິດຕໍ່ໂປໂລ. ໃນຂໍ້ 8 ໂປໂລໄດ້ຍົກອ້າງສິດຂອງເພິ່ນໃນຖານະເປັນອັກຄະສາວົກຂອງພຣະເຢຊູເພື່ອກໍ່ສ້າງຄຣິສຕຽນໃຫ້ເຂັ້ມແຂງ ບໍ່ແມ່ນຂຽນມາວ່າໃຫ້ພວກທ່ານອັບອາຍ.

ໂປໂລຢາກບອກໃຫ້ຄຣິສຕຽນໂກຣິນໂທເຂົ້າໃຈວ່າທ່ານເອງມີຄວາມຮັກອັນແທ້ຈິງຈາກອົງພຣະຄຣິດ ດ້ວຍວ່າຈົດໝາຍທີ່ຂຽນມານັ້ນເພື່ອເຕືອນສະຕິແລະກໍ່ສ້າງທ່ານທັງຫລາຍໃຫ້ຈະເຣີນຂຶ້ນໃນຄວາມເຊື່ອ, ຕົວຂອງເພິ່ນຢູ່ໄກ ແຕ່ໃຈຂອງເພິ່ນຢູ່ໃກ້ກັບພີ່ນ້ອງໂກຣິນໂທແທ້. ໂປໂລຂໍຮ້ອງພີ່ນ້ອງໂກຣິນໂທຢ່າຫລົງເຊື່ອພວກຕໍ່ຕ້ານທີ່ຫາວ່າໂປໂລບໍ່ຮັກພວກເຂົາ ເພາະບໍ່ໄດ້ມາຢ້ຽມຢາມເຂົາ. ເຣື່ອງນີ້ຍັງລາມມາເຖິງປັຈຈຸບັນນີ້ເຊັ່ນດຽວ ຄືມີຄົນໃນໂບດຂອງພວກເຮົາມັກຈະຈົ່ມໃຫ້ອາຈານຂອງຕົນວ່າອາຈານບໍ່ມາຢາມ ແລ້ວກໍເຮັດໃຫ້ຕົນເອງຄິດວ່າຂາດຄວາມອົບອຸ່ນໃກ້ຊິດກັບອາຈານ ໃນຂະນະທີ່ມີຄວາມຄິດຢ່າງນັ້ນຊາຕານກໍສວຍໂອກາດສວມຮອຍຈົນເຮັດໃຫ້ຜູ້ນັ້ນອ່ອນ

ທາງຄວາມເຊື່ອ. ພວກຕໍ່ຕ້ານໂປໂລເວົ້າຕໍ່ຄຣິສຕຽນໃນເມືອງໂກຣິນໂທວ່າ *"ຈົດໝາຍຂອງໂປໂລນັ້ນມີນໍ້າໜັກ ແລະມີອຳນາດກໍຈິງ ແຕ່ສ່ວນຕົວເພິ່ນເບິ່ງຄືອ່ອນແຮງ ແລະຖ້ອຍຄຳຂອງເພິ່ນກໍໃຊ້ການບໍ່ໄດ້"* (ຂໍ້ 10). ຄຳເວົ້າຄ້າຍຄືກັນນີ້ຍັງໃຊ້ກັນຢູ່ທົ່ວໄປເພື່ອຕໍ່ສູ້ອາຈານຂອງຕົນ. ຄຣິສຕຽນຄວນເຂົ້າໃຈວ່າອາຈານແລະ ຄຣູສອນນັ້ນຈຳເປັນຕ້ອງໃຊ້ເວລາເຂົ້າເຝົ້າພຣະເຈົ້າ ແລະໃຊ້ເວລາສ່ວນໃຫຍ່ຢູ່ກັບພຣະທັມຂອງພຣະເຈົ້າ ອີກປະການນຶ່ງພຣະເຢ ຊູໄດ້ກ່າວວ່າ *"ຄົນທີ່ສະບາຍບໍ່ຕ້ອງການໝໍຢາ ແຕ່ຄົນເຈັບຕ້ອງການໝໍ"* (ມັດທາຍ 9:12). ດັ່ງນັ້ນເມື່ອທຸກຄົນຢູ່ສະບາຍທາງຮ່າງກາຍ ແລະຈິດວິນຍານແລ້ວ ຈຶ່ງບໍ່ຈຳເປັນໃຫ້ອາຈານມາຢາມ.

ດ້ວຍມີຄຳເວົ້າເຊັ່ນນີ້ໂປໂລຈຶ່ງຂຽນຈົດໝາຍມາບອກວ່າ *"ຈົ່ງໃຫ້ຄົນເຫລົ່ານັ້ນເຂົ້າໃຈວ່າ ເຮົາເວົ້າໃນຈົດໝາຍເຮົາຢ່າງໃດເມື່ອເຮົາມາແລ້ວ ເຮົາກໍຈະເຮັດຢ່າງນັ້ນ"* (ຂໍ້ 11). ມີຄວາມໝາຍວ່າໃຫ້ພວກທີ່ຄິດວ່າໂປໂລເປັນຄົນ*ອ່ອນແຮງ ແລະຖ້ອຍຄຳຂອງເພິ່ນກໍໃຊ້ການບໍ່ໄດ້* ນັ້ນຮູ້ວ່າເມື່ອໂປໂລມາກໍຈະເຮັດທຸກຢ່າງຕາມຈົດໝາຍທີ່ໄດ້ຂຽນມານັ້ນ ຄືເພິ່ນຈະເຮັດຕາມພຣະປະສົງຂອງອົງພຣະຜູ້ເປັນເຈົ້າ ຊຶ່ງເປັນເປົ້າໝາຍທີ່ເພິ່ນຕັ້ງໄວ້ແລ້ວ.

## ອວດອ້າງໃນຂອບເຂດ 10: 12-18

ອັກຄະສາວົກໂປໂລບໍ່ໄດ້ເອົາຕົວເພິ່ນເອງປຽບທຽບກັບຜູ້ໃດ ເໝືອນດັ່ງລາງຄົນວັດແທກຕົນເອງກັບຄົນອື່ນ *"ເພາະວ່າເຮົາບໍ່ກ້ານັບຕົວວ່າສເມີກັບລາງຄົນທີ່ຍົກຕົວເອງ"* (ຂໍ້ 12ກ). ດ້ວຍວ່າຄົນທີ່ປຽບທຽບຕົນເອງໃສ່ກັບຄົນອື່ນນັ້ນເປັນຄົນຂີ້ອວດ ແລະມັກຍ້ອງ ຄວາມເຊື່ອນັ້ນບໍ່ສາມາດວັດແທກກັນດ້ວຍໄມ້ແມັດ ແຕ່ວັດແທກດ້ວຍການດຳຣົງຊີວິດໃນການປະຕິບັດຕໍ່ອົງພຣະຜູ້ເປັນເຈົ້າຢ່າງໃດ. *"ເຮົາຈະບໍ່ອວດຕົວໃນສິ່ງໃດເກີນຂອບເຂດ ແຕ່ວ່າຈະອວດຕົວໃນຂອບເຂດທີ່ພຣະເຈົ້າຊົງຈັດໄວ້ໃຫ້ເຮົາ"* (ຂໍ້ 13). ຊຶ່ງທ່ານໝາຍຄວາມວ່າທ່ານຈະບໍ່ເວົ້າຫຍັງເກີນກວ່າຂອງພຣະຣາຊທານທາງພຣະຄຸນພຣະເຈົ້າທີ່ໃຫ້ເພິ່ນເວົ້າ ຫລືພຣະເຈົ້າໃຫ້ເວົ້າຫຍັງເພິ່ນກໍຈະເວົ້າແລະເຮັດສິ່ງນັ້ນຕາມຂອບເຂດຈຳກັດທີ່ພຣະເຈົ້າຊົງໃຫ້. *"ເພາະເຮົາເປັນຜູ້ນຳຂ່າວປະເສີດເຣື່ອງພຣະຄຣິດມາເຖິງພວກເຈົ້າກ່ອນໝູ່"* (ຂໍ້ 14). ນີ້ແມ່ນສິ່ງນຶ່ງທີ່ໂປໂລໄດ້ອວດຄືທ່ານເອງໄດ້ນຳຂ່າວປະເສີດມາຍັງໂກຣິນໂທກ່ອນຄົນອື່ນໆທັງໝົດ ສ່ວນຜູ້ຕໍ່ຕ້ານຫາກໍເກີດຂຶ້ນເພື່ອເຂົາຈະໄດ້ຊັກຊວນລາງຄົນໃຫ້ຫລົງເຊື່ອແລະຕິດຕາມເຂົາ. ສຳລັບໂປໂລໄດ້ນຳຂ່າວປະເສີດທີ່ທ່ານນຳມານັ້ນບໍ່ແມ່ນເພື່ອກຽດແລະຊື່ສຽງເພິ່ນເອງ ແຕ່ເພື່ອຄົນທັງຫລາຍຈະ ໄດ້ພົ້ນຍ້ອນຂ່າວປະເສີດທີ່ເພິ່ນນຳນັ້ນ. ດ້ວຍເຫດນີ້ການປະກາດຂ່າວປະເສີດຈຶ່ງບໍ່ຈຳເປັນຕ້ອງເຫັນແກ່ໜ້າຜູ້ໃດຫລືບໍ່ເລືອກໜ້າປະກາດໃຫ້ຟັງ ແລະບໍ່ຈຳເປັນຕ້ອງເອົາອົກເອົາໃຈຜູ້ໃດຜູ້ນຶ່ງຫລາຍກວ່າກັນ ແຕ່ປະກາດແລະປະຕິບັດກັບທຸກຄົນສເມີກັນ.

ອີກປະການນຶ່ງການປະກາດຂ່າວປະເສີດເປັນຂ່າວເຣື່ອງການເກີດ, ການຕາຍຊົງໄຖ່ບາບ ແລະການຟື້ນພຣະຊົນເພື່ອສແດງໃຫ້ໂລກເຫັນວ່າພຣະເຢຊູຊົງເປັນພຣະຜູ້ໄຖ່ແຕ່ອົງດຽວ ດ້ວຍເຫດນີ້ເມື່ອເຮົາປະກາດກໍສົມຄວນປະກາດຕາມຂນາດແຫ່ງຄວາມເຊື່ອ ແລະປະກາດໃຫ້ສົມກັບຄົນທີ່ປະຕິບັດຕົນໃນຂ່າວປະເສີດ. ດັ່ງນັ້ນຈຶ່ງບໍ່ສົມ ຄວນຈະດີໃຈຈົນເກີນໄປເມື່ອຄົນມາເຊື່ອຫລາຍ ແຕ່ສົມຄວນຂອບພຣະຄຸນທີ່ພຣະອົງຊົງໃຊ້ທ່ານໃຫ້ປະກາດ ດ້ວຍວ່າຄົນທີ່ຮັບເຊື່ອຫລືບໍ່ເຊື່ອນັ້ນບໍ່ແມ່ນທ່ານມີອຳນາດໃຫ້ຜູ້ໃດຜູ້ນຶ່ງເຊື່ອແລະບໍ່ເຊື່ອ. ຣິດອຳນາດນັ້ນຢູ່ໃນຂ່າວປະເສີດບໍ່ແມ່ນອຳນາດຂອງຜູ້ປະກາດ. ທຳນອງດຽວກັນເມື່ອຖືກປະຕິເສດກໍຢ່ານ້ອຍໃຈ ດ້ວຍວ່າຜູ້ປະຕິເສດນັ້ນບໍ່ແມ່ນປະຕິເສດທ່ານ ແຕ່ແມ່ນເພິ່ນ ປະຕິເສດພຣະເຢຊູ. *"ຝ່າຍເຮົາບໍ່ໄດ້ອວດຕົວໃນສິ່ງໃດເກີນຂອບເຂດ ແຕ່ວ່າຈະອວດຕົວໃນຂອບເຂດ ທີ່ພຣະເຈົ້າ ຊົງຈັດໄວ້ໃຫ້ເຮົາ ແລະພວກເຈົ້າກໍຢູ່ໃນຂອບເຂດນັ້ນ"* (ຂໍ້ 13). ມີຄວາມໝາຍວ່າຄຣິສຕຽນໃນເມືອງໂກຣິນໂທກໍ ແມ່ນຜົນຂອງການປະກາດຂອງໂປໂລ ແຕ່ໂປໂລບໍ່ໄດ້ນຳເອົາ

ຊື່ສຽງມາໃສ່ຕົນເອງ ແຕ່ໄດ້ປະກາດເພື່ອສັຣເສີນພຣະເຈົ້າຊຶ່ງໝາກຜົນໃນເມືອງກໍບໍ່ໄດ້ຢູ່ເໜືອກວ່າຂອບເຂດຂອງອັກຄະສາວົກໂປໂລ.

ໂປໂລໄດ້ທ້າທາຍພວກຕໍ່ຕ້ານວ່າ *"ຖ້າຜູ້ໃດຈະອວດກໍຈົ່ງເອົາພຣະຜູ້ເປັນເຈົ້າອວດເທີ້ນ ເພາະຄົນຍົກຍ້ອງຍໍຕົວເອງບໍ່ເປັນທີ່ນັບຖືຂອງຜູ້ໃດ ແຕ່ຄົນທີ່ໜ້ານັບຖືນັ້ນ ຄືຜູ້ທີ່ພຣະອົງຊົງຍົກຍ້ອງ "* (ຂໍ້ 17-18). ເຮົາຈະເຫັນກັນທົ່ວໄປຕາມທັມດາຂອງມະນຸດຄືເມື່ອເຮັດສິ່ງໃດໄດ້ດີກໍຍ່ອມຢາກໃຫ້ຜູ້ອື່ນຍ້ອງຍໍເພື່ອຈະໄດ້ຮັບກຽດຕິຍົດແລະຊື່ສຽງດີ ແຕ່ ສິ່ງທີ່ດີກວ່ານັ້ນແມ່ນໃຫ້ພຣະເຈົ້າຍ້ອງຍໍເໝືອນດັ່ງໂປໂລໄດ້ກ່າວນັ້ນ ດ້ວຍວ່າມະນຸດຍ້ອງຍໍນັ້ນ ເຂົາກໍບໍ່ເຫັນການ ກະທຳຂອງທ່ານໃນທີ່ລັບລີ້ ສ່ວນພຣະເຈົ້າແລ້ວເຮົາບໍ່ມີສິ່ງໃດປິດບັງເພິ່ນໄວ້ໄດ້ ດັ່ງນັ້ນຫາກພຣະເຈົ້າຍ້ອງຍໍຜູ້ໃດ ມະນຸດກໍສົມຄວນຍ້ອງຍໍຜູ້ນັ້ນເໝືອນກັນ. ດັ່ງນັ້ນເຮົາທັງຫລາຍຈຶ່ງບໍ່ສາມາດອວດສິ່ງໃດໄດ້ ໂປໂລບອກວ່າຫາກອົດບໍ່ໄດ້ຢາກອວດແທ້ໆໃຫ້ອວດພຣະເຈົ້າດີກວ່າ.

<u>ຄຳຖາມ:</u>

1. ຫາກທ່ານບໍ່ຖືກໃຈກັບຜູ້ໃດຜູ້ນຶ່ງໃນໂບດດຽວກັນຮ້ອງວ່າ Conflict ທ່ານຄິດວ່າໃຜຈະເປັນຜູ້ແກ້ໄຂໃຫ້?

2. ຫາກມີການປະຊຸມກັນໃນໂບດເພິ່ນຕົກກັນໂດຍສຽງສ່ວນຫລາຍ ແຕ່ທ່ານບໍ່ມັກ ທ່ານຈະເຮັດແນວໃດ?

3. ໃນຣະວ່າງອາຈານໂປໂລແລະຄົນອີກກຸ່ມນຶ່ງນັ້ນແມ່ນໃຜເປັນຜູ້ສ້າງ Conflict ໃນກຸ່ມຄຣິສຕຽນ?

4. ເປັນຫຍັງເຂົາຈຶ່ງເວົ້າວ່າ *ຈົດໝາຍຂອງໂປໂລນັ້ນມີນ້ຳໜັກ ແລະມີອຳນາດກໍຈິງ ແຕ່ສ່ວນຕົວເພິ່ນເບິ່ງຄືອ່ອນແຮງ ແລະຖ້ອຍຄຳຂອງເພິ່ນກໍໃຊ້ການບໍ່ໄດ້* (ຂໍ້ 10)

5. ແມ່ນໃຜເປັນຜູ້ນຳຂ່າວປະເສີດໄປຍັງເມືອງໂກຣິນໂທກ່ອນໝູ່? ແລ້ວແມ່ນໃຜສວມຮອຍຢາກມີອຳນາດ?

6. ໂປໂລເວົ້າວ່າ *ແຕ່ວ່າຈະອວດຕົວໃນຂອບເຂດ ທີ່ພຣະເຈົ້າ ຊົງຈັດໄວ້ໃຫ້ເຮົາ* ໝາຍຄວາມວ່າຢ່າງໃດ?

# ພຣະຄຸນອັນສົມບູນ
# ບົດຮຽນທີ 12

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** 2 ໂກຣິນໂທ 12:1-10

**ຂໍ້ພຣະຄັມທັງຫມົດສຳລັບບົດຮຽນນີ້:** 2 ໂກຣິນໂທ 11:1--12:13

**ຈຸດສຳຄັນຂອງບົດຮຽນນີ້:** ເພື່ອບອກໃຫ້ຮູ້ວ່າກຳລັງທີ່ເຮົາມີມາຈາກເບື້ອງເທິງ.

**ຄຳຖາມເພື່ອການສຳຣວດ:** ເຮົາມີກຳລັງອັນໃດຫລາຍກວ່າໝູ່?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອເຮົາສລູບສິ່ງທີ່ໂປໂລບອກວ່າເຮົາບໍ່ມີກຳລັງໂດຍຕົວເຮົາເອງ.

**ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ທຸກຄົນທີ່ເຊື່ອໃນພຣະເຢຊູເປັນຜູ້ຮັບໃຊ້ພຣະເຈົ້າ.
- ມະນຸດທຸກຄົນເປັນສິພຣະຫັດພຣະເຈົ້າ.
- ຊ່ອຍຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ກາຍເປັນຜູ້ນຳ.

## ບົດນຳ

ກ່ອນຈະສອນບົດຮຽນນີ້ຄຣູຄວນຈະອ່ານ 2ໂກຣິນໂທ 11 ໃຫ້ຈົບເສັຽກ່ອນ ດ້ວຍວ່າເບື້ອງຫລັງທີ່ຈະກ່າວໃນບົດຮຽນວັນນີ້ມາຈາກບົດ 11. ຊຶ່ງໂປໂລໄດ້ພະຍາຍາມເວົ້າເຖິງຄວາມທຸກຍາກລຳບາກແລະການຖ່ອມຕົວຂອງເພິ່ນໃຫ້ຄຣິສຕຽນເມືອງໂກຣິນໂທໄດ້ຟັງ ດ້ວຍວ່າພວກກຸ່ມຕໍ່ຕ້ານໂປໂລໄດ້ຍົວະເຍົ້າເປົ່າຫູປ້າຍຄວາມຜິດໃສ່ເພິ່ນ ເພື່ອຄຣິສຕຽນໃນໂກຣິນໂທຈະເປັນຝ່າຍເຂົາ.

## ນິມິດພິເສດ 12:1-4

ອັກຄະສາວົກໂປໂລເວົ້າຕໍ່ຈາກ 2ໂກຣິນໂທ 11 ດ້ວຍໃຈກ້າຫານເພື່ອນຳຄຣິສຕຽນໂກຣິນໂທໃຫ້ເຂົ້າໃຈເຣື່ອງຄວາມຈິງ. ຄວາມຈິງແລ້ວອັກຄະສາວົກໂປໂລບໍ່ເຄີຽອວດເຣື່ອງທີ່ທ່ານຕົກທຸກໄດ້ຍາກຍ້ອນຂ່າວປະເສີດທີ່ນຳເອົາຄວາມພົ້ນມາຍັງຄຣິສຕຽນເມືອງໂກຣິນໂທ ແຕ່ເນື່ອງຈາກວ່າພວກເຂົາມີການສົງສັຍຍ້ອນພວກຕໍ່ຕ້ານເວົ້າແນວບໍ່ດີໃສ່ໂປໂລຫລາຍຢ່າງເປັນຄວາມບໍ່ຈິງ. ໂປໂລພະຍາຍາມຖ່ອມຕົວ ແຕ່ການຖ່ອມຕົວຂອງເພິ່ນບໍ່ເປັນປໂຍດແກ່ລາງຄົນເພິ່ນຈຶ່ງເວົ້າວ່າ *"ເຮົາໄດ້ເຮັດຜິດຫລືໃນການທີ່ເຮົາຖ່ອມໃຈລົງເພື່ອຍົກສູເຈົ້າທັງຫລາຍຂຶ້ນ"* (2 ກຣທ 11:7). ເມື່ອເພິ່ນຖ່ອມຕົວຄົນອື່ນກໍເຫັນວ່າເພິ່ນອ່ອນແອ ແລະກັບໄປມັກພວກອວດວ່າຕົນເອງດີ ເມື່ອເຂົາມັກຄົນອວດອ້າງໂປໂລກໍຈະອວດອ້າງເໝືອນກັນ ເພື່ອເອົາຊະນະໃຈຄົນມັກຄົນອວດອ້າງ. *"ການທີ່ເຮົາກ່າວຢ່າງນັ້ນ ເຮົາບໍ່ໄດ້ກ່າວຕາມຫລັກຂອງອົງພຣະຜູ້ເປັນເຈົ້າ ແຕ່ກ່າວເໝືອນຄົນໂງ່ທີ່ມີຄວາມໄວ້ໃຈໃນການອວດຂອງຕົນເອງ ເພາະວ່າມີຫລາຍຄົນອວດຕົວຕາມຢ່າງມະນຸດ ເຮົາກໍຈະອວດເໝືອນກັນ"* ( 2 ກຣທ 11:17-18).

*"ເຖິງຈະບໍ່ມີປະໂຫຍດອັນໃດກໍຕາມ ເຮົາກໍຈຳເປັນຕ້ອງອວດ ເຮົາຈະເລົ່າເຣື່ອງນິມິດແລະການສະແດງຊຶ່ງມາຈາກອົງພຣະຜູ້ເປັນເຈົ້າ "* (2 ກຣທ 12:1). ນິມິດທີ່ໂປໂລກຳລັງເວົ້ານີ້ແມ່ນເພິ່ນເວົ້າເຖິງຕົວຂອງເພິ່ນເອງໃນເວລາສິບສີ່ປີທີ່ຜ່ານມາ. *"ແຕ່ສິບສີ່ປີມາແລ້ວເຮົາຮູ້ຈັກຄຣິສຕຽນຜູ້ນຶ່ງ ຜູ້ນັ້ນໄດ້ຖືກຮັບຂຶ້ນໄປສວັນຊັ້ນທີສາມ (ແຕ່ຈະໄປທາງກາຍຫລືນອກກາຍເຮົາບໍ່ຮູ້ ພຣະເຈົ້າເທົ່ານັ້ນຊົງເປັນຜູ້ຊາບ (ຂໍ້ 2).* ໂປໂລສົມມຸດຕົນເອງເປັນບຸກຄົນທີສາມຄືເພິ່ນເອງເປັນຄຣິສຕຽນຜູ້ນັ້ນແຕ່ເພິ່ນບໍ່ໄດ້ບອກໃຫ້ໃຜຮູ້ວ່າແມ່ນເພິ່ນເອງ. ເຮົາສາມາດຮູ້ຈາກຂໍ້ 5-6, ເພິ່ນໄດ້ອ້າງວ່າຖືກຊົງຮັບໄປສວັນຊັ້ນທີສາມ (Paradise) ນັ້ນເພິ່ນໝາຍ ເຖິງຕອນເພິ່ນຖືກຄວ່າງຫີນໃສ່ເພິ່ນແລ້ວລາກເພິ່ນໄປໄວ້ນອກເມືອງເຂົາຄິດ ວ່າເພິ່ນຕາຍແລ້ວ (ກິຈການ 14:19-20) ດ້ວຍການຖືກຄວ່າງນີ້ເພິ່ນຈຶ່ງອ້າງວ່າຫາກເພິ່ນຕາຍເພິ່ນກໍຈະໄປຢູ່ສວັນຊັ້ນສາມ (Paradise) ລໍຖ້າພິພາກສາ. ພວກ ນັກສາສນາສາດຄຳນວນວ່າສວັນຊັ້ນທີສາມນັ້ນເປັນເໝືອນສວນເອເດັນ ທີ່ມີທຸກຢ່າງ ແລະໃນແລງມາພຣະເຈົ້າກໍມາຢາມເໝືອນດັ່ງພຣະອົງສະເດັດມາຢາມອາດາມແລະເອວາ. ການທີ່ເພິ່ນ ອວດໃຫ້ຄຣິສຕຽນເມືອງໂກຣິນໂທຟັງກໍເພື່ອຢາກສແດງຫລັກຖານວ່າເພິ່ນເປັນອັກຄະສາວົກແທ້ຂອງພຣະເຢຊູຄຣິດ ແລະບໍ່ເປັນດັ່ງກຸ່ມຕໍ່ຕ້ານກ່າວຫາເພິ່ນແຕ່ປະການໃດ. ນີ້ແຫລະຄືນິມິດພິເສດຂອງອັກຄະສາວົກໂປໂລ.

ໃນນັດທິວເຮັນຣີຄອມເມັນແທຣີ ບອກອີກວ່ານິມິດທີ່ໂປໂລກ່າວເຖິງນັ້ນແມ່ນຕອນເພິ່ນຖືກຕົກຈາກຫລັງມ້າໃນຂະນະທີ່ເພິ່ນເດີນທາງໄປຍັງເມືອງດາມາເຊເພື່ອຈັບກຸມຄຣິສຕຽນໄປຂັງຄຸກກ່ອນໜ້າເພິ່ນເປັນຄຣິສຕຽນ. ໃນຣະຫວ່າງທາງເພິ່ນໄດ້ເຫັນນິມິດຄືເພິ່ນຕົກຈາກຫລັງມ້າແລ້ວຕາບອດທັງກິນແລະນອນບໍ່ໄດ້ສາມວັນ (ກິຈການ 9).

## <u>ບໍ່ຢາກອວດ 12:5-6</u>

ອັກຄະສາວົກໂປໂລໄດ້ເວົ້າອວດໄປນ້ອຍນຶ່ງແຕ່ເພິ່ນບໍ່ໄດ້ບອກແຈ້ງວ່າເພິ່ນເຫັນນິມິດຢ່າງນັ້ນດ້ວຍຕົວເພິ່ນເອງແຕ່ເພິ່ນກັບບອກວ່າເພິ່ນຮູ້ຈັກຄຣິສຕຽນຜູ້ນຶ່ງ ຫລືເພິ່ນໄດ້ເລົ່າເຣື່ອງຂອງຄຣິສຕຽນຜູ້ນຶ່ງ. ເພິ່ນເວົ້າອີກວ່າ *"ສຳລັບຄົນຜູ້ນັ້ນແຫລະ, ເຮົາອວດໄດ້ ແຕ່ສັບເຮົາເອງຈະບໍ່ອວດຕົວ ເວັ້ນແຕ່ຈະອວດໃນຄວາມອ່ອນແອຂອງເຮົາ "* (ຂໍ້ 5). ຄວາມຈິງແລ້ວຫາກອັຄສາວົກໂປໂລອວດອ້າງເຣື່ອງການຮັບໃຊ້ຂອງເພິ່ນໆກໍສົມຄວນທີ່ຈະອວດອ້າງດ້ວຍວ່າບໍ່ມີໃຜເຮັດຄືເພິ່ນໄດ້ ເພິ່ນໄດ້ອວດໄປແດ່ນ້ອຍນຶ່ງກໍເພື່ອຊັກຊວນຈິດໃຈຜູ້ຫລົງຜິດຄິດຕໍ່ຕ້ານເພິ່ນໃຫ້ຮູ້ແລະເຂົ້າໃຈວ່າເພິ່ນພົບກັບອຸປສັກໃນການປະກາດນາງປະການແຕ່ເພິ່ນບໍ່ເຄີຍອວດອ້າງຈົນເຖິງວັນນີ້ ແຕ່ເພິ່ນຍັງເວົ້າວ່າ *ເວັ້ນແຕ່ຈະອວດໃນຄວາມອ່ອນແອຂອງເຮົາ.* ຄຳເວົ້ານີ້ຄ້າຍກັບວ່າຖ້າຜູ້ໃດອວດການງານຊຶ່ງບໍ່ມີຄວາມຈິງກໍຄ້າຍກັບວ່າຜູ້ນັ້ນໂອ້ອວດເວົ້າຄວາມອ່ອນແອຕົນເອງໃຫ້ຜູ້ອື່ນຟັງ, ດ້ວຍວ່າພຣະເຈົ້າຊົງຮູ້ໃນສິ່ງທີ່ເຮົາເຮັດທຸກຢ່າງ ບາງທີອາດຈະມີມະນຸດຮູ້ອີກ ເວລານັ້ນຜູ້ທີ່ອວດເຣື່ອງບໍ່ຈິງນັ້ນຈະໄດ້ຊື່ວ່າເປັນຄົນຕົວະ.

ໂປໂລເວົ້າວ່າ *"ເຖິງແມ່ນວ່າເຮົາຢາກອວດຕົວ ເຮົາກໍບໍ່ເປັນຄົນໂງ່ ເພາະເຮົາກ່າວຕາມຄວາມຈິງ ແຕ່ເຮົາອົດກັ້ນໄວ້"* (ຂໍ້ 6). ຫາກເຮົາສັງເກດເບິ່ງຕາມທັມດາຂອງໂລກເຮົາກໍຈະເຫັນວ່າຄົນທີ່ເຮັດແທ້ທຳຈິງ ຫລືຜູ້ເພິ່ນຮູ້ຫລາຍແທ້ນັ້ນເພິ່ນບໍ່ຄ່ອຍເວົ້າເທົ່າໃດ ສ່ວນຜູ້ທີ່ຮູ້ນ້ອຍນັ້ນມັກຈະໂອ້ອວດນາງປະການ. ບົດຮຽນຕອນນີ້ສອນເຮົາໃຫ້ເວົ້າແຕ່ຄວາມຈິງ ດ້ວຍວ່າຫາກມີຄົນຮູ້ຄວາມຈິງເຣື່ອງທີ່ເຮົາຄຸຍໂມ້ເຮົາກໍຈະອາຍ. ໂປໂລເອງພະຍາມຍາມອົດກັ້ນໄວ້ບໍ່ອວດເພື່ອສະແດງຄວາມຖ່ອມຕົວຕໍ່ທຸກຄົນ ແຕ່ຫາກເພິ່ນອວດເພິ່ນກໍສົມຄວນຈະອວດ ເພາະວ່າເພິ່ນອວດຕາມຄວາມຈິງ.

## <u>ພໍໃຈໃນພຣະຄຸນ 12:7-10</u>

ໃນທີ່ສຸດໂປໂລກໍເວົ້າເຖິງຄວາມອ່ອນແອຂອງເພິ່ນຊຶ່ງເພິ່ນຮ້ອງວ່າສ້ຽນໜາມຂອງຮ່າງກາຍ *"ແລະເພື່ອບໍ່ໃຫ້ເຮົາຍົກຍ້ອງຕົວຈົນເກີນໄປເນື່ອງຈາກຊຶ່ງສະແດງອັນຫລວງຫລາຍຊຶ່ງມາຈາກພຣະເຈົ້າ ພຣະເຈົ້າຊົງບັນດານໃຫ້ມີສ້ຽນໜາມໃນເນື້ອກາຍຂອງເຮົາ ເປັນບໍຣິວານຂອງຊາຕານທີ່ທຸບຕີເຮົາ ເພື່ອບໍ່ໃຫ້ເຮົາຍົກຍ້ອງຍົວເຮົາຈົນເກີນໄປ"* (ຂໍ້ 7). ໂປໂລເວົ້າຢ່າງມີຄວາມໝາຍໃນຊີວິດການຮັບໃຊ້ຂອງເພິ່ນ ຄືເພິ່ນໄດ້ເຮັດດີທີ່ສຸດແລ້ວຍັງມີພວກຈອງຫອງຕໍ່ສູ້ເພິ່ນໂດຍການກ່າວຫາເພິ່ນ. ພວກທີ່ກ່າວຫານີ້ເພິ່ນປຽບເໝືອນສ້ຽນໜາມຂອງຮ່າງກາຍທີ່ຄອຍປັກສຽບເຮັດໃຫ້ເຈັບປວດແລ້ວເຮັດວຽກງານບໍ່ຄ່ອຍສະດວກ. ໂປໂລເວົ້າຄຳເວົ້າປະສົມຄືສ້ຽນແລະໜາມ, ແນ່ນອນສ້ຽນແລະໜາມບໍ່ແມ່ນອັນດຽວກັນ ແຕ່ທັງສອງຢ່າງກໍໃຫ້ຄວາມເຈັບປວດເໝືອນກັນ, ສ້ຽນໜາມທີ່ເພິ່ນເວົ້າເຖິງນີ້ແມ່ນບໍຣິວານຂອງຊາຕານທີ່ພຣະເຈົ້າຊົງອະນຸຍາດໃຫ້ປັກສຽບເພິ່ນເພື່ອເພິ່ນຈະບໍ່ໄດ້ອວດຕົວວ່າເພິ່ນເຮັດຫຍັງກໍໄດ້ບໍ່ມີບັນຫາ ດ້ວຍເພິ່ນມີສ້ຽນໜາມນີ້ຈຶ່ງເຮັດໃຫ້ເພິ່ນພໍໃຈໃນພຣະຄຸນພຣະເຈົ້າຫລາຍກວ່າພໍໃຈໃນຄວາມຮູ້ແລະຄວາມສາມາດຕົນເອງ.

ຊີວິດເຮົາທັງຫລາຍກໍເຊັ່ນດຽວກັນ ມີຫລາຍເທື່ອເຮົາກໍມີສ້ຽນໜາມຂອງຮ່າງກາຍ ເຊັ່ນການເຈັບເປັນ, ຄວາມຂາດເຂີນ, ການບໍ່ເຂົ້າໃຈກັນໃນຄອບຄົວ ຫລືມີຄົນໃນໂບດດຽວກັນຕ້ອງຕີແລະຕໍ່ສູ້ແລະອື່ນໆ ໃຫ້ເຮົາເຂົ້າໃຈວ່າ *ພຣະເຈົ້າຊົງບັນດານໃຫ້ມີສ້ຽນໜາມໃນເນື້ອກາຍຂອງເຮົາ.* ດ້ວຍວ່າບໍ່ມີສິ່ງໃດເກີດຂຶ້ນໃນຊີວິດຂອງເຮົາຫາກພຣະເຈົ້າບໍ່ອະນຸຍາດ ຕົວຢ່າງໃນມາຣະໂກ 5 ພຣະເຈົ້າອະນຸຍາດໃຫ້ຜີເຂົ້າໃນຝູງໝູ, ໃນພຣະທັມໂຢບບົດ 1 ພຣະເຈົ້າຊົງອະນຸຍາດໃຫ້ມານທົດລອງໂຢບ. ດ້ວຍເຫດນີ້ແຫລະຫາກເຮົາທັງຫລາຍບໍ່ມີສ້ຽນໜາມຂອງຮ່າງການເຮົາກໍຈະເປັນອວດຕົວຈົນເກີນໄປ ເຮົາສົມຄວນຂອບພຣະຄຸນພຣະເຈົ້າທີ່ບັນດານໃຫ້ເຮົາມີສ້ຽນໜາມແລ້ວເຮັດໃຫ້ເຮົາກາຍເປັນຄົນຖ່ອມຕົວ ແຕ່ເຮົາຄວນອ້ອນວອນຕໍ່ພຣະອົງຢ່າໃຫ້ມີສ້ຽນໜາມໃຫຍ່ຈົນເກີນໄປ ຢ້ານວ່າເຮົາຈະທົນຄວາມເຈັບປວດບໍ່ໄດ້.

ໂປໂລໄດ້ອ້ອນວອນຕໍ່ພຣະເຈົ້າເຖິງສາມເທື່ອ ແຕ່ຄຳຕອບຂອງພຣະເຈົ້າປາກົດວ່າຍັງໃຫ້ມີສ້ຽນໜາມອີກຕໍ່ໄປ *"ເຮົາໄດ້ອ້ອນວອນທູນຂໍອົງພຣະຜູ້ເປັນເຈົ້າເຖິງສາມເທື່ອໃຫ້ພົ້ນໄປຈາກເຮົາ ແຕ່ພຣະອົງຊົງກ່າວກັບເຮົາວ່າ ການທີ່ເຈົ້າມີຄຸນຈາກເຮົາ ກໍພໍສຳລັບເຈົ້າແລ້ວ ດ້ວຍວ່າຄວາມອ່ອນແອຢູ່ທີ່ໃດ ເດດຂອງເຮົາກໍມີຣິດຂຶ້ນເຕັມຂນາດຢູ່ທີ່ນັ້ນ"* (ຂໍ້ 8-9). ດ້ວຍເຫດນີ້ໂປໂລຈຶ່ງຂອບພຣະຄຸນພຣະເຈົ້າລັບສ້ຽນໜາມເພື່ອເພິ່ນຈະໄດ້ຮັບພຣະຄຸນໂດຍຄວາມອ່ອນແອຂອງເພິ່ນດ້ວຍວ່າຄວາມອ່ອນແອນັ້ນແຫລະຣິດເດດຂອງພຣະເຈົ້າຈະຂຶ້ນເຕັມຂນາດຢູ່ທີ່ນັ້ນ. *"ສັນນັ້ນເພື່ອເຫັນແກ່ພຣະຄຣິດ ເຮົາຈຶ່ງຊື່ນໃຈໃນບັນດາຄວາມອ່ອນແອ, ໃນການຖືກໝິ່ນປມາດ, ໃນຄວາມຍາກລຳບາກ, ໃນການຖືກຂົ່ມເຫັງ, ແລະ ຄວາມຍາກຈົນ ເພາະວ່າເຮົາອ່ອນແອເມື່ອໃດ ເຮົາກໍຈະແຂງແຮງເມື່ອນັ້ນ"* (ຂໍ້ 10).

**ຄຳຖາມ:**

1. ເປັນຫຍັງໂປໂລຈຶ່ງອົດກັ້ນໄວ້ບໍ່ອວດເຣື່ອງການຮັບໃຊ້ຂອງເພິ່ນ?

2. ໂປໂລອົດກັ້ນບໍ່ອວດນີ້ເປັນຜົນປໂຍດອັນໃດ?

3. ໂປໂລເວົ້າເຖິງຄວາມອ່ອນແອຂອງເພິ່ນແມ່ນເພິ່ນເວົ້າເຣື່ອງຫຍັງ?

4. ເປັນຫຍັງໂປໂລຈຶ່ງເວົ້າວ່າເພິ່ນຮູ້ຈັກຄຣິສຕຽນຜູ້ນຶ່ງ *ຜູ້ນັ້ນໄດ້ຖືກຮັບຂຶ້ນໄປສວັນຊັ້ນທີສາມ* ແທນທີ່ໂປໂລຈະເວົ້າວ່າແມ່ນເພິ່ນເອງ.

5. ຄວາມອ່ອນແອຢູ່ທີ່ໃດພຣະຄຸນຂອງພຣະເຈົ້າຢູ່ທີ່ນັ້ນໝາຍຄວາມວ່າແນວໃດ?

## ຊັກຊວນໃຫ້ກັບໃຈ
## ບົດຮຽນທີ 13

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** 2 ໂກຣິນໂທ 12:14--13:14
**ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:** 2 ໂກຣິນໂທ 12:14--13:14
**ຈຸດສຳຄັນຂອງບົດຮຽນນີ້:** ເພື່ອຊັກຊວນໃຫ້ກັບໃຈໂດຍໃຊ້ຄວາມຮັກແລະຮູ້ເຣື່ອງພຣະເຈົ້າເປັນຫລັກ.
**ຄຳຖາມເພື່ອການສຳຣວດ:** ເຮົາຈະຊັກຊວນຄົນຫລົງຫາຍໃຫ້ກັບໃຈໄດ້ຢ່າງໃດ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຮຽນເອົາແບບຢ່າງຂອງໂປໂລໃນການຊັກຊວນ.

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.
- ທຸກຄົນທີ່ເຊື່ອໃນພຣະເຢຊູເປັນຜູ້ຮັບໃຊ້ພຣະເຈົ້າ.
- ມະນຸສທຸກຄົນເປັນສິພຣະທັດພຣະເຈົ້າ.
- ຊ່ອຍຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ກາຍເປັນຜູ້ນຳ.

### ບົດນຳ

ການຫັນປ່ຽນຊີວິດບໍ່ຄ່ອຍມີໃຜມັກຈະປ່ຽນດອກ ເຄີຍຢູ່ແນວໃດ, ກິນແນວໃດ, ເຊື່ອແນວໃດ, ໄປມາແນວໃດກໍມັກຈະເຮັດແນວນັ້ນ. ທ່ານຈື່ໄດ້ບໍ່ກ່ອນໜ້າທ່ານຕັດສິນໃຈຂ້າມຂອງນັ້ນທ່ານໃຊ້ເວລານານປານໃດຈຶ່ງຕັດສິນໃຈ, ເມື່ອຂ້າມມາຍັງຝັ່ງໄທແລະເຂົ້າໄປຢູ່ໃນສູນອົພຍົບແລ້ວມີຄວາມຄິດແນວໃດ? ຂ້າພະເຈົ້າສັງເກດເຫັນວ່າຫລາຍຄົນໃຊ້ເວລາເປັນປີນັ່ງຄຶດນອນຄຶດຈະຂ້າມຂອງ ເມື່ອຂ້າມມາແລ້ວຫລາຍຄົນກໍອົດຄຶດຮອດບ້ານຝັງສາຍແຫ່ແຜ່ສາຍບີບໍ່ໄດ້ຈຶ່ງຂໍກັບຄືນຍັງບ້ານເກີດເມືອງນອນຂອງຕົນ. ນີ້ແຫລະບັ້ນຕອນຊີວິດປ່ຽນແປງນັ້ນບໍ່ຄ່ອຍມີໃຜຢາກປ່ຽນຫາກບໍ່ຈຳເປັນ, ດັ່ງນັ້ນຫລາຍຄົນຈຳເປັນຈຳຕ້ອງຂ້າມຂອງເພາະຢູ່ບໍ່ໄດ້. ອີກຂັ້ນຕອນທີ່ສອງຄືປ່ຽນຄວາມເຊື່ອແຕ່ນີ້ເກີດມາເຊື່ອໃນພຣະເຢຊູຄຣິດ ຊຶ່ງເປັນພຣະເຈົ້າທີ່ບໍ່ເຄີຍໄດ້ຍິນ ຫລືວ່າເຄີຍໄດ້ຍິນແລ້ວ ແຕ່ກໍເຂົ້າໃຈວ່າແມ່ນພຣະເຈົ້າຂອງຊາວຜິວຂາວ ດັ່ງນັ້ນຈຶ່ງບໍ່ຍອມເຊື່ອ. ດ້ວຍການປ່ຽນຂັ້ນຕອນຊີວິດຍາກຫລາຍພຽງນີ້ເຮົາທັງຫລາຍຜູ້ເປັນຄຣິສຕຽນແລ້ວມີໜ້າທີ່ສອນໃຫ້ຄົນທັງຫລາຍດ້ວຍຄວາມຮັກ ແລະຄວາມຮູ້ທີ່ມີຢູ່ເພື່ອຊ່ອຍຄົນຫລົງຜິດໃຫ້ເຂົ້າໃຈແລະເພິ່ນຈະປ່ຽນເອງ

### ອະທິບາຍດ້ວຍຄວາມໝັ້ນໃຈ 12:14-18

ໂປໂລວາງແຜນຢ້ຽມຢາມໂກຣິນໂທເປັນເທື່ອທີສາມ, ເທື່ອທີ 1 ໃນກິຈການ 18:1, ເທື່ອທີສອງ 2ໂກຣິນໂທ 2:1 ແລະເທື່ອທີສາມ 2ໂກຣິນໂທ 13:1. ເພິ່ນໄດ້ຂຽນ ຈ.ມ ບອກລ່ວງໜ້າວ່າຈະມາຢາມອີກ ຄ້າຍຄືພໍ່ແມ່ຈະໄປຢາມລູກ

ໄດ້ຂຽນ ຈ.ມ ໄປກ່ອນຕາມສມັຍ, ສຳລັບທຸກວັນນີ້ເຮົາມີຄວາມຄວາມສະດວກຫລາຍຄືໂທຣະສັບໄປໂລດ. ໂປໂລບອກລ່ວງໜ້າເມື່ອເພິ່ນມາເພິ່ນບໍ່ຢາກໃຫ້ເປັນພາຣະຂອງຜູ້ໃດ ໝາຍຄວາມວ່າບໍ່ຕ້ອງເປັນຫ່ວງເຣື່ອງການຢູ່ກິນຂອງເພິ່ນ ແລະເພິ່ນຈະບໍ່ຂໍແຜ່ເງິນເພື່ອສົ່ງເສີມວຽກງານຂອງຂ່າວປະເສີດ, ແຕ່ວ່າໃຫ້ທຸກຄົນໄດ້ເຂົ້າຊຸມນຸມກັນເພື່ອແກ້ໄຂບັນຫາແລະປັບປຸງຄຣິສຕະຈັກໃຫ້ເຂັ້ມແຂງ. ໂປໂລມີຄວາມຮັກຕໍ່ ຄຣິສຕຽນໂກຣິນໂທເໝືອນພໍ່ຮັກລູກ *"ເຫດວ່າທີ່ລູກຈະທ້ອນໂຮມຊັບໄວ້ສຳລັບພໍ່ແມ່ກໍບໍ່ສົມຄວນ ແຕ່ວ່າແມ່ນພໍ່ແມ່ເປັນ ຜູ້ທ້ອນໂຮມຊັບໄວ້ສຳລັບລູກ"* (ຂໍ້14). ຄວາມໝາຍຂອງໂປໂລເພິ່ນໝາຍເຖິງເພິ່ນເປັນພໍ່ຝ່າຍຈິດວິນຍານ (Spiritual father) . ໃນຂໍ້ 15 ຕອນປາຍເປັນຄຳເວົ້າທີ່ໜ້າຄິດ *"ເມື່ອເຮົາຮັກເຈົ້າຫລາຍຂຶ້ນເຖິງພຽງນີ້ພວກເຈົ້າຈະກັບຮັກເຮົານ້ອຍລົງຫລື"*. ເພິ່ນຖາມຄຳຖາມນີ້ດ້ວຍວ່າລາງຄົນໃນຄຣິສຕະຈັກກາຍເປັນຝ່າຍຕໍ່ສູ້ໂປໂລດ້ວຍການຫລົງເຊື່ອຟັງຄຳຫລອກລວງຂອງພວກຕໍ່ຕ້ານ.

ໂປໂລມີຄວາມໜັກໃຈກ່ຽວກັບການເຂົ້າໃຈຜິດຂອງຄຣິສຕຽນໃນເມືອງໂກຣິນໂທ ພວກເຂົາຄິດວ່າອັຄສາວົກຕີໂຕໄດ້ມາແຜ່ເງິນເພື່ອວຽກງານຂ່າວປະເສີດທີ່ກຸງເຢຣູຊາເລັມນັ້ນໄປເຂົ້າຖົງຂອງໂປໂລໝົດ. *ເຮົາໄດ້ໂກງເອົາປໂຍດອັນໃດຈາກພວກເຈົ້າແດ່ ຫລືໃນການທີ່ເຮົາໄດ້ໃຊ້ຄົນເຫລົ່ານັ້ນໄປຫາພວກເຈົ້າ ເຮົາໄດ້ອ້ອນຂໍຕີໂຕໄປແລະໃຊ້ໃຫ້ນ້ອງນັ້ນໄປດ້ວຍ ຕີໂຕໄດ້ໂກງເອົາປໂຍດອັນໃດຈາກພວກເຈົ້າແດ່"* (ຂໍ້ 17-18). ໂປໂລປະຕິເສດການກ່າວຫາຂອງພວກຕໍ່ຕ້ານທີ່ກ່າວຫາວ່າໂປໂລກິນເງິນຖວາຍຂອງພວກເຂົາ ທ່ານຈຶ່ງເວົ້າວ່າເຮົາມີພິຍານ *"ເຮົາທັງສອງບໍ່ໄດ້ດຳເນີນນໍ້າໃຈອັນດຽວກັນຫລື ເຮົາບໍ່ໄດ້ທຽວທາງໃນຮ່ອງຮອຍກັນຫລື (ຂໍ້ 18ຂ).* ໂປໂລອະທິບາຍໃນຈົດໝາຍດ້ວຍຄວາມໝັ້ນໃຈວ່າເຣື່ອງທີ່ເຂົາກ່າວຫານັ້ນບໍ່ເປັນຄວາມຈິງ. ເຫດຜົນອັນນຶ່ງທີ່ໂປໂລຈະໄປຢາມຄຣິສຕຽນໂກຣິນໂທຄັ້ງທີສາມນັ້ນແມ່ນເພິ່ນຈະໄປແກ້ໄຂເຣື່ອງນີ້ເອງ.

**<u>ຫວັງວ່າຈະເກີດຜົນ 12:19-21</u>**

ໂປໂລບອກໃນຈົດໝາຍວ່າຈຸດປະສົງຂອງເພິ່ນມາຢ້ຽມຢາມຄັ້ງນີ້ເພື່ອຈະມາຊຸກຍູ້ເສີມສ້າງໃຫ້ຄຣິສຕຽນໂກຣິນໂທໄດ້ເຂັ້ມແຂງໃນອົງພຣະເຢຊູຄຣິດແທນທີ່ຈະຟັງບຸກຄົນຍຸແຍ່ໃຫ້ແຕກແຍກ, ເພິ່ນຍັງບອກວ່າເພິ່ນເຮັດສິ່ງສາຣະພັດແມ່ນເຮັດເພື່ອພວກພີ່ນ້ອງຈະໄດ້ຈະເຣີນຂຶ້ນ *"ສິ່ງສາຣະພັດທີ່ເຮົາໄດ້ເຮັດນັ້ນ ເຮົາເຮັດເພື່ອໃຫ້ເຈົ້າທັງຫລາຍຈະເຣີນຂຶ້ນ"* (ຂໍ້ 19ຂ). ແຕ່ຜູ້ອື່ນມາເຮັດໃຫ້ພວກທ່ານນ້ອຍລົງ ຫລືນຳພາພວກທ່ານເຮັດຄວາມຜິດບາບເຊັ່ນ *"ຈະມີການຜິດຖຽງກັນ. ການອິດສາກັນ, ການຄຽດແຄ້ນກັນ, ການຄິດໃຫຍ່ໄຝ່ສູງຕໍ່ກັນ, ການນິນທາກັນ, ການຊຸບຊິບສໍ່ສຽດກັນການຂີ້ອວດຈອງຫອງ, ແລະການເກະກະຫວຸ້ນວາຍກັນ"* (ຂໍ້ 20ຂ). ດ້ວຍຄວາມບາບພວກນີ້ແຫລະຈະຊັກຈູງໃຫ້ອອກຈາກໂບດຫລືເຊົາເຊື່ອພຣະເຢຊູຄຣິດ. ໂປໂລມີຄວາມຢ້ານວ່າຈະບໍ່ເຫັນເຂົາຢູ່ໃນໂບດເມື່ອເພິ່ນມາ *"ເພາະເຮົາຄິດຢ້ານວ່າເມື່ອເຮົາມາເຖິງແລ້ວເຮົາອາດຈະບໍ່ເຫັນພວກເຈົ້າເໝືອນຢ່າງທີ່ເຮົາຢາກເຫັນ ແລະພວກເຈົ້າບໍ່ເຫັນເຮົາເໝືອນທີ່ພວກເຈົ້າຢາກເຫັນ"* (ຂໍ້ 20ກ). ຫາກໂປໂລບໍ່ເຫັນເຂົາທີ່ໂບດການຊັກຊວນໃຫ້ເຂົາກັບໃຈຫັນໜີຈາກບາບທີ່ໂປໂລໄດ້ກ່າວໃນຂໍ້ 20 ການຢ້ຽມຢາມຂອງເພິ່ນກໍບໍ່ມີປໂຍດ. ດ້ວຍເຫດນີ້ໂປໂລຈຶ່ງຊັກຊວນໃຫ້ມາພົບກັນທີ່ໂບດ. ຄຣິສຕຽນຫລວງຫລາຍບໍ່ຄ່ອຍມີຊີວິດປ່ຽນແປງຫລັງຈາກເປັນຄຣິສຕຽນແລ້ວກໍຕາມ ພວກເຂົາຍັງດຳເນີນ ຊີວິດເໝືອນແຕ່ກ່ອນ ດ້ວຍມີຫລາຍຄົນຄິດວ່າ ພຣະເຢຊູມາປົດປ່ອຍເຂົາໃນການເປັນຂ້ອຍຂ້າຂອງຄວາມຜິດບາບ ແລ້ວແລະພວກເຂົາຍັງຄິດວ່າມີຊີວິດເປັນອິສຣະແລ້ວ ດັ່ງນັ້ນຢາກເຮັດຫຍັງກໍເຮັດໄດ້ຕາມໃຈມັກ ໂປໂລເຫັນຄຣິສຕຽນໃນເມືອງໂກຣິນໂທຍັງມີການຜິດຖຽງກັນເຊັ່ນນີ້ຢູ່ ເພິ່ນຈຶ່ງຕັ້ງໃຈວ່າຈະມາຊ່ອຍຊູຈິດໃຈເຂົາໃຫ້ເຂັ້ມແຂງໃນອົງພຣະຜູ້ເປັນເຈົ້າ, ແຕ່ໃນຂະນະທີ່ເພິ່ນຍັງບໍ່ທັນມາເຖິງນີ້ເພິ່ນຢ້ານພວກເຂົາຈະເຊົາມາໂບດກ່ອນ *"ເຮົາຢ້ານວ່າເມື່ອເຮົາມາເຖິງແລ້ວ ພຣະເຈົ້າຂອງເຮົາຈະຊົງບັນດານໃຫ້ເຮົາຖ່ອມຕົວລົງລະອາຍໃຈຕໍ່ພວກເຈົ້າທັງຫລາຍ ແລະເຮົາຈະທຸກໂສກເພາະເຫດທີ່ຫລາຍຄົນໄດ້ເຮັດຜິດບາບມາແຕ່ກ່ອນແລ້ວ, ບໍ່ກັບໃຈຈາກການຊົ່ວຮ້າຍ"* (ຂໍ້ 21). ໂປໂລບອກວ່າເພິ່ນຈະມີຄວາມໂສກເສົ້າທີ່ຈະເຫັນຄຣິສຕຽນຫລົງທາງຫ່າງໜີຈາກອົງພຣະຜູ້ເປັນເຈົ້າ ແລ້ວກັບໄປເຊື່ອແລະໄປໃຊ້ຊີວິດ

ເດີມ. ເຣື່ອງນີ້ພຣະເຢຊູຊົງກ່າວຕໍ່ບຸກຄົນທີ່ຊັກຊວນຜູ້ອື່ນຫລົງຜິດວ່າ *"ແຕ່ວິບັດແກ່ຜູ້ທີ່ກໍ່ເຫດໃຫ້ເກີດການຫລົງຜິດນັ້ນ ຖ້າຈະ ເອົາຫີນໂມ້ກ້ອນໃຫຍ່ຜູກຄໍຄົນນັ້ນຈົມນໍ້າທະເລເສັຽ ກໍດີກວ່າຈະເຮັດໃຫ້ຄົນນຶ່ງໃນໝູ່ເລັກນ້ອຍເຫລົ່ານີ້ເກີດການ ຫລົງຜິດ* (ລູກາ 17: 2). ດັ່ງນັ້ນເຮົາຢ່າເປັນຄົນຊັກຊວນຄົນອື່ນໃຫ້ຫລົງຜິດ.

## <u>ຊັກຊວນບໍ່ແມ່ນງ່າຍໆ(13:1-14)</u>

ໂປໂລບໍ່ເອົາເຣື່ອງຜູ້ກໍຄວາມຫວຸ້ນວາຍແຕ່ເພິ່ນກ່າວເຕືອນຄຣິສຕຽນວ່າ *"ຂໍ້ກ່າວຫາໃດໆຕ້ອງມີພຍານສອງຫລືສາມ ປາກຈຶ່ງຈະເຊື່ອຖືໄດ້"* (ຂໍ້ 1). ໃນພຣະທັມພຣະບັນຍັດສອງກ່າວວ່າ *"ພະຍານປາກດຽວຈະຢືນຢັນກ່າວໂທດຜູ້ເຮັດ ຜິດແນວນຶ່ງແນວໃດບໍ່ໄດ້ ຢ່າງນ້ອຍທີ່ສຸດຕ້ອງມີສອງປາກຂຶ້ນໄປຈຶ່ງຈະພິສູດໄດ້ວ່າຄົນເຫລົ່ານັ້ນເຮັດຜິດ ຖ້າຄົນນຶ່ງ ກ່າວຮ້າຍປ້າຍສີອີກຄົນນຶ່ງວ່າເຮັດຜິດ ກໍໃຫ້ທັງສອງຝ່າຍເຂົ້າເຝົ້າພຣະເຈົ້າຕໍ່ໜ້າປະໂລຫິດແລະຜູ້ພິພາກສາຊຶ່ງຢູ່ທີ່ ນັ້ນ "* (ພະບັນຍັດສອງ 19: 1). ດ້ວຍເຫດນີ້ການທີ່ເຂົາກ່າວຫາໂປໂລກໍບໍ່ສາມາດຊະນະເພິ່ນໄດ້ດ້ວຍວ່າມີຕີໂຕແລະ ແລະອີກຜູ້ນຶ່ງທີ່ໄປນຳຕີໂຕເປັນພຍານໃຫ້ກັບໂປໂລ. *"ເຮົາໄດ້ເຕືອນເຈົ້າທັງຫລາຍທີ່ໄດ້ເຮັດຜິດບາບມາແຕ່ກ່ອນ ແລະບັນດາຄົນອື່ນໆນັ້ນດ້ວຍ ແລະບັດນີ້ເມື່ອເຮົາບໍ່ຢູ່ ເຮົາກໍຂໍຕັກເຕືອນເຈົ້າອີກ ເໝືອນເມື່ອເຮົາໄດ້ຢູ່ກັບພວກເຈົ້າເທື່ອ ທີສອງນັ້ນວ່າ ຖ້າເຮົາມາອີກເຮົາຈະບໍ່ຜ່ອນໂທດໃຫ້ຄົນເຫລົ່ານັ້ນ "* (ຂໍ້ 2). ໝາຍຄວາມວ່າໂປໂລໄດ້ເຕືອນ ແລ້ວໃນ ຖ້ຽວສອງທີ່ເພິ່ນມາຢາມ ແລະມາເທື່ອນີ້ຈະບໍ່ຜ່ອນໂທດ ໝາຍຄວາມວ່າເພິ່ນຈະຕ້ອງລົງໂທດຕາມພຣະຄັມພີຕາມແບບ ຢ່າງໃນພຣະຄັມພີເດີມ.

ໃນຂະນະທີ່ໂກຣິນໂທກຳລັງມີຄວາມວຸ້ນວາຍຢູ່ນີ້ໂປໂລໄດ້ສັ່ງໃຫ້ເຂົາພິຈະຣະນາເບິ່ງຕົນເອງວ່າເປັນຄຣິສຕຽນແທ້ຫລື ບໍ່? *"ຈົ່ງພິຈະຣະນາຕົນເອງວ່າພວກເຈົ້າຕັ້ງຢູ່ໃນຄວາມເຊື່ອຫລືບໍ່ ຈົ່ງສັນນະສູດຕົນເອງສາ ເຈົ້າທັງຫລາຍບໍ່ຮູ້ຫລືວ່າ ພຣະເຢຊູຄຣິດຊົງສະຖິດຢູ່ໃນພວກເຈົ້າ ເວັ້ນເສັຍແຕ່ພວກເຈົ້າຈະຜ່ານການສັນນະສູດນັ້ນບໍ່ໄດ້"* (ຂໍ້ 5). ມີລາງຄົນ ຖາມຂ້າພະເຈົ້າວ່າຈະພິຈາຣະນາຫລືສັນນະສູດຕົນເອງໄດ້ແນວໃດ? ໃນພຣະທັມຕອນນີ້ບອກເຮົາວ່າ ຕັ້ງຢູ່ໃນຄວາມ ເຊື່ອຫລືບໍ່? ດັ່ງນັ້ນຫາກເຮົາຕັ້ງຢູ່ໃນຄວາມເຊື່ອເຮົາກໍຈະບໍ່ຟັງຄຳຕົວະຍົວະຫລອກລວງຂອງຜູ້ໃດ ແຕ່ຈະຕັ້ງຢູ່ໃນ ຄວາມເຊື່ອຟັງພຣະເຢຊູຄຣິດເທົ່ານັ້ນແທນທີ່ຈະຟັງສຽງຄົນ. ພຣະເຢຊູຊົງກ່າວວ່າ *"ແກະຂອງເຮົາກໍຟັງສຽງຂອງເຮົາ ແລະເຮົາກໍຮູ້ຈັກຝູງແກະນັ້ນແລະເຂົາຈະຕາມເຮົາມາ "* (ໂຢຮັນ 10:27). ແປວ່າຫາກເຮົາແມ່ນຄຣິສຕຽນແທ້ເຮົາກໍຈະ ຟັງຄວາມສັ່ງສອນຂອງພຣະເຢຊູ ຈຶ່ງຈະຮ້ອງວ່າເປັນຄຣິສຕຽນແທ້ ດ້ວຍເພິ່ນເວົ້າວ່າ *ແລະເຮົາກໍຮູ້ຈັກຝູງແກະນັ້ນ ແລະເຂົາຈະຕາມເຮົາມາ.* ການພິຈາຣະນາຕົນເອງກໍຄື; ຕັ້ງໝັ້ນຄົງໃນຄວາມເຊື່ອ, ປະຕິບັດຕາມຄວາມເຊື່ອ, ຈະເຣີນຂຶ້ນແຕ່ລະວັນ, ບໍ່ເບິ່ງຜູ້ອື່ນໃນທາງລົບ, ຊອກສແວງຫາຄວາມປອງດອງເໝືອນພຣະເຢຊູສະເດັດມາເພື່ອ ຄວາມປອງດອງ, ອ່ານແລະສຶກສາພຣະທັມ, ໃຊ້ເວລາເຂົ້າເຝົ້າພຣະເຈົ້າ ແລະອື່ນໆ ສິ່ງທີ່ກ່າວມານີ້ແຫລະຈະບອກ ໃຫ້ເຮົາຮູ້ວ່າເຮົາເປັນຄຣິສຕຽນແທ້ຫລືບໍ່?.

ໂປໂລມີຄວາມປາຖນາຢ່າງແຮງກ້າຢາກໃຫ້ຄຣິສຕຽນເມືອງໂກຣິນໂທເຕີບໃຫຍ່ຝ່າຍຈິດວິນຍານ ຄ້າຍຄືພໍ່ແລະແມ່ ທີ່ລ້ຽງລູກກໍຫວັງຈະເຫັນລູກໃຫຍ່ທັງດ້ານຮ່າງກາຍແລະສະຕິປັນຍາ. *"ເຮົາຈະບໍ່ໄດ້ກ່າວຄຳເຄັ່ງຄັດໃນການໃຊ້ອຳ ນາດ ທີ່ພຣະຜູ້ເປັນເຈົ້າໄດ້ຊົງມອບໃຫ້ແກ່ເຮົາເພື່ອສ້າງພວກເຈົ້າຂຶ້ນ ບໍ່ໃຊ່ເພື່ອມ້າງເພລົງ "* (ຂໍ້ 13:10). ຄຳເວົ້າຂອງ ໂປໂລເພິ່ນໄດ້ເວົ້າອອກມາຈາກໃຈຈິງຂອງເພິ່ນຄືເພິ່ນມີຄວາມຈິງໃຈຢາກກໍ່ສ້າງໃຫ້ທຸກຄົນເຂັ້ມແຂງ. ເຣື່ອງນີ້ຂ້າພະ ເຈົ້າມີຄວາມແນ່ໃຈວ່າບັນດາອາຈານທຸກຄົນມີໃຈຢາກໃຫ້ສະມາຊິກຂອງຕົນຈະເຣີນຂຶ້ນດ້ວຍນໍ້າໃສໃຈຈິງ ແຕ່ເມື່ອ ສະມາຊິກ ລາງຄົນໄປຟັງສຽງຄົນອື່ນທີ່ໂຈມຕີອາຈານແລ້ວກໍເຮັດໃຫ້ຄົນນັ້ນພັງທະລາຍລົງ ລາງຄົນກໍເຊົາມາໂບດ ລາງຄົນກໍ ຍ້າຍໂບດດ້ວຍຄວາມຂັດເຄືອງໃຈ ຄວາມຂັດເຄືອງໃຈນັ້ນເຮັດໃຫ້ຜູ້ນັ້ນນ້ອຍລົງໃນຄວາມເຊື່ອ. ຄົນທີ່ນ້ອຍ

ລົງໃນ ຄວາມເຊື່ອຫລືຄົນເຊີນມາໂບດເລີຽນີ້ໂປໂລໃຊ້ຄຳວ່ານ້າງເພລິງ ດັ່ງຄຣິສຕຽນໃນໂກຣິນໂທຖືກນ້າງເພລິງ ຫາກບໍ່ຕັ້ງໝັ້ນຄົງ.

ໃນທີ່ສຸດໂປໂລກໍລົງທ້າຍ ຈ.ມ ດ້ວຍຄຳສັ່ງສອນຣຽກເອີ້ນໃຫ້ກັບໃຈໂດຍກ່າວວ່າ *"ຈົ່ງປັບປຸງຕົວໃຫ້ຈະເຣີນຂຶ້ນ, ຈົ່ງຟັງຄຳວອນຂໍຂອງເຮົາ, ຈົ່ງເປັນນ້ຳນຶ່ງໃຈດຽວກັນ, ຈົ່ງຢູ່ຮ່ວມກັນດ້ວຍຄວາມສງົບ ແລະພຣະເຈົ້າຜູ້ຊົງຮັກແລະຊົງປະທານສັນຕິສຸກ ຈະຊົງສະຖິດຢູ່ນຳເຈົ້າທັງຫລາຍ"* ( ຂໍ້ 11). ມີຄວາມໝາຍວ່າ ພວກທ່ານຈົ່ງປັບປຸງແກ້ໄຂບັນຫາຄວາມຂັດແຍ່ງ ແປງໃຫ້ເປັນນ້ຳນຶ່ງໃຈດຽວກັນ ຢ່າຖືພັກຖືພວກ ຫາກພວກທ່ານປັບປຸງເຣື່ອງນີ້ພຣະເຈົ້າກໍຈະສະຖິດຢູ່ກັບທ່ານທັງຫລາຍ. ໂປໂລຂໍໃຫ້ຄຣິສຕຽນໂກຣິນໂທກັບໃຈນີ້ບໍ່ແມ່ນງ່າຍໆ ເພິ່ນເວົ້າແລ້ວກໍເວົ້າອີກ ຈົນເພິ່ນເປັນທຸກໃຈ. ດັ່ງນັ້ນເມື່ອເຮົາແກ້ໄຂບັນຫາໃນໂບດເຮົາຢ່າງລຳບາກແລ້ວທໍ້ໃຈ ຈົ່ງຄຶດເຖິງໂປໂລເພິ່ນກໍຍິ່ງຍາກກວ່າເຮົາ.

<u>ຄຳຖາມ:</u>

1. ຄວາມສັມພັນຂອງທ່ານແລະອາຈານຂອງທ່ານຢູ່ໃນລັກສະນະໃດໃນເວລານີ້?

2. ຄວາມສັມພັນຂອງຄຣິສຕຽນໂກຣິນໂທ ກັບອາຈານໂປໂລເປັນແນວໃດ?

3. ຫາກເຮົາມີຄວາມຂັດເຄືອງໃຈກັບອາຈານເໝືອນຄຣິສຕຽນໂກຣິນໂທຂັດໃຈກັບໂປໂລເຮົາຈະເປັນແນວໃດ?

4. ຫາກຕ້ອງການຄົນມາໂບດເຮົາຈະເວົ້າເຣື່ອງໂບດຂອງເຮົາແລະເຣື່ອງຂອງອາຈານໃຫ້ຄົນເຊື່ອໃຫມ່ແລະແຂກຟັງແນວໃດ?
5. ໃນຣະວ່າງກຸ່ມຕໍ່ຕ້ານໂປໂລແລະໂປໂລທ່ານຄຶດວ່າທ່ານຈະຢູ່ຝ່າຍໃດ? ເປັນຫຍັງເຂົາຈຶ່ງຕໍ່ຕ້ານໂປໂລ?

6. ສຸດທ້າຍໂປໂລໄດ້ຂໍຮ້ອງເຂົາຢ່າງໃດເພື່ອພຣະເຈົ້າຈະສະຖິດຢູ່ນຳ?